ນິທານຂຸນບໍຣົມຣາຊາທິຣາຊ

ສະບັບທີ່ ໑

ປວັຕສາຕຣ໌ລາວ ສະບັບເດີມ

ຣວບຣວມໂດຍ,

ສີລາ ວີຣະວົງສ໌ ແລະ ບວບ ອຸເທບສັກດາ

ຈັດພິມແຜ່ພາຍ ດ້ວຍທຶນຂອງ

ພຣະທາຕຫລວງ

ເພື່ອປະຕິສັງຂອນ ພຣະທາຕຫລວງ

ພິມເທື່ອທີ່ ໑

ຈຳນວນ ໑໐໐໐ ສະບັບ

ກະຊວງທັມມະການ ວັນທີ່ ໓ ພຶສຈິກາ ໒໕໑໐

ຄຳຊີ້ແຈງ

ຫນັງສື ນິທານຂຸນບໍຣົມຣາຊາທິຣາຊ ເປັນຫນັງສືປວັດສາດຣ໌ລາວສບັບດັ້ງເດີມ ຫນັງສືພົງສາວະດານລາວທຸກສບັບທີ່ມີຜູ້ແຕ່ງຂຶ້ນເປັນພາສາຝຣັ່ງເສດກໍດີ ພາສາໄທກໍດີ ຫລືພາສາລາວເອງກໍດີ ແມ່ນແຕ່ເກັບເອົາຂໍ້ຄວາມຈາກຫນັງສືນິທານຂຸນບໍຣົມນີ້ມາ ເປັນຫລັກສາກັນ ແຕ່ວ່າຫນັງສືນິທານຂຸນບໍຣົມນີ້ ສັງເກດເຫັນວ່າມີຜູ້ແຕ່ງສືບ ຕໍ່ກັນມາແຕ່ບູຣານຫລາຍເທື່ອ ກະເບິ່ງວ່າຢ່າງຫນ້ອຍກໍຄົງມີມາແລ້ວເຖິງ ໕ ເທື່ອ ຄື:

໑– ເທື່ອທີ່ນຶ່ງ ຫລື ສບັບທີ ໑: ແຕ່ງໃນສມັຍຂອງພຣະເຈົ້າວິຊຸລຣາຊ ເມື່ອປະມານ ພ.ສ. 2026 (ຄ.ສ, 1503) ຜູ້ແຕ່ງ ແມ່ນພຣະມະຫາເທພຫລວງ ກັບພຣະມະຫາມຸງຄຸນສິທທິ ວັດວິຊຸລມະຫາວິຫານ ພ້ອມດ້ວຍພຣະເຈົ້າວິຊຸລຣາຊ

ເອງ ແລະເສນາຂ້າຣາຊກາບ ດັ່ງມີຂໍ້ຄວາມກ່າວໄວ້ໃນຕອນ ສຸດທ້າຍ ຂອງນິທານຂຸນບໍຣົມພູກນີ້ວ່າ

"ຕໍານານຂຸນບໍຣົມອັນນີ້ ພຣະມະຫາເທພຫລວງເຈົ້າ ອັນເປັນທັມມະເສນາເຈົ້າຕົນພີ່ປູ່ວັດວິຊູລ ທັງມະຫາມຸງຄຸນສິທ ທີເຈົ້າ ຕົນເປັນທັມມະເສນາເຈົ້າຕົນນ້ອງ ທັງເຈົ້າແຜ່ນດິນ ແລະເສນາທັງຫລາຍ ພ້ອມກັນແປງໄວ້ໃຫ້ເປັນໄປ ຕາບຕໍ່ ເທົ້າ 5 ພັນວັສສາ" ດັ່ງນີ້.

ຫນັງສືນິທານຂຸນບໍຣົມ ສບັບພຣະມະຫາເທພຫລວງ ແຕ່ງນີ້ ມີຂໍ້ຄວາມສຸດລົງພຽງສມັຍຂອງພຣະເຈົ້າວິຊູລຣາຊ ນັ້ນເອງ (ຄືສບັບທີ່ພິມນີ້)

໒- ເທື່ອທີສອງ ຫລືສະບັບທີ ໒: ຄົງແຕ່ງໃນສມັຍ ຂອງພຣະບາແສນສຸຣິນ ເປັນເຈົ້າແຜ່ນດິນໃນນະຄອນວຽງຈັນ ລຸນຫລັງພຣະເຈົ້າໄຊບະເຊດຖາທິຣາຊ ສວັຣຄົຕແລ້ວ (ປະ ມານ ພ.ສ. ໒໑໑໐) ຜູ່ແຕ່ງແມ່ນພຣະອະຣິບະວັງໂສ ຫນັງ ສືສບັບນີ້ ມີຂໍ້ຄວາມສຸດລົງໃນສມັຍຂອງພຣະບາແສນສຸຣິນທ໌ ເປັນເຈົ້າແຜ່ນດິນນັ້ນເອງ ດັ່ງມີກ່າວປູ່ໃນຕອນສຸດທ້າຍ ຂອງ

ຫນັງສືຜູກນີ້ວ່າ

"ທັງຫລາຍ ຈຶ່ງໃຫ້ພຣະຍາແສນຮັກສາເມືອງໄດ້ປີນຶ່ງ ພຣະຍາແສນຈະເປັນເຈົ້າແຜ່ນດິນ ພຣະຍາຈັນດັດຄ້ານ ພຣະຍາ:ແສນຈຶ່ງ ຂ້າພຣະຍາຈັນເສັງລວດເປັນເຈົ້າແຜ່ນດິນຫັ້ນແລະ ຫນັງສືຊຸບບໍຣິນຣາຊາທິຣາຊເຈົ້າຜູ່ມີບຸນ ຫາກໄດ້ແຕ້ມໄດ້ຂຽນ ໄວ້ສືບ ໆ ມາຫລາຍຊາດຫລາຍເຊັ່ນ   ຕັ້ງແຕ່ນີ້ເມືອຫນ້ານັກ ປາດເຈົ້າທັງຫລາຍ ຜູ່ໃດມັກໄດ້ຕື່ມໄດ້ແຖມ ສືບຕໍ່ແຕ່ນີ້ໄປໃຫ້ ກວ້າງໃຫ້ຂວາງ ກໍຈຶ່ງໃຫ້ຕື່ມໃຫ້ແປງ ຕາມແຕ່ຫູຮູ້ຕາເຫັນ ນັ້ນເຖິງ ແຜ່ນດິນນີ້ບໍ່ມີຕຳນານ ໃຫ້ແປງສືບຕໍ່ໄປເຖິງ" ດັ່ງນີ້.

ຂໍ້ຄວາມໃນປໂຍກສຸດທ້າຍທີ່ວ່າ "ແຜ່ນດິນນີ້ບໍ່ມີຕຳນານ ໃຫ້ແປງສືບຕໍ່ໄປເຖິງ" ນີ້ ສະແດງວ່າແມ່ນສມັຍຂອງພຣະຍາ ແສນສຸຣິນທົນນັ້ນເອງ ແຕ່ພຣະອະຣິຍະວັງໂສ ຜູ່ແຕ່ງຕຳນານ ບໍ່ຫານເອົາຄວາມເປັນໄປຂອງບ້ານເມືອງໃນສມັຍນັ້ນໄດ້ ເພາະ ຍັງເປັນປັດຈຸບັນຢູ່ ທັງຢ້ານຈະເປັນການຜິດພຣະຣາຊອາຊຍາ ດ້ວຍ ຈຶ່ງໄດ້ກ່າວໄວ້ຢ່າງນັ້ນ

໓- ເທື່ອທີສາມ ຫລື ສບັບທີ ໓: ມີຂໍ້ຄວາມມາສຸດ

ລາງ ໃນສມັຍຂອງພຣະຫນ່ອມແກ້ວຂຶ້ນສເວີຽຣາຊສົມບັດ ເມື່ອຈຸລສັກຣາຊ ໙໘໙ (ພ.ສ. ໒໑໗໐) ຜູ່ແຕ່ງຈະແມ່ນໃຜບໍ່ຮູ້.

໔- ເຫື່ອທີສີ່ ຫລື ສບັບທີ ໔ ຄົງແຕ່ງຂຶ້ນໃນສມັຍຂອງພຣະໄຊຍອົງຄ໌ເວ້ (ພະໄຊຍເຊດຖາທິຣາຊທີ ໒) ໃນລະຫວ່າງຈຸລສັກຣາຊ ໑໐໖໗ ໑໐໗໐ (ພ.ສ. ໒໒໔໘ ໒໒໕໑) ຜູ່ແຕ່ງຈະແມ່ນໃຜຍັງບໍ່ຄັກແນ່ ຫລືອາດຈະແມ່ນເພັ້ງສືສຸທາຊີບາລັງການ ຜູ່ຮັກສາພຣະບາງກໍໄດ້ ເພາະມີຂໍ້ຄວາມກ່າວໄວ້ໃນຕອນທ້າຍຂອງຫນັງສືສະບັບນີ້ວ່າ

" ບັດນີ້ເຮົາຍັງມັກໃຫ້ແປງຕຳນານ ເມືອງທັງ ໕ ຫົວເສິກທັງເມືອງກອງ (ພອງ) ເມືອງພົວທັງຕຳນານເມືອງແສນເມືອງນະຄອນ ທັງດິນແທ່ນ ດິນຊຽງ ຊຽງກາງ ແດນດິນແລະຂອບດ່ານທັງມວນ ໃຫ້ແຈ້ງດີຫລີແລ ຜູ່ໃດຈັກເປັນຂື່ເມືອງຕາເມືອງ ເປັນເອກເປັນທ້າຍເມືອງໃຫ້ຫລິງຫາແຕ່ເຄົ້າ ເຫົາເຖົ້າປາຍແລ້ວແລະແປງໄວ້ເຖິງ ສັກຣາຊໄດ້ ຝີກ ຕົວ(໑໐໖໗) ເດືອນສາມເພັງວັນ ໔ ຍາມແຖໃກ້ທ່ຽງສັພພຸ້ນບູ ພຣະບາງເຈົ້າສເດັດຈາກວິຊຸລມະຫາລະຄານ ໄປເຂົ້າເຮືອທ່າເມືອງຮອດ

ຈັນທະບຸຣີ ເດືອນ ໔ ແຮມ ໔ ຄ່ຳວັນອັງຄານ ຍາມທ່ຽງວັນ ຣາທນາເມືອສູ່ວັດປ່າສັກຫລວງ ສັກຣາຊ ໗໐ (ຈຸລສັກຣາຊ ໑໐໗໐) ເດືອນ ໘ ຂຶ້ນ ໔ ຄ່ຳວັນເສົາຍາມກອງງາຍ ມື້ກັດ ເຮົ້າພຣະເກສາທາດເຈົ້າສເດັດມາເມຕຕາ ເພັ່ງສີສຸທາຊີບາ ລັງການຜົວເມັຽ ປູ່ໃນຖິງເປ້ງ ອັນເອົາເມືອໄວ້ເທິງຫົວນອນ ບ່ອນຮັກສາພຣະບາງຢູ່ວັດປ່າສັກຫລວງ ເພັ່ງສີສຸທາ ໄຂຖົງ ເອົາເງິນຊື້ຂັນທອງ ບົກຈົວເປັນພຣະຈຶ່ງເຫັນ ແລ້ວເອົາເມືອ ຊ້ອງຫນ້າອັດຄະວໍຣະຣາຊຄຣູເຈົ້າໂຮງຄຳ ຍາມກອງແລງຟ້າ ລັ່ນເທິງຫົວບານເບິ່ງ ຈຶ່ງເອົາອູບແກ້ວໃສ່ເກສາທາດ ເອົາຄອບ ແກ້ວໃສ່ ແລະຖ້ວຍແກ້ວໃສ່ອີກ ຍາມຄ່ຳຈຶ່ງນຳເມືອໄວ້ທີ່ພຣະ ບາງ ໄດ້ສອງຄືນ ຈຶ່ງນຳໄປຫາຣາຊຄຣູເຈົ້າທີ່ວັດຈັນ ໄດ້ສອງ ຄືນຣາຊຄຣູເຈົ້າວັດຈັນ ແລະເພັ່ງສີສຸທາ ຈຶ່ງນຳເມືອຖວາຍ ພຣະໄຊຍະເຊດຖາທັມມິກະຣາຊາທີ່ຣາຊເຈົ້າ ພຣະອົງສັກກາ ຣະ ແລ້ວໃຫ້ນຳຄືນມາໄວ້ນຳພຣະບາງ ແລ້ວແຜ່ຄຳໄວ້ ໆ ບາດບາກເບັ້ຽ ໑ ດີຮູບພຣະເຈດີໃສ່ເກສາທາດໄວ້ກັບພຣະ ບາງເຈົ້າຫັ້ນແລ" ດັ່ງນີ້

໕. ເທື່ອທີ່ຫ້າ ຫລື ສບັບທີ່ ໕ ກ່າວຂໍ້ຄວາມມາແຕ່ລື້ນ ແລ້ວມາສຸດລົງໃນສມັຍຂອງພຣະເຈົ້າມຫາຕຸຣາຊ ແຫ່ງນະຄອນຫລວງພຣະບາງ ອັນເປັນສມັຍທີ່ອານາຈັກລາວທັງ ປ ເສັຽໃຫ້ແກ່ປະເທດໄທແລ້ວ ຜູ່ແຕ່ງຫນັງສືນິທານຂຸນບໍຣົມສະບັບທີ ໕ ແມ່ນຫົວພັນ ເມືອງບູນ ແຕ່ງຢູ່ທ່າເມືອງເພັຊໄຊ (ພິໄຊ) ເມື່ອຈຸລສັກຣາຊໄດ້ ໑໘ ຕົວ(ຈຸລສັກຣາຊໄດ້ ໑໒໑໘) ດັ່ງມີຂໍ້ຄວາມກ່າວໄວ້ໃນຕອນທ້າຍຂອງຫນັງສືຜູກນີ້ວ່າດັ່ງນີ້

" ສັກຣາຊໄດ້ ໑໘ ຕົວປີເມີງໄຄ້ ເດືອນຍີ ອອກໃຫມ່ ໒ ຄ່ຳຫົວພັນເມືອງບູນ ລົຈນາໃນທ່າເມືອງເພັຊໄຊໄວ້ກັບໂລກແລ "

ຕໍ່ຈາກທ້າຍຂໍ້ຄວາມນີ້ມາອີກ ກໍມີຈົດຫມາຍເຫດຫຍໍ້ບອກເຫດການຕັ້ງຕໍ່ສມັຍຂອງພຣະເຈົ້າສຸຣິຍະ ວົງສາທັມມິກະຣາຊສວັຣຄົດ ປີຈຸລສັກຣາຊ ໑໐໕໗ ເປັນຕົ້ນມາ ຈົນເຖິງຈຸລສັກຣາຊ ໑໒໐໙ ເຊິ່ງໃນປີນີ້ວ່າ " ໄທ ລາວ ຍວນຂຶ້ນຕີເມືອງພວນໄດ້ອາດຍາເມືອງພວນ ໄປ ຢູ່ ບາງ ກອກ " ດັ່ງນີ້.

ຫນັງສືນິທານຂຸນບໍຣົມທັງ ໕ ສະບັບທີ່ກ່າວມານີ້ ສະບັບ

ທີ່ພຣະມະຫາເທພຫລວງແຕ່ງ ອັນເປນສະບັບເດີມຫລືສະບັບທີ່ ໑ ແລະສະບັບຂອງພຣະອະຣິຍະວົງໄສແຕ່ງ ອັນເປັນສະບັບທີ່ ໒ ນັ້ນມີຂໍ້ຄວາມຕ່າງຈາກສະບັບອື່ນ ໆ ຫລາຍ ໃນຕອນຂອງພຣະເຈົ້າຟ້າງຸ່ມ ດັ່ງຈະຂໍນຳມາກ່າວສູ່ຟັງຈັກສອງສາມຕອນຕໍ່ໄປນີ້.

໑– ຕອນພຣະເຈົ້າຟ້າງຸ່ມຖືກຂັບໜີ ກ່າວໄວ້ດັ່ງນີ້.; ເຂົາຈິ່ງເອົາຍາຫລວງໂງ່ມ ມາເປັນເຈົ້າແຜ່ນດິນມີລູກ ໙ ຄົນ ຜູ້ຍິງ ໔ ລູກ ໙ ຄົນນີ້ເຮົາບໍ່ຈາກ່ອນແລ ເຮົາທໍ່ຈັກຈາຜູ້ກິນເມືອງແທນຫລວງໂງ່ມ ແລເຂົາຈິ່ງເອົາຍາຄຳຮຽວ (ທີ່ຈິ່ງແມ່ນຟ້າງົ້ວ) ຜູ້ເປນອ້າຍມາເປັນເຈົ້າແຜ່ນດິນ ຍາຄຳຮຽວມີລູກ ໔ ຄົນ ຜູ້ຍິງສອງຜູ້ຊາຍສອງ ຜູ້ນ້ອງຫລ້ານັ້ນມີແຂ້ວອອກ ມິມີ ເຫລັ້ນແຕ່ໃນທອງອອກມາ ເສນາທັງຫລາຍວ່າເຂ້ດຂວາງ ຈັກແພ້ບ້ານແພ້ເມືອງວ່າ ດັ່ງນັ້ນ ເຂົາຈິ່ງເອົາໃສ່ແພໄຫລເສັ້ງ ເອົາຂ້ອຍສ້ຽງ ທັງນວນໃສ່ແພໄປດອນ " ດັ່ງນີ້.

໒. ຕອນຈະຄືນມາຈາກເມືອງ ຂເມນ ກ່າວໄວ້ວ່າ "ນັບແຕ່ໄຫລບໍ່ມາໄດ້ ໓ ປີ ໄຫລເສັ້ງປີນຶ່ງ ຈຶ່ງມາຮອດທ່າພຣະ

ສມັບພຣະລ້ຽງໄວ້ສາມປີ ພຣະບາບະຄອບຈິ່ງເອົາເມືອລ້ຽງໄດ້ ໗ ປີທັງມວບເປັນ ໑໔ ປີ ພຣະບາບະຄອບຈິ່ງໃຫ້ລູກລາວໄດ້ ໖ ປີ ພຣະບາບະຄອບຈິ່ງເອົາຫມໍ່ຫູຣາທັງມວບ ມາຣູຊາຕາແລະບັກຂັດຕະອຶກເມືອງລ້ານຊ້າງ ຫມໍ່ຈິ່ງທວບວ່າ ພໍ່ເຈົ້ານີ້ະແມ່ເຈົ້ານີ້ຕາບແລ້ວ ເຂົາຈິ່ງເອົາອາວເຈົ້າ ເປັນເຈົ້າແຜ່ນດິນທີ່ຊຽງດົງຊຽງທອງແທນ ແລພຣະບາບະຄຍະຫລວງ ຈິ່ງວ່າເຮົາຈັກແຕ່ງຣິພົບເມືອຄ້າດົງປູກແປງ ບັງຈັກໄດ້ເປັນເຈົ້າແຜ່ນດິນທີ່ຊຽງທອງບໍ່ຈາ ຫມໍ່ທັງຫລາຍຈິ່ງວ່າປ່າວ່າໄດ້ແຕ່ຊຽງດົງຊຽງທອງເຖິ້ນ ບັງຈັ ໄດ້ເມືອງໄບທິບາ ອະບຸທບາ ທັງເມືອງພິງຊຽງໃຫມ່ ທັງເມືອງລີ້ເມືອງເຂິບ ທັງເມືອງຈຸລນີຟ້າກບ້າແທນມາພີ້ " ດັ່ງນີ້.

ປີ ຕອບມາເຖິງຫລວງພຣະບາງ ກ່າວໄວ້ວ່າ" ແຕນັ້ນພຣະບາຟ້າລ່ອງມາຣອດສິບອູທັ້ນ ເຈົ້າຟ້າຄ່າຣຽວຜູ່ເປັນອາວນ້ອງພໍ່ພຣະບາຟ້າ ພໍ່ພຣະບາຟ້າວາບເສັຽເຂົາຈິ່ງເອົາມັນເປັນເຈົ້າແຜ່ນດິນ ແທນມັນມີລູກບິງສອງຄົນ ລູກຊາບບໍ່ມີມັນກໍຮູ້ວ່າພຣະບາຟ້າລ່ອງມາຣອດສິບອູມັນ ກໍ ປ້ານພຣະບາຟ້າ

ຂ້າ ເຂົາທັງສອງຜົວເມັຽລວດກິນສານຕາຍທັງສອງ ຫັ້ນແລ"
ດັ້ງນີ້

໔ ຕອນຂຶ້ນໄປຕີເມືອງທາງເໜືອ ກ່າວໄວ້ວ່າ "ພຣະຍາຟ້າຂຶ້ນເມືອຮອດທ່າຫິວເຮືອເມືອງ ເຫລືອກຫັ້ນ ຍັງມີລູກອ້າຍຂີ້ຫຸດຜູ້ນຶ່ງ ມັນເປັນລູກນາງແກ້ວມະຫາຣີ ຮຽກຊື່ທ້າວອູລອງ ມັນເປັນຫລານເຈົ້າຟ້າຄຳຮຽວ ມັນຈຶ່ງອອກມາໄຫວ້ພຣະຍາຟ້າ ທີ່ທ່າສວງຄໍ່ຄຳຫັ້ນທ້າວອູລອງຈຶ່ງວ່າ ຂ້ຽນີ້ເປັນລູກນາງແກ້ວມະຫາຣີ ແມ່ຂ້ອຍນີ້ ເປັນລູກຟ້າຄຳຮຽວ ກໍຫາກເປັນວິງສາ ແຫ່ງເຈົ້າກູດາຍ" ດັ້ງນີ້

ສວນໜັງສືນິທານຂຸນບໍຣົມຜູກອື່ນໆ ນອກຈາກ ໒ ຜູກທີ່ກ່າວມາແລ້ວນັ້ນມີຂໍ້ຄວາມຕ່າງຈາກ ໒ ຜູກນີ້ຫລາຍໂດຍສະເພາະແມ່ນສບັບທີ່ຫິວພັນເມືອງນຸນ ຣິຈນາໃນຜູກນີ້ ມີກ່າວໄວ້ດັ່ງນີ້.

໑- ຕອນພະເຈົ້າຟ້າງຸ່ມຖືກຂັບໜີ ກ່າວໄວ້ວ່າ "ແຕ່ນັ້ນພຣະຍາລັງມີລູກຊາຽຜູ້ນຶ່ງໃສ່ຊື່ວ່າຄຳຜິງ ເມື່ອພຣະຍາລັງກິນເມືອງປາງນັ້ນ ບໍ່ປະກອບຊອບທັມ ເຂົາລວດປົງພຣະຍາລັງ

ເສັຽ ເອົາໄປໃສ່ເທັບໄວ້ທີ່ຊຽງແພດສິບອູບ້ານຄົກຫັ້ນແລ ເຂົາ
ກໍເອົາຄຳຜົງຜູ້ເປັນລູກແຫນເລົາແລ ລວດໃສ່ຊື່ວ່າ ພຣະຍາຄຳ
ຜົງເລົາແລ ເມື່ອນັ້ນພຣະຍາຄຳຜົງມີລູກຊາຍຜູ້ນຶ່ງ ເມື່ອຈະ
ໃສ່ຊື່ລູກຂອງຕົນ ຈຶ່ງໃຫ້ທຳຫລວງ ເມື່ອເລົາແກ່ພຣະຍາລັງວ່າ
ຫລາຍພຣະຍາເຈົ້າເກີດມາແລ້ວ ຈັກໃສ່ຊື່ວ່າສິ່ງໃດ ລູກພຣະ
ຍາເຈົ້າໃຫ້ເມືອຂ້ອຍມາຖາມພຣະຍາເຈົ້າດາຍ

ຍາມນັ້ນ ພຣະຍາລັງຕົນນັ້ນກໍຄຽດແກ່ເຂົາ ເຫດວ່າເຂົາ
ປົງຕົນເສັຽດັ່ງນັ້ນ ພຣະຍາລັງລວດບໍ່ປາກສັກຄຳ ທີ່ນັ້ນ ເຂົາ
ຈັກໜີ ຈຶ່ງຊ້ຳຖາມພຣະຍາລັງອີກວ່າ ພຣະຍາເຈົ້າຈັກໃສ່ຊື່
ຫລາຍພຣະຍາເຈົ້າສິ່ງໃດແລຊານ ຍາມນັ້ນພຣະຍາລັງຈຶ່ງວ່າ
ສູວ່າກູບໍ່ດີຣະກູໜີຈາກເມືອງແລ້ວ ບັດນີ້ສູເລົາມາຖາມກູສັງ
ຈາ ປຽວວ່າຜີຟ້າບໍ່ສູ່ສູນາ ພຣະຍາລັງວ່າທໍ່ນັ້ນແລ້ວ ຂ້າຜູ້ໃຊ້
ກໍຮູ້ວ່າພຣະຍາລັງຄຽດໃຫ້ແກ່ເຂົາ ຂ້າກໍລວດໜີມາໄຫວ້ພຣະ
ຍາຄຳຜົງວ່າ ພຣະຍາເຈົ້າຄຽດກ່າວວ່າ ປຽວວ່າຜີຟ້າບໍ່ສຸ້ສູນາ
ວ່າດັ່ງນັ້ນດາຍ

ຍາມນັ້ນ ພຣະຍາຄຳຜົງວ່າ ພໍ່ພຣະຍາກໍຫາກວ່າ ຜີຟ້າ

ກໍວ່າຜີຟ້າຫນເຖິ້ນ ແຕ່ນັ້ນຄົນທັງຫລາຍ ລວດຮຽກຊື່ກຸມາຣຜູ່ນັ້ນວ່າ ທ້າວຜີຟ້າ ເພື່ອອັນຫັ້ນແລ ເມື່ອນັ້ນທ້າວຜີຟ້າກ້າສູງມາແລ້ວ ກໍມີລູກຊາຍ ໖ ຄົນ ຜູ່ນຶ່ງຊື່ວ່າຟ້າງຸ່ມ ຜູ່ນຶ່ງຊື່ວ່າຟ້າງ້ຽວ ຜູ່ນຶ່ງຊື່ວ່າຟ້ງຍານ ຜູ້ນຶ່ງຊື່ວ່າຄ້ານ ຜູ້ນຶ່ງຊື່ວ່າຟ້າກໍາ ຜູ່ນຶ່ງຊື່ວ່າຟ້າຂຽວ

ເມື່ອນັ້ນ ທ້າວຜີຟ້າກໍລັກຫລິ້ນຊູ້ດອມນາງ ສນົມພໍ່ຕົນຊື່ວ່າພຣະຍາຄໍາຜົງຫັ້ນແລ ພຣະຍາຄໍາຜົງ ຈຶ່ງຂັບຜີຟ້າຫນີຈາກເມືອງລາວທັງມວນບໍ່ໃຫ້ຢູ່ໃຫ້ເຊົາທີ່ໃດສັກແຫ່ງ ດັ່ງນັ້ນຜີຟ້າລວດບໍ່ໄດ້ເປັນພຣະຍາແທນພໍ່ ເພື່ອອັນແລ ດ້ວຍແທ້ຕໍານານຜີຟ້າພໍ່ລູກຕົກເມືອງ ເຮົາບັງຈັກກ່າວພາຍຫນ້າພຸ້ນກວ້າງນັກແລ

໖. ໃນຫນັງສືຂຸນບໍຣົມ ອັນເປັນຕໍານານເມືອງພວນກ່າວວ່າ "ເມື່ອນັ້ນພຣະຍາຄໍາຜົງມີລູກຊາຍຜູ່ນຶ່ງ ຊື່ວ່າຜີຟ້າ ໆ ນັ້ນເລົາມີລູກຊາຍຜູ້ນຶ່ງຊື່ວ່າ ຟ້າງຸມ ເມື່ອນັ້ນຜີຟ້າຈຶ່ງຄົບເມັຽພໍ່ມັນຜູ້ຊື່ວ່ານາງຂອມພຣະຍາຜູ່ພໍ່ ຈຶ່ງຄຽດວ່າຈັກຂ້າເສັຽ ວ່າອັນຫມື່ນແສນທັງຫລາຍຈຶ່ງຫ້າມ ໃຫ້ຂັບຫນີຈາກເມືອງຈຶ່ງໃຫ້ທ່າໄຊ ຯລຯ ໄປສົ່ງຜີຟ້າ ທັງຟ້າງຸ່ມເສັຽກາຍລິຜີ ຯລຯ

໓. ຕອນກັບຄືນກ່າວໄວ້ດັ່ງນີ້: ຟ້າງຸ່ມຈຶ່ງຂີ່ຊ້າງແສນບາງຄອບ ຫມື່ນໜານຂີ່ຊ້າງໄຕພົນແສນ ເມືອທາງເມືອງສວບລ່ອງເມືອນ້ຳຄານ ພີ່ຟ້າຈຶ່ງເມືອທາງບ້າອູ ບ້າເຊືອງ ຈຶ່ງໃຫ້ເຖົ້າພັນພານໄປສຶງຫັ້ນແລ ເມື່ອນັ້ນ ພຣະຍາຄຳຜົງຮູ້ຂ່າວລູກຫລານດີນຈັກເມືອຊີງເມືອງດັ່ງນັ້ນ ກໍແຕ່ງລີພົນມາຕ້ອນຮັບແຕ່ແດນເມືອງ ຕັ້ງຫລາຍເຜົ່າຫລາຍທີ ກໍບໍ່ແພ້ເຂົາລວດໃລ່ເມືອຈິນເມືອງຊະວາ ເມື່ອນັ້ນພຣະຍາຄຳຜົງ ດູຮ້າງຫາກຜູກຄໍຕາຍໃນສ້ວມອາບນ້ຳ ຫັ້ນແລ ເມື່ອນັ້ນ ເສນາທັງຫລາຍ ຮູ້ວ່າພຣະຍາຄຳຜົງຫາກຜູກຄໍຕາຍດັ່ງນັ້ນ ເຂົາຈຶ່ງໄປເລົ້າແກ່ຟ້າງຸ່ມ ແລ້ວອາທນາມາແທນປູ່ ໃນຊຽງທອງຫັ້ນແລ ເມື່ອນັ້ນພີ່ຟ້າມາທາງເຫນືອໄປ່ທັນຮອດ ຟ້າງຸ່ມເລົ້າໃຫ້ໄປຕ້ອນຂ້າພໍ່ມັນເສັງ ທີ່ຫ້ວຍລີບສານນ້ຳ ເຊືອງຫັ້ນແລ ດັ່ງນີ້

ຫນັງສືນິທານຂຸນບໍຣົມ ລບັບຫົວພັນເມືອງບຸຣີຈນາ ແລະລບັບດານານເມືອງພວນ ທີ່ກ່າວວ່າ..." ພຣະເຈົ້າຟ້າງຸ່ມຖືກຂັບຫນີ ບ້ອນຂຸນພີ່ຟ້າຜູ່ເປັນພໍ່ ຫລີ້ນເມັຽນ້ອຍຂອງພໍ່ແລະຕອນກັບຄືນມາຈາກເມືອງຂເມຣວ່າ ຟ້າງຸ່ມໃຫ້ໄປລັດຂ້າພໍ່ເສັງ "ນີ້ ເຫັນວ່າບໍ່ສົມເຫດສົມຜົນເລີຍ ແລະຫນັງສືພົງສາວະດານລາວທີ່ຝຣັ່ງແຕ່ງໃຫ້ນັກຮຽນຮຽນແຕ່ກ່ອນໆ ນັ້ນ ຫລືສະ

ບັບທີ່ຄົນອື່ນຂຽນພາກິດວ່າ ໄດ້ແຕ່ງເອົາຕາມສະບັບທີ່ພັນ
ເມືອງບຸນຣິຈນານີ້ເອງ ດັ່ງນັ້ນຈຶ່ງມີຂໍ້ຄວາມຕ່າງຈາກສະບັບທີ່
ຂ້າພະເຈົ້າແຕ່ງເປັນອັນມາກໃນຕອນນີ້ ແລະຍ້ອນເຫດອັນນີ້
ຂ້າພະເຈົ້າຈຶ່ງໄດ້ພຍາຍາມກ່າຍເອົານິທານຂຸນບໍຣົມທຸກໆສະ
ບັບມາພິມໄວ້ຕາມຂໍ້ຄວາມເດີມ ທັງນີ້ກໍຍ້ອນມີຄວາມປະສົງ
ເປັນ ໒ ປະການຄື

໑ ປະສົງຈະຮັກສາຫນັງສືເກົ່າ ແລະຄວາມເວົ້າຂອງຄົນບູຮານໄວ້ໃຫ້ຄົນພາຍຊ້ອນໄດ້ຮູ້ໄດ້ຟັງ

໒ ປະສົງຈະໃຫ້ເປັນຫລັກຄົ້ນຄວ້າ ທຽບຄຽງຂອງນັກແຕ່ງປວັດສາດລາວວ່າ ສະບັບໃດຖືກແທ້ແລະຄວນຈະຖືເອົາຕາມສະບັບໃດເປັນຫລັກ ສະເພາະສະບັບນີ້ທ່ານອ່ານຢູ່ນີ້ແມ່ນສະບັບເດີມທີ່ພຣະມະຫາ ເທພຫລວງແຕ່ງ ສະບັບອື່ນໆຈະໄດ້ຈັດພິມເປັນເຫລັ້ມນຶ່ງອີກຕ່າງຫາກ ເປັນສະບັບໆໄປ

ຫວັງວ່າ ຫນັງສືນິທານຂຸນບໍຣົມ ທີ່ໄດ້ຈັດພິມນີ້ຄົງເປັນປໂຍຊນ໌ໃນການຄົ້ນຄວ້າແຕ່ງປວັດສາດລາວ ໃນໂອກາສຕໍ່ໄປບໍ່ຫລາຍກໍຫນ້ອຍເປັນແນ່ແທ້

ສີລາ ວີຣະວົງສ໌

ນິທານ ເຣື່ອງ

ຂຸນບໍຣົມຣາຊາ

ພົງສາວະດານເມືອງລ້ານຊ້າງ

ຂໍ້ຄວາມ ບື້ອງຕົ້ນ

ນະໂມ ຕັສສະ ພະຄະວະໂຕ ອະຣະຫະໂຕ ສັມມາສັມພຸທທັສສະ ນະໂມອັນວ່າກິຣິຍາອັນນ້ອມໄຫວ້ ເມແຫ່ງຂ້າອັດຖຸຈົ່ງມີ ຕັສສະແຫ່ງພຣະພຸທເຈົ້າວົນນັ້ນ ພະຄະວະໂຕ ຕົນມີທຳເປົາເລົາຕົນ ອັນງາມຫາ ບຸກຄົນຜູ່ຈັກທຽບທຽມບໍ່ໄດ້ ອະຣະຫະໂຕ ຕົນໄກແກ່ຣາຄາທິກິເລດ ສັມມາສັມພຸທທັສສະ ຕົນຕັສຮູ້ຍັງທັມທັງມວນດ້ວຍດີດ້ວຍຕົນແລ ອະຫັງອັນວ່າຂ້າຜູ່ນັ້ນນະມັສສິກວາ ໄຫວ້ແລ້ວແລ ພຸທທັງ ທັມມັງ ສັງຄັງ ຍັງພຣະພຸທເຈົ້າ ພຣະທັມມະເຈົ້າ ແລພຣະສັງຄະ

ເຈົ້າດ້ວຍຄາຖາວ່າ ສີສີອັບຊະລີ ປະນາເມເວຍຍະ ອະຕະບັງ
ຄຸນ ນະໂມພຸທາຍະໂລໂກ ປະກະອະນະສັມພຸທາທັງ ດັ່ງນີ້ແລ
ພຸດໂທ ທັມໂມ ສັງໂຄ ຈິ່ງມາທະອິງທົງເທບປະຈົບບຽດມ້າງ
ປາຣະມີໂບໃຫ້ສີຣະສາ ມາຣ້າງອໍປ່ານິມາຣມາບາຣະມີເມັ້ງ
ກຳຈັດເຈັງອະຈາກສ້ພໂຄຣາ ສັພອັນຕຣະຍາສັນຍາ ອໍປາ
ໃຫ້ມີໃພຍພັຍວ້ຽງ ກີໄກແສນໂຍດ ພົ້ນຈາກໂທດບາບ
ເວນທາ ດ້ວຍຜລະເທ່າງຜູ້ຂ້າໄດ້ສ້າງ ແລະໄດ້ຂຽນຍັງ
ປີດກະກະ ເກັ້ມເຈົ້າດວງນີ້ໄວ້ ໃຊ້ດານາພຸທສາສນາເທົ້າ ໕໐໐໐
ພຣະວັດສາ ໃຫ້ເປັນທີ່ໄຫວ້ນົບເຄົາຣົບຢຳແປງ ແກ່ຄົນແລ
ເທວະດາທັງຫລາຍ ສືບເມື່ອພາຍຫນ້າພຸ້ນ ແລ

ໃໝ ສາທຸະໂວ ດູກ່ອນສັບປຸຣິສະເຈົ້າທັງຫລາຍ ຢູ່
ມີຜຍາປາຖນາເຖິງສຸກສາມປະການ ມີນິຣະພານ ເປັນທີ່ແລ້ວ
ຈິ່ງຕັ້ງບັງໃສຕະປະສາດຟັງຍັງ ຣິສທັມດວງນີ້ ໃຫ້ມີຂັນເຂົ້າ
ດອກດອກໄມ້ທູບທຽນ ຫມາກ ພູ ກ້ວຍ ອ້ອຍເຄື່ອງບູຊາ
ແລ້ວຈິ່ງຟັງເຖີ້ນ ເຫດວ່າເປັນຄຳບູກຄົນຜູ້ລ້ຳຍິ່ງ ຜູ້ມີບຸນນີ
ສືບ ໕ ລິບ ໑ ດີຫລີດາຍ

ດູກ່ອນສັບປູຣິສະທັງຫລາຍ ບັດນີ້ຈັກກ່າວຕຳນານນີ້

ທາງແຫ່ງ ຂຸນບໍຣົມຣາຊາທິຣາຊເຈົ້າກ່ອນແລ ຄໍາໃຫວ່າ
ແຖນຟ້າຄືນນັ້ນປີ້ ວາ ຫາກເປັນພໍ່ຂູນບໍຣົມແລ ຄືວ່າຕີ
ອີນທາທິປະຕີຣາຊແລ ເຂົ້າວ່າແຖນແຕ່ງນັ້ນ ຄືວ່າພິສນຸກັ
ເທວະບຸດແລ ອັນວ່າແຖນຄົນແລະແຖນຊັ້ງແຖນເຄືອກນັ້ນແຖນ
ຜູ້ນີ້ຫູ້ທັ້ງແລ ແຖນສີ່ວິນນີ້ຢູ່ຊັ້ນຟ້າຈາຕູມະຫາຣາຊິກາ
ແຕ່ງຍັງໂລກ ຫລີງຍັງສັດຍັງຄົນອັນກະທໍາຍັງບາບແລບຸ
ແລ ເກີ່ແຫ້ຄົນທັງຫລາຍວາຜີຟ້າຜີແຖນ ວ່າອັນທີ່ແຫ້ແມ່
ພຣະຍາອີນແລ ທ້າວຈະຕຸໂລກທັງສີດາຍ ຈັດຂຽນຖາມຍັງ
ຄົນທັງຫລາຍປູງກະທໍາບຸນຄຸນແລໂທດ ແລຍັງມີນາງເທວະ
ດາດີນນີ້ງຊື່ວ່າ ນາງທໍຣະນີ ອັນຮັກສາຍັງບ້າປາດຫມາຍທາ
ແຫ່ງຄົນທັງຫລາຍ ຍັງມີນາງເທວະດາ ດີນນີ້ງຊື່ວານາງ
ເມຄຂະລ່າ ຢູ່ຮັກສາພຣະຍາທ້າວຂຸນແລຄົນທັງຫລາຍຜູ່ມີບູນ
ກໍດີ ບໍ່ມີບຸນກໍດີ ຫາກຮູ້ຊູ່ຄົນໃນໂລກນີ້ທັງມວນດາຍຄົນທັ
ຫລາຍວ່າຜີເສືອເມືອງນັ້ນບໍ່ມີແລ ແມ່ນນາງເມກຂະລານັ້ນແລ
ຄົນທັງຫລາງ ກະທໍາປາບບຸນຄຸນໂທດດັ່ງນັ້ນ ກໍເມືອບອກ
ໃຫ້ທ້າວທັງສີໃຫ້ແຈ້ງ ຂຽນຖາບດູດໍ່ເຂົ້າຫັ້ນແລ

ດູລາ ສັບປຸຣິສະນັກປາດເຈົ້າທັງຫລາຍ ຈົ່ງຕັ້ງຍັງໃສ

ຕະປະສາດຫູຟັງ ຍັງຕຳນານນິທານມະຫາກັບນີ້ເຖິງ ໂພທິ
ສັດໂຕ ອັນວ່າໂພທິສັດເຈົ້າເຮົາໄດ້ເກີດເປັນ ສະເບັນຕຣະພຣົມ
ເປັນໃຫຍ່ແກ່ພຣົມທັງຫລາຍ ກໍກາກສເດັດລົງມາດູຍັງຈັກ
ກະວານທັງມວນອັນກວ້າງແລະແຄບໃຫ້ຮູ້ ຊຸມພຸທວີບເຮົານີ້
ກ້ວາງໄດ້ຫມື່ນໂຍດພຣົມ ທັງຫລາຍກໍມາຫມາຍໄວ້ຍັງທີ່ອັນ
ຈະຕັ້ງເມືອງໃຫຍ່ທັງຫລາຍ ໑ປີ ເມືອງໃສ່ຫລັກແກ້ວໃສ່ຫລັກ
ຄຳ ໃສ່ຫລັກເງິນໄວ້ ທີ່ອັນ ຈັກຕັ້ງເມືອງນ້ອຍທັງຫລາຍນີ້
໑໕ ເມືອງໃສ່ຫລັກເງິນ ໃສ່ຫລັກຄຳ ໃສ່ຫລັກຫີນຫມາຍໄວ້
ຊູ່ແຫ່ງຫັ້ນແລເມື່ອນັ້ນຈຶ່ງໃຫ້ພຣົມຕົນຊື່ວ່າ ຜັບປະຣະເມ
ສວນຮັກສາກ້ຳຕາວັນອອກ ພຣົມຕົນນຶ່ງຄືພຣະນາຣາຍຮັກ
ສາກ້ຳຕາວັນຕົກ ພຣົມຕົນນຶ່ງຊື່ວ່າ ມະໂນສິດທິຮັກສາກ້ຳຫີນ
ເຫນືອ ພຣົມຕົນນຶ່ງຊື່ວ່າ ເສລະສິດທິຮັກສາກ້ຳຫີນໄຕ້ປູ່ລອນ
ສາຕຣະສິນທັງມວນ ຈຶ່ງໄດ້ຊື່ວ່າ ເມືອງຕັກກະສີລານະຄອນ
ຫັ້ນແລ ພຣະໂຄຕະມະເຮົາເປັນສະມັນຕຣະ ພຣົມນັ້ນ ປູ່ຮັກ
ສາເຖິງກາງເມືອງ ອັນວ່າພຣະພຸທເຈົ້າ ໕ ພຣະອົງຄືພຣະ

ເມດໄດຍະເຈົ້າ ຈັກມາເປັນພຣະລຸນພຣະເຈົ້າທັງຫລາຍໃນມະ ຫາກັບນີ້ແລ ແດນແຕ່ນັ້ນເບື້ອຫນ້າ ບ້ານເມືອງທັງມວນອັນ ພຣົມ ທັງຫລາຍຕັ້ງແຕ່ງຫມາຍໄວ້ນັ້ນ ກໍຍັງເກີດມີທ້າວພຣະ ຍາຍິງຊາຍທັງຫລາຍອອກເດັນໄປ ທ້າວພຣະຍາກໍປູ່ໃນສິບ ៥ ສິບ ໆ ຊອບທິສຣາຊທັມແຕງຄອງຊອບໂລກຊອບທັມກໍໃສ ພາບຮາບງາມດີກໍມີວັບນັ້ນແລ ພຣະກຸກ ກຸສັນທະເຈົ້າເກີດມາ ເປັນພຣະ ແລະສາສນາກໍລາລົງໄປ ແລ້ວຊູມພູທວີບກໍເສົ້າສູນ ເປັນ ອັນເທືງບານບັກ ດັ່ງນັ້ນພຣະຍາອິນແລວິສານຸກັມເທວະ ບຸດແລະ ທ້າວຈະຕຸໂລກທັງສີແລນາງທໍຣະນີແລນາງເມກຂະ ລາອັນລາວເກົາເຂົາວ່າຜີຟ້າ ຜີແຖນວ່າອັນຈີ່ງເອົາເທະະດາ ອັນປູ່ຊັ້ນຟ້າພາຍບິນລົງມາໃສ່ ເປັນທ້າວເປັນພຣະຍາດັ່ງ ອັນ ເປັນໂອປະປາຕິກຊາດ ກໍໃຫ້ທ້າວພຣະຍາປູ່ໃນຣາຊທັມ ໑໐ ປະການ ດີທານສິນພາວະນາ ເປັນວົບດີແລ້ວ ເມື່ອພຣະພຸທ ເຈົ້າໂກນາຄົມນາເກີດເປັນພຣະ ຫມົດສາສນາພຣະໂກນາຄົມ ແລ້ວຊູມພູທີບທັງ ມວນກໍເສົ້າສູນເສັງເກັງມວນ ພຣະຍາອິນ

ແລເທວະດາທັງຫລາຍກໍ ເລົາເອົາເທວະບຸດເທວະດາອັນປູ່ຊົ້ນ ຟ້າພາຍບົນ ລົງມາເປັນທ້າວພຣະຍາເໜືອນດັ່ງກ່າວແລ້ວ ແຕ່ ມາຍຫລັງນັ້ນແລ ບ້ານເມືອງທັງຫລາກໍໃສພາບຮາບງາມແລ ເມື່ອພຣະພຸທເຈົ້າອົງຊື່ວ່າ ກັສສະປະເຈົ້າ ມາເກີດເປັນພຣະ ທໍມົດລາສນາພຣະກັສສະປະ ປູ່ນາບານບັກຜີເຜດຜີຍັກທັງ ຫລາຍປູ່ ບຽດບຽນກຸກກວນກະທຳຮ້າຍໃນຊຸມພູທີບເຮົານີ້ ແລະ ຄົນທັງຫລາຍກໍຣິບເລວຜີເຜດຜີຍັກ ໆ ທັງຫລາຍກໍຣິບເລວຄົນ ຂ້າຟັນກັນໄປມານັ້ນແລ ພຣະພຸທເຈົ້າຕົນຊື່ວ່າ ນຣະໂຄດົມ ເຈົ້າແຫ່ງເຮົາມາເກີດແລ້ວດັ່ງນັ້ນ ກໍກະທຳພຽນໄປໄດ້ ຝີວັສ ກາຈິ່ງໄດ້ເປັນພຣະຍັງບໍ່ໄດ້ໃຜດສັດທັງຫລາຍ ໃນເມືອງໄທຍ ທັງຫລາຍ ໑ປີ ເມືອງພຸ້ນໄປ ກາຣອດເຮົາ ລັກເທື່ອຍັງເປັນນັ້ນ ເປັນທອນເສັ່ງແລ

ບັດນີ້ມາຈັກ ຈາຍັງ ບາງ ກາງຣີເມືອງລ້ານຊ້າງເຮົາ ພີ່ທັ້ງ ນີ້ ເສືອ ແລອ້າງຊະເລີກ ເກີກ ແລະ ເຖົ້າ ຊະ ໂຄມ ຟ້າ ແລະ ອ້າຍ ເຈົ້າ ໄທແລປູ່ມີສີແລຍ່າພີໄສ ແລນາງເງືອກປູ່ ພູຊ້າງນັ້ນ

ແລພຣະບາງເຫລືອມ ຕົວນຶ່ງປຸ ພູຊວງຫລວງເຂົານີ້ເປັນຜົວ
ເມັຽກັນ ຈິ່ງນີ ລູກຜູ້ນຶ່ງຊື່ວ່າ ບາງປາກກວ້າງຫູຮີກັບທັງບາງ
ບັນທາເກວີແລເຂົາຮັກສາເຂດຂອງກິງເມືອງລ້ານຊ້າງທັງມວນແລ
ແຕ່ນັ້ນໄປພາຍຫນ້າບ້ານີ້ ເຈົ້າຣັດສີສອງພີ່ນ້ອງຈຶ່ງມາ ຕັ້ງ
ຫລັກກນາຍແຜ່ນດິນໄວ້ເບື້ອງວາວັນອອກນັ້ນ   ຝັງຫລັກຄໍາ
ລຸ່ມໃສ່ຫລັກເງິນກາງໃສ່ຫລັກ ໄມ້ຝັງລົງເລິກນີ້ ໑ປີ ສອກ
ອັນນີ້ຊື່ວ່າ ຫລັກປະຖົມທົວທີ ໃສ່ຊື່ຫລັກຫມັ້ນ ທີ່ນຶ່ງຊື່ວ່າ
ທ້າຍຂັນທະດັ່ງກາງ ເມືອງຫລັກນຶ່ງຫັ້ນແລ   ຫລັກນຶ່ງວັ້ງ
ໄວ້ທ້າຍເມືອງທີ່ງອນຫ້ວຍສິບໂຮບ ກ້າຝ່າຍເຫນືອແລ້ວຈຶ່ງຝັງ
ຫລັກຫີນແກ້ວ ອັນນຶ່ງ ຫລັກຄໍາຫລັກເງິນໄວ້ທີ່ດົ່ງໄມ້ຖ່ອນດົ່ນ
ນຶ່ງ ມີດອກບານຕຣະ ການງານ ບານຊູ່ເດືອນບໍ່ຂາດເຫລືອນ
ດັ່ງ ດອກທອງແດງມີລໍາໄຫຍ່ໄດ້ ໑໗ ອ້ອມສູງໄດ້ ໑໑ ໗
ວາເຈົ້າຣັດສີສອງພີ່ນ້ອງຈຶ່ງ ເອົາຫີນຫນ່ວຍນຶ່ງຊື່ວ່າ ກອນກ່າຍ
ຟ້າມາ ຫມາຍໄວ້ໃຫ້ເປັນທີ່ວັ້ງຜາສາດ ເຈົ້າພູມີ ປາລເຈົ້າ
ຜ່ນດິນຫັ້ນແລ

ອະຖະ ຖັດນັ້ນເຈົ້າຣັດສີສອງພີ່ນ້ອງສອງພຣະອົງ ຈິ່ງໄປ ເອົານ້ຳອະໂນມາຕະສຣະນາຫົດເສົາຫລັກຄ່ຳ ທັງສີ່ແຫ່ງນີ້ ແລ້ວ ນ້ຳອັນເຫລືອກວ່ານັ້ນເຈົ້າຣັດສີ ຈິ່ງ ໄປໄວ້ໃນບ່ອນນຶ່ງ ດິນທັງຫລາຍຮຽກວ່າຖ້ຳນ້ຳທ່ຽງແຫ່ງນຶ່ງຫັ້ນແລ ຈິ່ງໄປຕັກເອົາມາ ຫົດສົງທ້າວພຣະຍາ ທັງຫລາຍດິນຈັກນັ່ງເມືອງຫັ້ນແລ ຖັດ ນັ້ນເຈົ້າຣັດສີຈິ່ງມາຕັ້ງນັກຂັດຕະອືກຊີໄວ້ວ່າເປັນ ຊາ ຕາ ເມືອງ ໄວ້ກັບແຜ່ນດິນທີ່ຊຽງທອງເປັນກົ້ນວ່າດັ່ງ ນີ້ ໑ , ໒ ມີ , ໔ . ໕ ປີ, ກ , ຊ , ລ ລັດນາວ່າອືກທັງຫລາຍມວນປູງນີ້ຢູ່ໃນສົງ ຫະຣາສີແລ ຕັ້ງຫລັກຄຳຝູງນີ້ໄວ້ກັບແຜ່ນດິນອັນນີ້ແມ່ນຍາມ ຈັກໂກ້ຮຸ່ງໄວ້ລັດນາກີ່ກໍຣະກິດລາສີ ອັນເປັນຊາກາແຜນເມືອງ ເຈົ້າຣັດສີຈິ່ງກໍ່ຕັ້ງແຜ່ນດິນແລ ຖັດນັ້ນ ເຈົ້າຣັດສີພີ່ນ້ອງໄປສະ ຖິດຢູ່ທີ່ຫີນສົບຄານທີ່ນ້ຳຂອງຄົບກັນຫັ້ນ ຈິ່ງຮຽກມາຍັງທັງ ຫລາຍ ໑໕ ຕົວງນຶ່ງປູ່ຖ້ຳພູຊວງຕົວນຶ່ງປູ່ພູຊ້າງ ຕົວນຶ່ງປູ່ ແກ້ວຫລວງ ນ້ຳເຊືອງຕົວນຶ່ງປູ່ສິບເຊືອງ ຕົວນຶ່ງປູ່ຜາຮັງເມືອງ ທີ່ສິບຂຸ ຕົວນຶ່ງປູ່ທ້າງຂອງແກ້ວອ້ອຍຜາທະນຸຕົວນຶ່ງປູ່ຜາເສືອ

ຕົວນີ້ເປັນແກ່ກວ່າ ພຣະຍານາກແລ ຕົວນຶ່ງຢູ່ຜາດ່ງວ ລຸ່ມຜາ
ຈອມເພັດຫັ້ນແລ ຕົວນຶ່ງຢູ່ຄີກເຮອ ຕົວນຶ່ງຢູ່ກິກທ່ອນ ຕົວນຶ່ງ
ຢູ່ຜາຕັດແຄແລຜາຕ່າງນາຍ ຕົວນຶ່ງຢູ່ແກ້ງແດນທ້າງນ້ຳຂອງ
ດອນຄວາມຟູນ ຕົວນຶ່ງຢູ່ປາກລົບໂຮບຫັ້ນ ຕົວນີ້ເປັນພຣະຍາ
ໃຫ້ຮັກສານ້ຳຮັກສາເມືອງກ້າຝ່າຍໃຕ້ ຕົວຢູ່ຜາເສືອເປັນ
ໃຫ້ຮັກສາຫີນນ້ຳກ້າຝ່າຍເມືອງຫີນເໜືອຫັ້ນແລ ພຣະຍາ
ນາກ ໑໕ ຕຣະກຸນກໍ່ອອກມາແລ້ວ ກໍເອົາກັນເພຣະນິດຕົວເປັນ
ທະຫານເປັນທ້າວ ເປັນພຣະຍາອອກມາພ້ອມກັນແລ້ວ ເຈົ້າ
ຣັດສີພີ່ນ້ອງຈຶ່ງມາລະຄຸດປູ່ກ້ອນຫີນກ່າຍຟ້າທີ່ກົກໄມ້ທອງຕົ້ນ
ໃຫຍ່ ແລ້ວກໍສັ່ງສອນພຣະຍານາກທັງຫລາຍ ວ່າຕັ້ງນີ້ດູລາ
ພຣະຍານາຄທັງຫລາຍບ່ອນທີ່ນີ້ ເປັນທີ່ຕັ້ງຜາສາດເຈົ້າຜູ້ມີ
ບຸນອັນຈັກມາເປັນທ້າວພຣະຍາຊ້າງຫນ້າພຸ້ນດີຫລີແລ ເຈົ້າ
ທັງຫລາຍຈົ່ງພ້ອມພຽງກັນ ດ້ວຍກັນພີ່ທັກຮັກສາບ້ານເມືອງ
ແມ່ນ້ຳພຸດອຍໄຕ້ເໜືອທາງ ເທິງແຜ່ນດິນແຜ່ນຊາຍ ແມ່ນ້ຳ
ໃຫຍ່ນ້ຳນ້ອຍທັງຫລາຍຊູ່ທີ່ຊູ່ແຫ່ງແຖັນ ເຈົ້າທັງຫລາຍພ້ອມ

ກັບຣັກສາທີ່ຊຽງດົງຊຽງທອງນີ້ເປັນເຄົ້າເຖິງ ຈິ່ງມາຣັກສາສີ
ເດືອນໃຫ້ພ້ອມກັບມາເທື່ອນຶ່ງ ພຣະຍານາກກົວປູ່ຫນ້າຫ້ວຍ
ໃຫ້ມາທີ່ກ້ອນຜາຂວາງກ້ອນປຽບຫັ້ນກ່ອນ ພຣະຍານາກກົວປູ່
ນ້ຳຂອງຄັນວ່າມາໃຫ້ເຊົາທີ່ກ້ອນ ຜາດ່ຽວຫັ້ນແລວັງຄຶກເຮືອ
ຫັ້ນເຖິງ ອັນນີ້ເຈົ້າຣັດສີກົດຫມາຍບອກສ່ວນໃຫ້ແກ່ພຣະ ຍາ
ນາກທັງຫລາຍແລພຍບເລົ້າຣຽກເອົາເທວະດາທັງ ຫລາຍ ໃຫ້
ມາບອກຣັກສາໃຫ້ ຣັກສາບັງເມືອງທັງມວນແລແມ່ນ້ຳແລແຜ່ນ
ດິນ ບັງພູດອຍທັ້ງມວນນັ້ນ ເທວະດາຕົນນຶ່ງຣຽກຊື່ວ່າປູ່ພີສີ
ຕົນນຶ່ງຊື່ວ່າບາງພີໃສ ສອງຂານີ້ປູ່ພູຊວງຫລວງແລພູຊ້າງ
ນ້ອຍ (ຫລື ນັ້ງ)ສອງຂານີ້ຫາກເປັນຜົວເມັຽກັບເຈົ້າ ຣັດ ສີ
ໃຫ້ຣັກສາເບື້ອງຕາວັນອອກເທວະດາຕົນນຶ່ງຊື່ວ່າເກົ້າງ້າວ(ເກົ້າ
ເຫງົ້າ) ເທວະດາຕົນນຶ່ງຊື່ວ່າທ້າວບຸນເຫລືອ ສອງຂານີ້ຫາກ
ເປັນຜົວເມັຽ ກັບປູ່ພູແສນເຂົາຄຳເຈົ້າຣັດ ສີ ໃຫ້ ຣັກ ສາ ເມືອງ
ຝ່າຍເຫນືອ ເທວະດາຕົນນຶ່ງຊື່ວ່າເຈົ້າຟ້າເສດ ອີກນຶ່ງຊື່ວ່າ
ນາງພີຈິດຕຣເລຂາລູກແຖນຄົນ ເຈົ້າຣັດສີໃຫ້ຣັກສາຝ່າຍໃຕ້ຂາ

ຫາກເປັນຜົວເມັຽກັນ ເຈົ້າຣັດສີແຕ່ງໃຫ້ຮັກສາເມືອງກ້າເໜືອ ແລບ້ານເມືອງທັງມວນດັ່ງນີ້ ຜູ້ໃດຈັກເປັນທ້າວພຣະບາທີ ຊຽງດົງຊຽງທອງດັ່ງນັ້ນ ໃຫ້ແຕ່ງຂັນເຂົ້າຕອກດອກໄມ້ພາຊນະ ຄາວຫວານ ບູຊາເຈົ້າຣັດສີແລເທວະດາເຈົ້າທັງຫລາຍຝູງ ວ່າມານີ້ເຖີນ ເຈົ້າຣັດສີຫາກສັ່ງສອນເຂົາໄວ້ດັ່ງນີ້ແລດະໂດ ກາເລໃນກາລະແຕ່ນັ້ນໄປພາຍໜ້າ ໃສ ດາປັສໂສອັນວ່າເຈົ້າ ຣັດສີທັງຫລາຍຕົນອື່ນກໍໜີໄປດັ່ງບ້ານ ດັ່ງເມືອງທີ່ເຂົາເຈົ້າ ກົດໝາຍໄວ້ ທີ່ຈັກຕັ້ງບ້ານແປງເມືອງຫັ້ນແລ ຍັງແຕ່ເຈົ້າ ຣັດສີພີ່ນ້ອງ ວົນພີ່ນັ້ນຊື່ວ່າຣັດສີທອງຕົນນ້ອງນັ້ນຊື່ວ່າ ທວາ ທະຣັດສີ ເຈົ້າຈິ່ງມາກົດຊີເມືອງກ້າໃຕ້ນັ້ນເອົາພູຊ້າງເປັນນີມິດ ຝ່າຍກ້າເໜືອນັ້ນເອົາພູຊ້າງນັ້ງເປັນນີມິດແລ ຊື່ສອງອັນນີ້ຈິ່ງ ໄດ້ຊື່ວ່າເມືອງຊວາລ້ານຊ້າງເພື່ອອັນແລ ດະເທະນັ້ນດະຣັງຖຸດ ນັ້ນ ເຊດຖະດາປັສໂສ ອັນວ່າເຈົ້າຣັດສີທອງຕົນພີ່ ກໍຈິ່ງໃຫ້ ເຈົ້າຣັດສີຕົນນ້ອງປູ່ເຝົ້າທີ່ນັ້ນ ແລ້ວເຈົ້າຣັດສີຕົນພີ່ຈິ່ງເຂົາ ຍັງຊານສະມາບັດແລ້ວເຈົ້າກໍສະເດັດຂຶ້ນເມືອສູ່ເມືອງຊັ້ນຟ້າ

ດາວະດຶງສາແລ້ວ ເຈົ້າກໍເຂົ້າໄປສູ່ສຳນັກແຫ່ງພຣະຍາ ອິນ
ເຈົ້າກ່າວກິຈການທັງມວນ ອັນຕັ້ງຫມາຍເຂດແດນບ້ານເມືອງ
ທັງມວນທີ່ຈັກໃຫ້ຫາ ທ້າວພຣະຍາຕົນຢູ່ຊອບໂລກຊອບທັສ
ຣາຊທັມ ໑໐ ປະການເປັນຕົ້ນວ່າໃຫ້ທານຮັກສາສິນ ໕ ສິນ ໘
ຟັງທັມເມດຕາພາວະນາບໍ່ຂົ່ມເຫງຂ້ອ ໃພ່ໄທຍໄກ ອັນນຶ່ງບໍ່
ໃຫ້ມ້າງຣາຊປະເວນີບຸຣານະທັມຕັ້ງໄວ້ ເກົ່າ ດຸນ ໃຫມ່ ຖາງ ຮີດ
ຄອງແຕ່ປິຕຸປິຕາຫາກ ຕັ້ງໄວ້ແລ້ວພອຍເລົ່າຣີມ້າງເສັຽ ອັນ
ນີ້ກໍເປັນຄອງຈີບຫາຍໃນໂລກອັນນີ້ແລະໂລກ ພາຍຫນ້າ ປະ
ການນຶ່ງຂ້າແຫ່ງພຣະຍາ ອິນເຈົ້າ ໃຫ້ຊອກຫາທ້າວພຣະຍາ
ຕົນປະເສີດລົງໄປນັ່ງບ້ານແປງເມືອງ ໃຫ້ຊອບ ຂ້ອຍ ໃພ່
ໄທຍໄທໄດ້ສຸກຍ້ອນເຈົ້າແຜ່ນດິນ ດູລານະຍາອິນເຈົ້າເປັນແທ່ນ
ທ້າວ ພຣະຍານີ້ຕົນໃດຍັງເຫັນແກ່ອະຄະຕິ ໔ ຄື ໂທສາຄະຕິ
ໂມຫາຄະຕິ ສັນທາຄະຕິ ພຍາຄະຕິ ບໍ່ພິຈາຣະນາຫລົງໂທສ
ຫນັກໂທສເບົາຫລົງເຂົ້າໄປໃນວັດຖຸການແລກິເລສການ ຖ້ອຍ
ຄວາມຄົນເຂົາສູ່ຮູ້ ຫາຕັດແຕ່ງຮ້າຍດີໄປໄກ ຮັກຊັງໃດດວງ

ເຫັນແກ່ຊັບສິນ ຮູບຊົງມີຄຸນ ບໍ່ມີຄຸນໄດ້ບ້ອນຄໍາຫລາຍໃຫ້ຫນ້ອຍ
ຄໍາຫນ້ອຍໃຫ້ເກີດມີຫລາຍອື່ນ ກໍດີໃຈ ແມ່ນກໍໃຫ້ຜິດ ຜິດໃຫ້
ແມ່ນຮ້າຍເຫັນແກ່ຫຼົງບຕາຍກໍດີ ປ້ານກົວພາຍລຸນໂຫດຫັນ
ບານໄຫມ່ປ່າເປັນໄຫຍ່ ຜິດແຜນແກ່ອະນາຣົຖຄາດຄາບໍ່ຕາມ
ຣະດູປີເດືອນວັນຍາມບໍ່ຕາມໂບຮານຣະຣາຊປະເວນີ ຄ່າຣີບໃຫ້ວຽກ
ການແຕ່ງເນັ້ງເງິນ ຜູ້ ພ່າຍໃຫ້ແຜ້ຜູ່ແຜ້ ໃຫ້ພ່າຍເຫັນແກ່ ສິນ
ຈາງບັກດັ່ງນັ້ນ ບ້ານເມືອງ ບໍ່ສຸກຄຸ້ມຊຸ່ມເຢັນຈິບຫາຍໃນຊາດ
ນີ້ແມ່ນທ້າວພຣະຍາເສນາອໍານາດແປງບ້ານປົ່ງເມືອງ ເປັນດັ່ງ
ວ່ານາງນີ້ ຄັນຈຸຕິຕາຍໄປສູ່ນະຣົກ ນີກອງທຸກທັງມວນຫາກເປັນ
ພໍ່ເປັນແມ່ເປັນພີ່ນ້ອງ ກອງທຸກຮັງນັ້ນຫາກຄວນພິລຶກເພິງ ກົວ
ນັກຫນາຫາຄວາມສບາຍບໍ່ໄດ້ຮ້ອງໄຫ້ ຢູ່ເວີງໆ ແກ່ທ້າວພຣະ
ຍາເສນາອໍານາດຜູ່ນັ້ງບ້ານແປງເມືອງບໍ່ໃຫ້ຊອບໂລກຊອບທັມ
ນັ້ນແລ ດູກ່ອນພຣະຍາອິນ ຕິນເປັນແກ່ກວ່າເທະວະດາທັງຫລາຍ
ທ້າວພຣະຍາເສນາອໍານາດຍິງຊາຍ ແຕ່ງໃຫ້ແມ່ນທ່ານອາງ
ສັບປຸຣິສະເຈົ້າດັ່ງນັ້ນ ອະໂກທັງປ່າໃຫ້ມີຄໍາກອບ, ຈຽດຄ້ອນ

ຂຶນຂິນໃນວິຫິງສັບຈະ ຢ່າໄດ້ປອງບັງບຽດ ຜິແຜນອັນບໍ່ແມ່ນ ຄອງເມືອງອັຊຊະວັງ ໃຫ້ມີໃຈອັນຊື່ຕໍ່ ຕັ້ງໃຈທໍ່ຄອງບຸນນັທ ທະວັງໃຫ້ມີໃຈອອນຂາມລະອຽດ ບໍ່ກອບຄຽດບ່ອນປານີຂັນຕີ ບ່ອນອິດຄຳຄຽດບ່ອນປານີປະຣິຈາຄັງມີໃຈດີສະ ຈ່າຍ ໃຫ້ ດ້ວຍ ງ່າຍເປັນທານຫີຣິໂອຕຕັປປະ ປາກອັນໃດທ່າອັນໃດ ໃຫ້ລະ ອາຍແກ່ນັກປາດຜູ້ສລາດຄອງທັມ ອະວິໂຣ ທັງແຕ່ງໃຫ້ຣາບ ຕາມຄອງເມືອງສີລະທານັງ ໃຫ້ມີສິນແລທານທຸກເມື່ອໃຈ ກວ້າງເພື່ອນັກບູນກໍຈຶ່ງໄດ້ນຳຕົວໄປເກີດ ຊັ້ນຟ້າເລີດດຸສິດາ ແທ້ດີຫລີແລ ຕະໂຕພາຍຫນ້າແຕ່ນັ້ນ ເຊດຖະອິສີ ອັນວ່າເຈົ້າ ອັດສີຕົນພີ່ຄືຣັດສີທອງ ຈຶ່ງໃຫ້ຣັດສີຕົນນ້ອງ ປູ່ຣັກສາທີ່ນັ້ນ ກ່ອນແລເຈົ້າກໍ່ເຂົ້າຍັງຊານສະມາບັດທະຍານຍິ້ນ ເມື່ອ ຊັ້ນ ຟ້າ ດາວະຕິງສາ ເລົ່າກິຈການຖ້ອຍຄຳທັງມວນແກ່ ພຣະ ຍາ ອິນ ອັນໄດ້ແຕ່ງບ້ານແປງເມືອງ ໃຫ້ທ້າວພຣະຍາຕົນແຕ່ງຊອບໂລກ ໃຫ້ເປັນສຸກແກ່ສັດແກ່ຄົນທັງຫລາຍ ແລ້ວກໍຕ້ານຈາຣະຈາ ກັບ ຄອມພຣະຍາອິນ ໃຫ້ທ້າວທັ້ງສີ່ລົງມາລຽບດູຍັງຊູມພູທີບ ໃຫ້

ເມືອເປັນບ້ານເປັນເມືອງແລ້ວຫັ້ນແລ ພຣະພຸທເຈົ້າເກີດມາຕັດ
ສັບພັນຍຸເປັນພຣະໃນໂລກນີ້ແລ້ວຍັງໄດ້ໄປໂຜດສັດທັງ ຫລາຍ
ໃນເມືອງໃຫຍ່ທັງ ໑໒ ເມືອງກ່ອນແລະເມືອງນ້ອຍທັງ ຫລາຍ
໑໕ ເມືອງນີ້ພຣະພຸທະເຈົ້າໄປໂຜດສັດບໍ່ທັນຮອດທັນ ເຖິງເມືອງ
ເພື່ອບໍ່ມີທ້າວພຣະຍາຕົນໃດ ຮັກສາແຜ່ນດິນຫັ້ນແລ ເຈົ້າຣັດ
ສີມີຄໍາດ້ານຈາຣະຈາກັບດອນພຣະຍາອິນດັ່ງນີ້ແລ້ວ ຈິ່ງສັ່ງ
ອໍາລາພຣະຍາອິນເຈົ້າຟ້າງ ກັບທັງທ້າວທັງສີກັບທັງວິສນຸກັມ
ເທວະບຸດທັງຫລາຍ ກໍມາຊຸມນຸມກັນໃນສໍານັກແຫ່ງພຣະຍາ
ອິນຕົນເປັນແກກວ່າເທວະດາທັງຫລາຍຫັ້ນແລ ເມື່ອນັ້ນເຈົາ
ຣັດສີ ໂອຕະຣິດວາກໍສະເດັດລົງມາຈາກຊັ້ນຟ້າ ດາວະດຶງສາ
ມາແລ້ວ ກໍມາບອກເລົ່າອັນໄດ້ຕ້ານຈາຣະຈາກັບດອນພຣະຍາອິນ
ແກ່ເຈົ້າຣັດສີຕົນເປັນນ້ອງແຫ່ງຕົນ ຊູ່ແຂກາລແລ້ວ ເຈົ້າຣັດ
ສີທັງສອງພີ່ນ້ອງກໍສະເດັດໄປສູ່ທີ່ຢູ່ແຫ່ງຕົນກໍມີວັນນັ້ນແລ

ຂຸນບໍລົມລົງມາຕັ້ງເມືອງແຖນ (ດຽນບຽນຝູ)

ໃພ ສາທະໂວ ດູຣາສັບປຸຣິສະທັງຫລາຍ ຝູງມີພບາ ຈັກກ່າວບັງພຣະບາມີແຖນ ຈັກໃຫ້ທ້າວຂຸນບໍຣົມລົງມາເກີດ ໃນເມືອງລາວເກົ່າເຮົານີ້ກ່ອນແລ ແຕ່ນັ້ນຜີແຖນກໍໃຫ້ທ້າວຂຸນບໍຣົມຣາຊາລົງມາເກີດໃນເມືອງລາວ ໃຫ້ເປັນພຣະບາທນັ້ນແລ ຫືດ້ວຍມີແທ້ລັບວ່າລາວເກົ່າເຂົາວ່າ ແຖນຟ້າຄືນນັ້ນຄືດິນ ພຣະບາອິນເຈົ້າຟ້າແລ ແຖນອົງນີ້ ຫູບ່ອງຫູທັງແລ ແຖນຜູ່ໃຫ້ເປັນຜິນເປັນລົມນັ້ນກໍດີ ແຖນຜູ່ໃຫ້ເປັນເຄື່ອງເສບຂອງລຳກໍດີ ແຖນຜູ່ແຕ່ງໃຫ້ເປັນເຄື່ອງໄຮ່ເຄື່ອງນາແລແຕ່ງໃຫ້ເປັນໂລກທັງຫລາຍຝູງນີ້ ແມ່ນເທວະບຸດເທວະດາ ທັງຫລາຍອັນຢູ່ໃນຊັ້ນຟ້າຈາຕຸມະຫາຣາຊິກາທັງມວນເປັນອົງປະເສີດຍິ່ງນັກ ແລລາວເມືອງລ່າງປາງກ່ອນນັ້ນ ເຂົາຮຽກວ່າ ຜີຟ້າຜີແຖນວ່າອັນທີ່ແທ້ບໍ່ເປັນດັ່ງຄຳເຂົາດາງ ບັດນີ້ເຮົາທັງຫລາຍຕາມຄຳລາວເກົ່ານັ້ນກ່ອນແລແຖນຟ້າຄືນຈິ່ງວ່າ ເຈົ້າຣັດລືມາເລົ່າຕໍ່ເຮົາດັ່ງນີ້

ເຮົາທັງຫລາຍ ຈັກໃຫ້ໃຜໄປເປັນທ້າວພຣະຍາໃນເມືອງລຸ່ມນີ້
ຈາ ແຖນທັງຫລາຍຈຶ່ງກ່າວວ່າ ເອີ ຄວນ ໃຫ້ແຖນຊັ່ງມາຊັ່ງ
ດູກ່ອນ ລູກຟ້າແຖນທັງຫລາຍທັງຍິງທັງຊາຍ ບຸນໃຜມີມາກ
ຫລາຍເຮົາຈຶ່ງໃຫ້ລົງໄປເປັນເຈົ້າແຜ່ນດິນ ທີ່ຊຽງດົງຊຽງທອງ
ເຖີ້ນ ຜູ່ບຸນນ້ອຍໃຫ້ໄປເປັນເຈົ້າເປັນໃຫຍ່ທີ່ນັ້ນບໍ່ໄດ້ແລ ຜີແຖນ
ທັງຫລາຍຈາກັນດັ່ງນີ້ ດ້ວຍມີແທ້ຄຳເຈົ້າຣັດສີມາເລົ່າກ່ເຮົາ
ດັ່ງນີ້ ເປັນຫນັກເປັນໃຫຍ່ກ້ວາງຂວາງດີຫລີຜູ່ບຸນນ້ອຍເປັນ
ເຈົ້າໃຫຍ່ບໍ່ຄວນເລີຍອັນນຶ່ງໄມ້ທອງຕົ້ນນັ້ນໃຫຍ່ນັກ ຍອດປາຍ
ມັນນັ້ນແຜ່ນຫີນ ກຳພົລສີລາອາສນ໌ ແຫ່ງພຣະອິນເຈົ້າຟ້າ
ແທ້ດີຫລີດາຍ ບ້ານເມືອງຊວາລ້ານຊ້າງ ອັນນີ້ເປັນຫນັກເປັນ
ໃຫຍ່ດາຍເງິນຄຳເຫລັກທອງທັງຕົ້ນໄມ້ແລະໃບ ມີຣິ ຫອມນັກ
ແກ້ວ ໗ ປະກາຍ ກໍມີໃນພື້ນແຜ່ນດິນນັ້ນຫັ້ນແລ ເຈົ້າຣັດສີວາ
ດັ່ງນັ້ນແຖນຟ້າຄືນກ່າວວ່າ ຜູ່ໃດບຸນນ້ອຍລົງໄປເປັນເຈົ້າແຜ່ນ
ດິນເມືອງອັນນັ້ນບໍ່ໄດ້ແລແຖນທັງຫລາຍ ຈຶ່ງມາຊັ່ງຄູນດູໃນ
ແຖນທັງຫລາຍ ໃນເມືອງຟ້າເມືອງແຖນ ທັງຜູ້ຍິງຜູ້ຊາຍ

ຫລາຍບັກຈຶງມາໄດ້ລູກແຖນຄືນຜູ້ນຶງ ຈຶງມາໄດ້ລູກແຖນຊັ່ງຍິງ
ນຶງຈິງມາໄດ້ລູກແຖນ ແຕ່ງບິງນຶງສາມຄົນເຂົານີ້ແຖນທັງຫລາ
ຈິງເອົາມາຕັ້ງໄວ້ເກ່ານກາງແຖນທັງຫລາຍ ສ່ວນວ່າແຖນຟ້າ
ຄືນຈຶງມາສັ່ງສອນແກເຂົາທັງສາມວ່າດັ່ງນີ້ ດູລາເຈົ້າທັງສາມ
ສູເຈົ້າ ຄັນເປັນຜົວເມັຽກັນແລ້ວຈິງໄປສູ່ທີ່ຢູ່ ທີ່ກິນໃນເມືອງລຸ່ມ
ພຸ້ນເຖີ້ນ ລູກແຖນຄົນນັ້ນໃສ່ຊື່ນາງຍົມມະພາລາ ໃຫ້ເປັນເທ
ວີກ້າຂວາລູກແຖນຊັ່ງນັ້ນໃສ່ຊື່ນາງເອັດແດງ ໃຫ້ເປັນເທວີກ້າ
ຊ້າຍເຈົ້າຜູ່ເປັນຜົວນັ້ນໃຫ້ຊື່ວ່າຂຸນບໍຣົມຣາຊາທິຣາດ ແລ້ວຈິງ
ມາໃຫ້ເຄື່ອງ ທ້າວທັງ໕ປະການ ເພື່ອເປັນເຄື່ອງຣາຊາພິເສກ
ແລ້ວຈິງມາໃຫ້ດາບແມ່ວີກັບທັງດາວຣາງກອນ ກັບທັງວາບ
ຟັນຫລຽວແລະດາບລາຍຟ້າແມບ ແລະດາບເຫລັກກ້ອນແຂ
ເຜືອກກັບທັງດ້າງສາມດວງ ກັບທັງແພນຊາມງາກັບຄ້ອງຣາງ
ເງິນຣາງຄຳແລະງ້າວຟ້າເພີ້ນ ກັບແສງຟ້າກະດາກ ທັງກອງ
ໄຊທັງຄ້ອງນ້ອຍຄ້ອງໃຫຍ່ໄຫໄວ້ ຄົນເປົ່າຫອຍສັງດັງສຽງມີ
ທັງປີແກ້ວຊື່ວ່າສອນໄລ ທັງໄຕເງິນໄຕຄຳເປັນຂັບຫມາກ ທັງ

ຫມໍ້ໄຫໄຕພາດທັງບວຍເງິນບວຍຄໍາ ທັງເງິນແກ້ວເຄື່ອງແສງ ຫລາກຫລາຍສິ່ງຊູ່ປະການ ກັບທັງຈຽດພັນລາຍປົກຫົວຊ້າງ ກັບທັງປະຄົກອ້າງ ກັ້ນກາງຫາວ ກັບ ທັງສາວສນົມສາມຮ້ອຍຄູ່ ແຖນກໍໃຫ້ນັ່ງຢູ່ເປັນຖ້ອງຖັ້ນແຖວຫັ້ນແລ ເມື່ອນັ້ນແຖນຟ້າ ຄືນຈຶ່ງໃຫ້ເອົາຊ້າງເອົາມ້າ ທັງມວນມາດູຈຶ່ງໄດ້ຕົວນຶ່ງຊື່ວ່າ ຊ້າງງາກ້ຽວງາກອດຊ້າງຕົວນີ້ເປັນລູກຊ້າງເອຣາວັນມີຕົວອັນ ຂາວກະໂບງຕາທັງສອງນັ້ນດໍາ ມີຣິມປາກທັງສອງນັ້ນກໍດໍາເປັນດັ່ງແຕ້ມຂຽນ ນັ້ນແລ ມີງາອັນຂາວເປັນດັ່ງແກ້ວຜລຶກນັ້ນແລ ຈຶ່ງ ເອົາມ້າຕົວນຶ່ງເປັນຊາດເຊື້ອພົລຫົກ ຈຶ່ງຫາລູກແຖນອັນຜູ່ມາກ່ອນຫນ້າ ນັ້ນ ຜູ່ນຶ່ງ ຊື່ວາຂຸນເກັ້ມນະຣາຊ ຜູ່ນຶ່ງຊື່ວ່າຂຸນແສງ ມະໂນສາສຕຣ໌ ເຈົ້ານັ້ນຮູ້ສາສຕຣະເພດທັງມວນ ໄປກ່ອນຂຸນບໍຣົມຣາຊາ ຜູ່ນຶ່ງຊື່ຂຸນອຸ່ນ ຜູ່ນຶ່ງຊື່ຂຸນຄົລ໌ ແລສອງຂຸນນີ້ຂີ່ມ້າຕາມຫລັງຊ້າງຂຸນບໍຣົມແລ ແຖນຟ້າຄືນ ຈຶ່ງໃຫ້ຜູ່ນຶ່ງຊື່ປູ່ເຖົ້າເຍີ ຜູ່ນຶ່ງຊື່ແມ່ຍ່າງ່າມສອງຄົນນີ້ເປັນຜົວເມັຽ ກັບແບກຂວານໄປກ່ອນ ເຖົ້າໄລ່ແລະແມ່ມົດ ສອງຂານີ້ເປັນ

ຜົວເມັຽກັນ ແບກພ້າແບກຈິກແບກສຽມໄປຕາມຫລັງເຖົ້າເຍີ ແລະ ແມ່ ຍ່າ ງ່າມ ໔ຄົນນີ້ຈັກບາຜາບຂິນຜີ ເຜດຜີຍັກ ຜີເສື້ອ ເນືອງຜູ່ຮ້າຍກ້າແຂງອັນ ບໍ່ໃຫ້ເຂົ້າບ້ານເຂົ້າເມືອງ ກ່ອນຂຸນ ບໍຣົມຫັ້ນແລ ແຕ່ນັ້ນຟ້າຄືນຈິງໃຫ້ຜູ້ ນີ້ງຊີວ່າຂຸນຄົະ ຂີຄວາຍ ເຂົາລຸ້ ຈິງໃຫ້ຜູ້ ນີ້ງຊີລາງເຊີງຂີງວຸອ້ານເຂົາກວ້າງ ສອງຂາ ນີ້ຄືອິພິນເສນາຫມອບ ຫລັງຂຸນບໍຣົມມາຫັ້ນແລຂຸນບໍຣົມຈິງຂີ ຊ້າງງາກ້ຽວງາກອດ ຂັດທັງດາວແມ່ວີທັງສະພາຍໄຂວ່ ແຫລ້ງທັງເຄື່ອງຣາຊາພິເສກ ອັນແຖນຟ້າຄືນຕົນເປັນໃຫຍ່ໃຫ້ ນັ້ນ ຈິງເອົານາງຍົມມະພາລາທັງນາງເອັດແຄງ ຂີຊ້າງດອນ ຈິງເອົາຂຸນສາມຂີທ້າຍຊ້າງຄືປະຄືຫລວງໂກວແກວ່ງເມືອຂຸນບໍ ຣົມຈັກລົງມານັ້ນແມ່ນມີ້ກາບອັນນີ້ເປັນແມ່ມີ້ ໃຈ້ອັນນີ້ເປັນລູກມີ້ ຈິງວາກາບໃຈ້ເພື່ອ ດັ່ງນັ້ນເປັນຕົ້ນແລ ແລະວັນອັນຂຸນບໍຣົມ ລົງມານັ້ນວັນອາທິດ ອັນນີ້ເປັນພຣະບາວັນ ວັ່ນຈັນອັນນີ້ ເປັນນາງວັນເທວີ ເປັນເມັຽພຣະອາທິດແລ ແຕ່ນັ້ນແຖນ ຟ້າຄືນຈິງໃຫ້ແຖນຊີ້ຊີ້ບ່ອນຊີ້ທີ່ໃຫ້ແກ່ຂຸນບໍຣົມວ່າ ເຈົ້າຈິງ

ໄປຕັ້ງທີ່ນານ້ອຍອ້ອຍໜູຫັ້ນກ່ອນ ແຖນຊີ໊ຈິ່ງຊີ໊ວ່າສິ່ງນັ້ນເມື່ອ
ໃດເຈົ້າໄປຕັ້ງຢູ່ແລ້ວ ຈັກໃຫ້ເຈົ້າມີລູກ ໆ ຊາຍຜູ້ພີ່ນັ້ນ
ໃຫ້ໄປເປັນເຈົ້າແຜ່ນດິນທີ່ຖົ້ນໄມ້ທອງ ເຈົ້າຣັດສີຍັງເອົາ
ທີນ ຫນ່ວຍຊື່ວ່າກ້ອນກ່າຍຟ້າໝາຍ ໄວ້ຫັ້ນແລ ຄັນເຈົ້າ
ມີລູກຜູ້ພີ່ໃຫ້ໄປເປັນເຈົ້າແຜ່ນ ດິນຫັ້ນເຖີນ ແຖນຊີ໊ຫັ້ນແລ້ວ
ເລົ້າຊີ໊ໄປທີ່ ເມືອງບວນ ທີ່ເມືອງໂບທີຍາຊາວໃດ້ ທີເມືອງ
ພວນ ທີ່ເມືອງສາໃນ ໆ ແຫ່ງ ໆ ທັ້ນແຖນຟ້າຄືນຈຶ່ງໃຫ້ແຖນ
ຊີ໊ຊີ໊ບ່ອນຊີ໊ທີ ທັງມວນ ແລ້ວແຖນຟ້າຄືນຈຶ່ງໃຫ້ນັກຂັດຕະອຶກ
ທັງມວນ ເປັນຕົ້ນວ່າ ອາທິດ ຈັນ ອັງຄານ ພຸດ ພະຫັດ
ສຸກ ເສົາ ຣາຫູເອົາ ໃນຣາສີກັບປູ່ກ່ອນ ຈຶ່ງໃຫ້ຂຸນບໍຣົມໂບ່ງ
ຄ້ອງປ່າວພົນທັງຫລາຍໃຫ້ແຕ່ງດາຂຸນບໍຣົມຈຶ່ງເປົ່າ[illegible]ຂະບສັງ
ເຖົ້າເບີເຖົ້າໄລ່ ຈຶ່ງລົງກ່ອນຫນ້າຫັ້ນແລ ແຕ່ນັ້ນຂຸນບໍຣົມຈຶ່ງ
ເອົາຣິພົນລົງມາຮອດ ທີ່ນານ້ອຍອ້ອຍໜູ ພໍຍາມຈະໃກ້ຮຸ່ງ
ແຖນແຕ່ງຈຶ່ງໃຫ້ໄວ້ລັດຖາເມືອງ ທີ່ສິງຣາສີຫັ້ນ ອັນນີ້ ເປັນ
ຊາຕາເມືອງອັນກ່ອນແລເຈົ້າຣັດສີ ໄລ່ຊາຕາໄວ້ນັ້ນເປັນຊາຕາ

ແຜ່ນດິນເຫດ   ໄປ່ມີຄົນມາຢູ່ມາຕັ້ງອັນແຖນ ແຕ່ງໃສ່ບໍ່ຂຸນ
ບໍຣົມມາຕັ້ງບ້ານເມືອງແລ້ວມີຄົນ ຢູ່ໃນແຜ່ນດິນແລ້ວເປັນຊາດາ
ເມືອງຫັ້ນ ແລອັນຊື່ວ່າແຖນແຕ່ງນັ້ນ   ເປັນວິສຸກັມເທວະບຸດ
ແລ ຈຶ່ງມາແຕ່ງໂຮງແຕ່ງສານແ ຕ່ງຊູ່ສິ່ງ ຊູອັນຊູເບື້ອງໄວ້ທັງ
ເຄື່ອງເສບເຄື່ອງລຳເຄື່ອງຫລິ້ນເຄື່ອງຫົວທັງມວນແລ້ວຈຶ່ງມາອະ
ທິດຖານໃຫ້ເປັນໄຟໄວ້ໃນໄມ້ ເນຫີນ   ແລ້ວຈຶ່ງອະທິດຖານໃຫ້
ເປັນວັງນ້ຳຮ້ອນອັນນຶ່ງຈຶ່ງມາອະທິດຖານໃຫ້ເປັນ ຣູ ລົມ ອັນ ນຶ່ງ
ແລ້ວຈຶ່ງສັ່ງເທວະດາທັງຫລາຍອັນຢູ່ ພື້ນແຜ່ນດິນກໍດີຢູ່ຕົ້ນໄມ້
ແລະພູເຂົາກໍດີ ຕົນ ຢູ່ໃນບ້ານ້ອຍບ້ານໃຫຍ່ທັງມວນກໍດີ ໃຫ້ມາ
ຮັກສາຂຸນບໍຣົມຣາຊາແລເຈົ້າຂຸນທັງຫລາຍ ອັນລົງແຕ່ເມືອງ
ຟ້າມາຫັ້ນແລແຖນແຕ່ງ   ສັ່ງສອນສູ່ບໍຣົມແລ້ວຈຶ່ງຂຶ້ນເມືອ
ຟ້າຄອບແຖນຫັ້ນແລ ຢູ່ບານໄດ້ສອງ ປີຂຸນບໍຣົມຈຶ່ງມີລູກຊາຍ
ນຶ່ງດອມນາງຍົມ   ມະພາລາ ຈຶ່ງໃສ່ຊື່ວ່າຂຸນລໍ ແລ້ວຈຶ່ງມີ
ລູກຊາຍນຶ່ງດອມນາງເອັດແຄງຈຶ່ງໃສ່ຊື່ວ່າ ຂຸນລ້ານ ແລ້ວຈຶ່ງ
ມີລູກດອມນາງຍົມມະພາລາຜູ້ນຶ່ງ   ຊື່ວ່າຈຸລົງ ແລ້ວຈຶ່ງມີ

ລູກດອນບາງເອັດແດງຊາຍນຶ່ງ ໃສ່ຊື່ວ່າ ຂຸນຄຳພອງ (໑) ແລ້ວຈຶ່ງ ມີລູກດອນບາງບິນມະພາລາຊາຍນຶ່ງ ຊື່ວ່າຂຸນບານ ຈຶ່ງເລົ່າ (໒) ມີລູກດອນບາງເອັດແດງຊາຍນຶ່ງຊື່ວ່າຂຸນເຈັດເຈືອງ ຈຶ່ງເລົ່າມີລູກດອນ ບາງບິນມະພາລາຊາຍນຶ່ງ ຊື່ວ່າຂຸນເຈັດ ຈຽງເລ ແຕ່ຂຸນບໍຣົມ ມາສ້າງເມືອງໄດ້ ໕ ປີມີລູກ ໗ ຊາຍ ເທົ່າວ່າບໍ່ມີຂ້ອຍມີໄພ່ ບໍ່ມີເສນາມົນຕີ ບໍ່ມີຊ້າງມ້າເຂົ້າ ຂອງສິນບັດອັນໃດເອົາແຕ່ເມືອງຟ້າມາຈິ່ງມີແລ.

ແຕ່ນັ້ນ ຂຸນບໍຣົມຣາຊາກັບທັງບາງ ບິນມະພາລາກັບ ທັງບາງເອັດແດງຈຶ່ງຄາງທຸກຄາງຍາກ ຈຶ່ງໃຫ້ຂຸນສານທັງ ເຖົ້າເບີທັງຍ່າງ່ານເມືອໄຫວ້ແຖນຟ້າຄືງຫັ້ນແລ ອັນນຶ່ງວົງໄມ້ ເຄືອເຂົ້າກາດມາ ເປັນໃບຫນອງຄູວາຫັ້ນເປັນອັນຮົ່ມເຢັນ ບັກ ແດດບໍ່ເຫັນກະເວັນບໍ່ສ່ອງໄດ້ ອັນນຶ່ງເຄືອຫມາກນ້ຳເຕົ້າປຸງ ສອງຫນ່ວຍ ກໍເມືອກ້ຽວເຄືອໄຮຫລວງ ທີທິວຫນອງຫັ້ນເຮັ່ງ ຣົກເຮັ່ງມືດບໍ່ເຫັນຟ້າເຫັນຝົນ ຫນາວບັກປູ່ເນືອງລຸ່ມບໍ່ໄດ້ຈັກ

---

(໑) ລາງສບັບວ່າໃສຜົງ (໒) ລາງສບັບວ່າ ງົວອິນ

ໃຫ້ຕູ ຂ້ອຍເຮັດສິ່ງໃດເຈົ້າທັງຫລາຍເຫົາໃຫວ້ ສິ່ງນັ້ນເຖິງຂຸນ
ແລເຂົາທັງຫລາຍ ກໍເມືອໄຫວ້ຕາມຂຸນບໍຣົມຫາກໃຊ້ຫັ້ນແລ
ຄັນວ່າເມືອຮອດເມືອງ ຟ້າແລ້ວ ເຂົາກໍໄຫວ້ແຖນຟ້າຄືນຊູ່ສິ່ງ
ຊູ່ອັນ ຕາມຄວາມຂຸນບໍຣົມສັ່ງຊູ່ອັນແລ ແຖນຫລວງຈິ່ງວ່າດັ່ງນີ້
ກ້ອຍຄໍາອັນເຈົ້າທັງຫລາຍເລົ້ານີ້ເຮົາກໍຮູ້ກໍແຈ້ງຊູ່ອັນແລ ທໍ່ວ່າ
ສູລູກໄປຕັ້ງເມືອງປູ່ເມືອງລຸ່ມບໍ່ເຖິງ ໔ ປີ ໑໐ ປີ ເທື່ອແລ ຈັກ
ໃຫ້ໄປປ້ໍາໄມ້ຟັນໄມ້ໃຫຍ່ເສັ່ງສິ່ງນັ້ນກໍບໍ່ດີແລ ບັດນີ້ກູກໍໃຫ້ແຖນ
ທັງຫລາຍ ໄປຊ່ອຍແຕ່ງບ້ານແປງເມືອງຊູ່ອັນນີ້ແລ ທັ້ງເຖົ້າ
ເບີ້ແມ່ຍ່າງ່ານສອງເຂືອນີ້ ໃຫ້ໄປປ້ໍາໄມ້ເຄືອເຂົາກາດເຖິນ ເຖົ້າ
ໄລ່ແມ່ມົດບົງ ສອງຂານີ້ໃຫ້ໄປປ້ໍາໄມ້ໄຮຫລວງ ອັນເຄືອຫມາກ
ນ້ຳກ້ຽວນັ້ນເສັ່ງເຖິ້ນ ແຖນສິວໃຫ້ໄປສິວບ້ານເຕົ້າປຸງຫນ່ວຍພີນັ້ນ
ໃຫ້ຄົນຜູ້ຍິງຜູ້ຊາຍ ຊ້າງເຖິກຊ້າງແມ່ ມ້າເຖິກມ້າແມ່ເຂົ້າຂອງ
ເງິນຄໍາແກ້ວແຫວນ ຜ້າຜ່ອນທ່ອນຈັນຮໍາເພ ແຮຈິນຫາກ
ອອກໃນບ້າເຕົ້າປຸງຫັ້ນຊູ່ເຜືອງຊູ່ອັນແລ ແຖນຊີໃຫ້ໄປຊີບ້າເຕົ້າ
ປຸງຫນ່ວຍນ້ອງນັ້ນໃຫ້ຄົນຜູ້ຍິງຜູ້ຊາຍ ທັງຄວາຍທັງງົວ ທັງ

ແບ້ກັງເບືອງທັງໝູໝາເປັດໄກ່ ແລະອາຫານອັນເປັນຂອງ
ລ້ງງຂອງດູ ທັງຕົ້ນສົ້ມຕົ້ນຫວານບ້າສົ້ມ ບ້າເຕັ້ນ ທັງຕົ້ນພ້າວ
ຕົ້ນຕານກ້ວຍອ້ອຍ ທັງພິກຂີງຜັກຫອມຜັກຫຼຽນຜັກບົ່ວໝາກ
ໄມ້ທັງມວນອັນເປັນຂອງຄວນຄ້ຽວຄວນກິນທັງມວນ ຫາກຈັກ
ອອກມານຳໝາກນ້ຳເຕົ້າປຸງຫນ່ວຍນ້ອງຫັ້ນແລ ແຖນຟ້າຄືນ
ຈຶ່ງໃຫ້ແຖນເຖືອກ ໄປໄຂປະຕູຄຳປະຕູເງິນປະຕູທອງປະຕູເຫລັກ
ໃຫ້ແຖນທັງຫລາຍລົງມາແຕ່ງແປງໃຫ້ແກ່ຂຸນບໍລົມ ຊູ່ອັນຊູ
ສິ່ງຊູ່ເບືອງຫັ້ນແລ ແຕ່ນັ້ນແຖນສິວກໍມາສິວ ນ້ຳເຕົ້າປຸງຫນ່ວຍ
ພີ້ນັ້ນ ແຖນຊີກໍມາຊີນ້ຳເຕົ້າປຸງຫນ່ວຍນ້ອງນັ້ນ ເຂົາທັງມວນ
ກໍວ່າຄົນຜູ້ຍິງຜູ້ຊາຍຊ້າງມ້າງົວຄວາຍ ກໍໄຫລອອກຈາກນ້ຳ
ເຕົ້າປຸງສອງຫນ່ວຍນີ້ຫັ້ນແລ ແຕ່ນັ້ນຄົນທັງຫລາຍຈຶ່ງໄດ້ຊື່
ວ່າລາວເກົ່າ ກໍເພື່ອຄວາມອອກຈາກນ້ຳເຕົ້າປຸງສອງເຕົ້ານັ້ນ
ແລແຕ່ນັ້ນແຖນສິວແຖນຊີຈຶ່ງວ່າແກ່ເຖົ້າເບີເຖົ້າໄລ່ວ່າ ດັ່ງວ່າ
ເຂືອເມືອເມືອງຟ້າແລ້ວເຂືອຈົ່ງປ່າເກືອເຂົາ ທັງຕົ້ນໄຮຫລວງ
ທັງຜານ້ຳເຕົ້າປຸງເສັຍເຖີ້ນ ສູ່ຢ່າເມືອຫາດູທີ່ເມືອງຟ້າພຸ້ນ

ເຖິງ ຕູກໍບໍ່ຫຽວມາຫາສູແລ ຄັນສູທັງສີຕາຍແລ້ວ ຈິ່ງໃຫ້ຄົນ
ເມືອງລຸ່ມເວນຫາສູເຖິງ ຕູກໍສັ່ງຂຸນບໍຣົມໄວ້ນີ້ ຄັນວ່າຄົນເມືອງ
ລຸ່ມຈັກກິນອັນໃດກໍດີ ຄັນວ່າມາເປີສູທັງສີຈິ່ງແລ່ນມາກິນກ່ອນ
ເຖິງແຖນທັງສອງສັ່ງຊູສິ່ງຊູ່ອັນແລ້ວ ກໍຂຶ້ນເມືອຄອບແຖນຟ້າ
ຄົນຫັ້ນແລແຕ່ນັ້ນເຂົາກໍປ້ຳເຄືອເຂົາກາດ ກັນຕົ້ນໄມ້ໄຣຫລວງ
ເສັຍຫັ້ນແລ ຜ່ານ້ຳເຕົ້າປຸງແລຫນ່ວຍ ໃຫ້ເປັນສອງສ່ຽງເສັຍ
ທີ່ແຄມຫນອງຄູວາຫັ້ນແລະບັດນີ້ ເຜືອງນ້ຳເຕົ້າປຸງກໍບັງ
ກາຍເປັນຫີນຢູ່ຫັ້ນແລ ແຕ່ນັ້ນບ້ານເມືອງແຫ່ງຂຸນບໍຣົມທີ່ນາ
ນ້ອຍອ້ອຍຫນູກໍຮຸ່ງແຈ້ງດີນັກແລເຖົ້າເບີເຖົ້າໄລແມ່ຍ່າງ່າມແຍ
ມົດນັ້ນກໍຕາຍໄປເປັນຜີເສື້ອ ເມືອງຕາຍຕໍ່ເທົ້າບັດນີ້ແລແຕ່ນັ້ນ
ໄປພາຍຫນ້າຂຸນບໍຣົມຈິ່ງໃສ່ໄຮ່ໃສ່ນາ ປູກແປງທ້າວພຣະຍາ
ຫັ້ນແລຂຸນສຣີທມມະຣາຊ ໃຫ້ເປັນແສນເມືອງ ແຕ່ງຮັກສາໄພ່
ໄທທັງມວນ ຕາງຂຸນບໍຣົມ ຂຸນແສງໃຫ້ເປັນຫມື່ນຫລວງກາງ
ເມືອງຮັກສາຄົນທັງມວນ ຂຸນສານໃຫ້ແຕ່ງເຄື່ອງເສິກ ເຄື່ອງ
ວຽກທັງມວນ ເບື້ອງຂວາຂຸນພີ ໃຫ້ຮັກສາເຄື່ອງເສິກເຄື່ອງ

ວຽກທັງມວນ ກ້າຊ້າຍຂຸນສານ ຜູ່ຊື່ທ້າງຊ້າງດອນຂຸນບໍຣົມ
ໃຫ້ຮັກສາຣາຊວັດກ້າຫນ້າທັງ ໄດ່ຖ້ອຍສວນຄວາມທັງມວນຊູ່
ອັນຂຸນອິນໃຫ້ຮັກສາຣາຊວັດກ້າຫລັງ ທັງໄດ່ຖ້ອຍສວນຄວາມ
ດອນຂຸນສານ ຂາທັງສອງນີ້ແຕ່ງພິຈາຣະນາຕາງຂຸນບໍຣົມ
ໃຫ້ຊອບທັມ ຂຸນທັມມະຣາຊ ອັນເປັນແສນເມືອງນັ້ນ
ແຕ່ງຮັກສາຊູ່ສິ່ງຊູ່ເບື່ອງ ບໍ່ໃຫ້ເຄືອງໃຈຂຸນບໍຣົມສັກ ເບື່ອງ
ແລ ແຕ່ນັ້ນມາ ຈິ່ງຕັ້ງໃຫ້ເປັນຫົວເລີກຫົວ ວຽກເພື່ອອັນແລ
ບັດນີ້ ເມືອພາຍຫນ້າຂຸນບໍຣົມຈິ່ງໃຫ້ຫາບົວທາບາງອັນອອກ
ທີ່ນ້ຳເຕົ້າປຸງຫນ່ວຍພີ່ນັ້ນ ຜູ່ມີລັກສນະກິຈອັນດີອັນງາມນັ້ນ
ມາເປັນລູກສະໃພ້ທັງ ໗ ຄົນນັ້ນແລ ແລ້ວຈິ່ງມາແຕ່ງເອົາຄົນ
ຜູ່ເປັນເຈົ້າເປັນຂຸນ ແບ່ງປັນລູກຊາຍທັງ ໗ ນັ້ນ ຈິ່ງເລົາ
ແຕ່ງເອົາໃພ່ເອົາຄົນ ຜູ່ຄວນອັນເປັນໃພ່ໃຫ້ແກ່ເຂົາເຈົ້າຊູ່ຄົນ
ນັ້ນແລ ຈິ່ງເອົາໄມ້ເຄືອເຂົາກາດທັງ ໄມ້ໄຣຫລວງຕົ້ນໃຫຍ່ນີ້ມາ
ແປງດ້າງສານ ວ່າໃຫ້ແກ່ລູກຊາຍທັງ ໗ ຄົນແລຄົນແລສານ
ດວງຫັ້ນແລ ແຕ່ນັ້ນ ຊ້າງງາກ້ຽວງາ ກອດອັນລົງມາບໍານັ້ນກໍ່

ດາຍເສັງ ຈຶງເອົາງາມາເຄືອ (ເລືອຍ) ເປັນ ໆ ທ່ອນໃຫ້ແກ່ລູກທັງ ໆ ຄືນເຄືອງຫອກເຄືອງດາບ ເຄືອງແກ້ວເຄືອງແຫວນທັງມະນອັນແຖນຟ້າຄືນໃຫ້ແຕ່ເມືອງຟ້າມານັ້ນ ກໍມາແຈກມາປັນໃຫ້ແກ່ລູກຊາຍທັງ ໆ ນັ້ນແລ ແລ້ວຈຶງຫາມື້ດີວັນດີນັກຂັດຕະ ຣືກ ທັງມວນ ອັນຢູ່ໃນ ໑໒ ຣາສີອັນເປັນອຕະມະຣາສີອັນປະເສີດຊູດວ ແລ້ວຈຶງເອົາລູກຊາຍທັງ ໆ ມາໄວ້ຊັຍງຫນ້າຕີນກັນ ເສນາອຳມາດທັງຫລາຍຕາມຮີດຄອງດັ່ງແຖນຟ້າຄືນແຕ່ງລົງມາໃນເມືອງລຸ່ມນັ້ນແລ ຈຶງມາຣາຊາພິເສກເອົານ້ຳໃສ່ໄຕ່ຄຳອັນໃຫຍ່ ຈຶງເອົາມີລູກຊາຍທັງ ໆ ຄືນທັງລູກສະໃພ້ທັງ ໆ ຄືນມາສົບໃສ່ໄຕ່ຄຳ ແລ້ວແລໃຫ້ພຣະພອນອັນວີເສດວ່າ ເຈົ້າທັງຫລາຍໄປກິນບ້ານ ກິນເມືອງຕາມຄວາມແຖນຊຸຊຸນອນຊູ້ທີ່ແຕ່ເມືອງຟ້າໃຫ້ນັ້ນ ທັງຄວາມກູພໍ່ຈຶງບອກກາວແກ່ສູທັງຫລາຍນັ້ນນີ້ແລ ໄປກິນບ້ານກິນເມືອງປົກຂັຍນຫອນໃພ່ ຢ່າເຮັດໃຈຮ້າຍໃຈດຽດ ຢ່າເຮັດໃຈສັ້ນໃຈຫລອນ ຢ່າມັກຕີມັກດຽນທ່ານ ຢ່າມັກຂ້າມັກຟັນ ກັບກະທຳຕາມໃຈຕົນ ໃຫ້

ກ່ອງ ອ່ານດູຊະເບື້ອງກອນ ຮູ້ແຈ້ງແລ້ວຈຶ່ງກະທໍາ ອັນນຶ່ງນັ້ນຜູ້ຍິງ
ຜິດສິ່ງໃດກໍດີຢ່າຂ້າຢ່າຟັນເສັ່ງ ແຖນຟ້າຄືນສັ່ງກູພໍ່ສິ່ງນັ້ນແດ່
ເມືອງຟ້າຟຸ້ນ ວ່າຢ່າຂ້າຢ່າຟັນຜູ້ຍິງເສັ່ງເຫດວ່າຜູ້ຍິງນີ້ ແດ່
ປະຖົມກັບພຸ້ນເຂົາຫາກເປັນເຄົ້າເປັນເດີມມາ ທ້າວພຣະຍາ
ຜູ້ໃດຍັງຂ້າຜູ້ຍິງ ຍ່ອມບໍ່ຫມັ້ນບໍ່ຍືນ ບ້ານເມືອງອັນນັ້ນຍອມເສົ້າ
ສູນເສັ່ງ ແຖນຟ້າຄືນສັ່ງກູພໍ່ສິ່ງນີ້ດີຫລີກາຍ ສູເຈົ້າທັງຫລາຍ
ໄປກືນບ້ານກືນເມືອງຕາມຄວາມກູພໍ່ ບຸນໃຜມີຫາກໄດ້ທີ່ກວ້າງ
ທີ່ຂວາງຫັ້ນແລ ຢ່າຂີ້ຊ້າງຕີກະ າພາແພນຕີກທັງກັນ ເມືອງ
ອ້າຍໄວ້ແກ່ອ້າຍເມືອງນ້ອງໄວ້ແກ່ນ້ອງ ລູກສືບລູກ ຫລານສືບ
ຫລານ ເຫລນສືບເຫລນຫມັ້ນໃຊ້ຖາມຂ່າວກ່າວເຊີງກັນຜູ້ໃດ
ໄດ້ເຄື່ອງຫລາກຂອງຕ່າງໃນບ້ານໃນເມືອງ ໃຫ້ມາສິ່ງມາຖວາຍ
ແກ່ກັນຜູ້ໃດຟັງຄໍາກູພໍ່ດັ່ງນີ້ ທັງລູກຫລານເຫລນອັນໄດ້ຮ້ອຍ
ຊີວພັນຊີວແສນຊີວໃຫ້ຫມັ້ນໃຫ້ ຍືນເຖິງ ຜູ້ໃດບໍ່ຟັງຄໍາກູພໍ່ຊີວ
ຢ່າຣີປີຢ່າກວ້າງ ຜູ້ໃດຟັງຄວາມກູໃຫ້ຫມັ້ນໃຫ້ ຍືນເຖິງອັນນຶ່ງ
ຊຸບບໍ່ຣົມຈຶ່ງວ່າລູກໄພ້ກູ ໆ ຄົນນີ້ ບອນໃຫ້ນອນລຸນຜົວຕື່ນກອນ

ຜົວ ໃຫ້ຄຶດຫາວຽກການຜົວອັນ ຈັກປຸນຕາງຜົວໃຫ້ ຄຶດຫາອັນ
ຈັກຕ່ໍາຫູກເຂັນຝ້າຍ ໃຫ້ຄຶດຫາອັນຈັກລ້ຽງ ຂ້າ ລ້ຽງໄທໃຫ້ຄຶດ
ຫາອັນຈັກກະທໍາໄຮ່ນາທໍາກິນ ທ່າລອນ ອັນນຶ່ງໄຟໃນເຮືອນຢ່າ
ເອົາໄປ ນອກເຮືອນ ໄຟນອກເຮືອນຢ່າເອົາໄປໃນເຮືອນຄືວ່າຜູ້ໃດ
ມາວ່າຮ້າຍຜູ້ໃດມາສ້ມາ ສົນ ກໍດີ ໃຫ້ພິຈາຣະນາດູກ່ອນຄວນ
ບອກຄວນເລົ່າຕໍ່ຜົວ ກໍຈິ່ງເລົ່າ ບໍ່ຄວນເລົ່າກໍ່ຢ່າເລົ່າຄວນໃຫ້
ແລ້ວແກ່ຄົນ ອັນນຶ່ງໃຫ້ເອົາຜູ້ບົງສື ຄົນ ຜູ້ຮູ້ດີສານະຄົນສອງຄົນກໍ
ດີມາໄວ້ພ່າງໄວ້ໃກ້ຈັກກະທໍາອັນໃດໃຫ້ ອືໃຫ້ ບົນເຂົາທັງ ສີຄົນ
ນັ້ນດູກ່ອນ ແມ່ນແລ້ວຈິ່ງກະທໍາ ອັນນຶ່ງຕົວລູກໄພ້ກູທັງ ໆ
ຄົນນີ້ສູເຈົ້າຢ່າຂ້າ ສັດແມ່ນະເພີນຈໍາໃຫ້ຂ້າກໍຢ່າ ແມ່ນຂ້າຄົນກໍ
ດີຢ່າພ້ອມຢ່າຈ່າເພີນຂ້າ ອັນນຶ່ງຢ່າລັກຂອງຜົວຂອງທ່ານຜູ້
ອື່ນກໍດີ ອັນນຶ່ງຢ່າຫລິ້ນຊູ້ກັບຜົວແມ່ນວ່າຝັງກາງວັນກາງຄືນ
ກໍດີ ກໍຢ່າໄດ້ ບົນດີດອມນັບຜູ້ນັ້ນເຖິນ ອັນນຶ່ງຢ່າລ່າຍຖ້ອຍ
ລ່າຍຄ່າ ອັນມີຈິ່ງວ່າມີບໍ່ມີຢ່າວ່າມີ ອັນນຶ່ງຢ່າກິນເຫລົ້າກິນ
ຢາໃຫ້ເມົາຍ່ອມເສັຽສົມບັດປັນຍາດີຫລື ດາບ ອັນນຶ່ງບານໄຮ່

ໃຖມາໃຫ້ບອກໃຫ້ເຕືອນ ຄົນ·ທັງຫລາຍ ອັນນຶ່ງເຖິງຍາມຫລີ້ນ
ມະໂຫຣະສົບ ກໍໃຫ້ບອກໃຫ້ເຕືອນຄົນທັງຫລາງຫລີ້ນໃຫ້ມ່ວນ
ງັນ ເຖິງຍາມກະທຳກໍໃຫ້ບອກໃຫ້ເຕືອນຄົນທັງຫລາຍໃຫ້ພ້ອມ
ກັນເຮັດເພື່ອສັບພັນຍູເຈົ້າ ເກີດມາເປັນສັບພັນຍູເປັນພຣະ
ແລ້ວ ຍັງ ໄປ່ ໂຜດ ສັດ ທັງຫລາຍໃນເມືອງໄທຍ່ໄປ່ທັນມາເຖິງ
ເຮົາດີຫລີດາຍ ກູພໍ່ກໍສອນເຈົ້າທັງຫລາຍ ຕາມປູ່ສູເຈົ້າແຖນ
ຟ້າຄືນສັ່ງສອນດູແຕ່ເມືອງຟ້າມາກໍສິງດຽວນີ້ແລຈິ່ງໃຫ້ເອົາ ມື
ເຂົາ ເຈົ້າອອກຈາກໄຕຄຳອັນໃສ່ບ້ານັ້ນຫັ້ນແລ ຈຶ່ງໃຫ້ເສນາອາ
ມາດທັງຫລາຍ ທີດສິງ ສູ່ເຂົ້າສູ່ຂວັນອຸສາພິເສກແລ້ວ
ຂະບໍຣິມຣາຊາທີຣາຊທັງນາງຍົມມະພາລາ ກັບທັງນາງເອັດ
ແຄງແລະເສນາອຳມາດພ້ອມກັນ ຈິ່ງໃຫ້ຂຸນຂຽນດາບແກ້ວ
ດາບຄຳ ໃສ່ຊື່ຂຸນລໍ ໃຫ້ເມືອກິນເມືອງຊວາ ລ້ານ ຊ້າງຊຽງດົງ
ຊຽງທອງ ອັນທີ່ເຈົ້າຣັດສີກົດໝາຍບ່ອນທີ່ໄວ້ຫັ້ນແລ ຈິ່ງ
ຂຽນດາບຄຳໃສ່ຊື່ວ່າຂຸນລ້ານ ໃກ້ເມືອກິນເມືອງຫົວອງແຕ່ນ້ຳ
ຫ້າຍຊາຍຄຳວິດທີຣາດພຸ້ນ (໑) ຈິ່ງມາຂຽນດາບຄຳອັນນຶ່ງໃຫ້

---

(໑) ວິເທຫະຣາຊພຸ້ນ ໆ

ແກ່ຂຸນລົງໃຫ້ເມືອກິນເມືອງຈຸລນີພຣົມທັດຣາດ ຈິ່ງຂຽນດາບ
ຄຳອັນນຶ່ງໃຫ້ແກ່ຂຸນຄຳພວງ ໃຫ້ເມືອກິນເມືອງກຸນກາມໂຍນົກ
ຣາຊລະ ພູນ ຊຽງໃຫມ່ ຈິ່ງຂຽນດາບຄຳອັນນຶ່ງໃຫ້ຂຸນອິນໃຫ້
ເມືອກິນເມືອງລະໂວ້ໂຍທິຍາ ຈິ່ງຂຽນດາບຄຳອັນນຶ່ງໃຫ້ແກ່
ຂຸນເຈັດເຈືອງ ໃຫ້ເມືອກິນເມືອງພວນຕາວັນອອກ ຈິ່ງ
ຂຽນດາບຄຳອັນນຶ່ງໃຫ້ແກ່ຂຸນເຈັດຈຽງໃຫ້ເມືອກິນເມືອງມ່ວນ
ຫັ້ນແລ

ຂຸນບໍຣົມຣາຊາທິຣາດປູກລູກຊາງ ໃຫ້ກິນບ້ານກິນເມືອງ
ຕາມຄວາມແຖນຟ້າຄືນແຖນຊີ້ ແຖນແຕ່ງຫັ້ນແລ ແຕ່ນັ້ນເລົາ
ຊ້ຳສັ່ງສອນວ່າດັ່ງນີ້ ຄັນເຈົ້າທັງຫລາຍຈັກໃຫ້ມີຮູບມີໂສມ
ອັນດີງາມດັ່ງນັ້ນ ໃຫ້ຮັກສາສິນຫ້າ ສິນ ໆ ໃຫ້ມີເບົາປັນ
ຍາອັນຈັກໃຫ້ໄປນຳວັນມີທີ່ໃຫ້ທານ ພໍ່ ແລ້ວເຈົ້າທັງຫລາຍໄປ
ກິນບ້ານກິນເມືອງດີແລ ມີສິນບັດເຂົ້າຂອງໃຫ້ແຈກເປັນ ໆ
ສ່ວນພໍ່ເນີ ສ່ວນນຶ່ງໃຫ້ໃສ່ເລັ້ມສາງໄວ້ຂັບບ້ານເມືອງ ສ່ວນ
ນຶ່ງໃຫ້ບຸ່ງໃຫ້ກິນພໍ່ເນີສ່ວນນຶ່ງ ໃຫ້ທານແກ່ລູກແກ່ເມັຽ ຂ້ອຍ

ຄົນທັງຫລາຍປູງປູ່ໃຊ້ຊອງດິນສ່ວນນຶ່ງ ທານແກ່ພະຣະສົງຄະ
ເຈົ້າຜີບໍ່ມີໃຫ້ທານແກ່ເຈົ້າຣັດສີແກ່ ຄົນອັນມີສົນພໍ່ເນີ ສ່ວນນຶ່ງ
ໃຫ້ທານແກ່ເສນາອາມາດ ຜູ້ຈັກອາສາໃຫ້ແລ້ວກົດ
ແຫ່ງດິນສ່ວນນຶ່ງໄວ້ຕະບແຂກອັນຈັກມາ ໄຫວ້ມານົບດິນຂອງ
ເຂົາທີ່ໄດໃຫ້ ຕະບ ຂອງ ທີ່ ຂອງ ເຂົາ ນັ້ນ ເຖິງສ່ວນນຶ່ງໃຫ້ທານ
ແກ່ຍາຈົກຄົນຂ້ຝູງ ທຸຫະນະກ ຕາບຂດຄົນທຸກໄຮ້ ຂືນໃຈນັ້ນ ພໍ່
ເນີ ຂອງທັງຫລາຍຝູງນີ້ ກໍຫາກຈັກໄປບໍາລຸງທັງຫລາຍຊູ່
ທີ່ພໍ່ ເລະອັນນີ້ຄໍາປູ່ສູ່ເຈົ້າແຖນຟ້າຄືນຫາກ ໄດ້ສັງ ສອນ ກູ ພໍ່
ແລ ຂຸນບໍຣົມຣາຊາທິຣາດ ສັ່ງສອນລູກຊາຍລູກລະໃພ້ທັງ
ຄົນກໍແລ້ວ ເທົ່ານີ້ກ່ອນແລ.

ຂຸນລໍ ລົງມາ ຕັ້ງ ເມືອງຊວາ (ຫລວງພຣະບາງ)

ນັບແຕ່ຂຸນບໍຣົມລົງມາຕັ້ງເມືອງລຸ່ມໄດ້ ໒໕ ປີຂຸນລໍໃຫຍ່
ມາໄດ້ ໒໐ ປີ ກໍລ່ວງມາຕັ້ງເມືອງຊວາລ້ານຊ້າງ ທີ່ຊຽງດົງຊຽງ
ທອງ ອັນເຈົ້າຣັດສີແຮກຫມາຍໃສ່ຫລັກຄໍາຫລັກເງິນ ໄວ້ ທີ່

ກ້ອນກ່າຍຟ້າຫັ້ນແລຍາມນັ້ນ ຂ້າກັນຣາງປູ່ຫັ້ນຂຸນລໍຈຶ່ງມາແລ

ແພ້ ໄລ່ເອົາເມືອພູເລົາພູຄາຈິ່ງເປັນຂ້າເກົ່ານັ້ນີ້ແລ ອັນນີ້
ແມ່ນຂ້າກັນຣາງແລ.

ຍັງມີຄົນຊູນນຶ່ງ ແມ່ເຂົານັ້ນຊື່ວ່ານາງກາຣະຣິມີເລືອ ພ
ເອົານັ້ນເປັນຄົນມາເອົາກັນເປັນຜົວເມັຽຈິ່ງມີລູກ ເຂົາໄລ່ລູກພ
ພີ່ນັ້ນ ຊື່ຂຸນເຄັດ ຜູ້ນ້ອງວ່າຂຸນຄານເຂົາຢາກມາຕັ້ງທີ່ຊຽງ
ດົງຊຽງທອງ ບໍ່ເຂົານ້ອຍມາຕັ້ງບໍ່ໄດ້ ເຂົາຈິ່ງໄປຕັ້ງທີ່ຊຽງ
ອັນເຮົາວ່າຂຶ້ງນອກນັ້ນີ້ແລ ບ່ອນຫັ້ນເປັນບ້ານເມືອງເຂົາ ຂຸນ
ລໍຈິ່ງໄປເລວເອົາ ແຕ່ນັ້ນເຂົາກໍເອົາຣົບພົບມາຮອດທ້າຍຂັ
ຫັ້ນຂຸນລໍກໍໄປເລວໄດ້ ຈິ່ງກັນຂຸນລໍກໍເລົາແພ້ໄລໄປ ກໍໄດ້ຂຸນ
ເຄັດຂຸນຄານທີ່ຊຽງງອດທັງພໍ່ທັງລູກ ເອົາໄປຈົມນໍ້າເສັ່ງທີ່ດອ
ສິງຫັ້ນແລ ເຊື້ອແນວຂຸນຄານກໍພ່າຍໜີ ໄປລີ້ຊ່ອນຢູ່ຫັ້ນແລ
ແຕ່ນັ້ນເຈົ້າຂຸນລໍກໍຄືນມາຮອດ ຊຽງດົງຊຽງທອງ ແລ້ວຄົນທັງ
ຫລາຍຈິ່ງອາຊາພິເສກໃຫ້ ເປັນເຈົ້າແຜ່ນດິນຫັ້ນແລ ເຂົາທັງ

ຫລາຍ ຈຶ່ງມາແປງໂຮງບ່ອນເຈົ້າຣັດສີ ເອົາກ້ອນຫີນກ່າຍຟ້າ
ຫມາຍໄວ້ຫັ້ນແລ ຈຶ່ງຣາເທບາເຈົ້າຂຸນລໍເມືອງບັງແທ່ນເງິນ
ແທ່ນຄຳເປັນເຈົ້າແຜ່ນດິນເມືອງສຣີສັດນາຄນຫຸຣ ອຸດຕະມະຣາ
ຊທານີ ເອົາງ່ອນຫມື່ນຫລວງເທົ້າສິບ ໂຮບເປັນຫາງນາກເອົາ
ສິບຄານແລະນ້ຳຂອງກ້າເຫນືອເປັນຫົວນາກ ຈຶ່ງໄດ້ຊື່ວ່າ
ເມືອງສຣີສັດນາກ ເພື່ອດັ່ງນັ້ນແລ ອັນຊື່ວ່າເມືອງລ້ານຊ້າງ
ນັ້ນເບື້ອງເຫນືອເອົາພູຊ້າງນ້ອຍເປັນນິມິດ ຈຶ່ງຮຽກຊື່ວ່າເມືອງ
ລ້ານຊ້າງເພື່ອອັ້ນແລ ອັນນຶ່ງະເຈົ້ຣັດສີຂຽນຫນັງສືໃສ່ໄວ້ໃນກ້ອນ
ກ່າຍຟ້າ ຫັ້ນຫນ່ອຍນຶ່ງ ອັນຫມາຍບ່ອນຊຽງທອງນັ້ນໄວ້ໃຫ້ຜູ້
ໃດຈັກເປັນທ້າວພະຍາໃນທີ່ນີ້ໃຫ້ມີສິນ ໕ ສິນ ໘ ເຫດເພື່ອສັບ
ພັນບູເຈົ້າຍັງຈັກມາໂຜດສັດທັງ ຫລາຍ ຮອດບ້ານເມືອງ
ອັນນີ້ ດີຫລີດາຍ ຜູ່ໃດຈັກເປັນເຈົ້າ ໃນເມືອງອັນນີ້ ຈຶ່ງ
ໃຫ້ທານ ແກ່ສັດທັງຫລາຍທຸກວັນ ຢ່າໃຫ້ຂາດສັກວັນ
ເຖິງ ພາຍຫນ້າພຸ້ນ ດັ່ງສາສນາພຣະພຸທເຈົ້າມາຮອດ ມາ
ເຖິງໃນບ້ານ ໃນເມືອງອັນນີ້ ເລົ່າເຮັ່ງໃຫ້ທານແກ່ພຣະພຸທເຈົ້າ

ພຣະທັມມະເຈົ້າ ພຣະສັງຄະເຈົ້າ ໃຫ້ເຊື່ອໃສໃນຄຸນແກ້ວສາມປະກາບ ເຫາວ່າລາສບາເປັນເຈົ້າແຜ່ນດິນ ນີ ຝີ ຊິວຈ້າແຜ່ນດິນກຸຊີ່ະເຈົ້ ແຜ່ນດິນເຂົາຈຶ່ງເອົາບາຫລວງໂງ່ນມາເປັນເຈົ້າແຜ່ນດິນ ມີລູກ ໙ ຄົນຜູ່ຍິງ ໔ ຄົນ ລູກ ໙ ຄົນນີ້ເຮົາບໍ່ຈາກ່ອນແລ ເຮົາທໍ່ຈັກຈານຸ້ກົບເນື່ອງແທນຫລວງໂງ່ນແລ.

ທ້າວຟ້າງຸ່ມ

ຖຶກຂັບຫນີຈາກເມືອງ

ເຂົາຈຶ່ງເອົາ ບາຄຳຮຽວຜູ່ເປັນລູກອ້າຍ(໑) ມາເປັນເຈົ້າແຜ່ນດິນແທນ ບາຄຳຮຽວມີລູກ ໔ ຄົນ ຜູ່ຍິງສອງ ຜູ່ຊາຍສອງຜູ່ນ້ອງຫລ້ານັ້ນມີແຂ້ວຂອກ ມີ໓ ເຫລັ້ມແຕ່ໃນທ້ອງອອກມາເສນາອຳມາດທັງຫລາຍວ່າເຂັດວ່າຂວາງຈັກແພ້ບ້ານແພ້ມາເມືອງວ່າດັ່ງນັ້ນ ເຂົາຈຶ່ງເອົາໃສ່ແພໂຫລເສັງ ເອົາຂ້ອຍລ້ຽງທັງມວນໃສ່ແພໄປດອມຜູ່ນຶ່ງຊື່ບາຄຸ້ມ ຜູ່ນຶ່ງຊື່ບາກົມ ຜູ່ນຶ່ງຊື່

(໑) ລາງບອນບອກວ່າ ບາຄຳຮຽວເປັນອາວຂອງຟ້າງຸ່ມ ຯ

ບາໄບ ຜູ່ນຶ່ງຊື່ບາສຸນ ຜູ່ນຶ່ງຊື່ບາຈິແຂ້ ຜູ່ນຶ່ງຊື່ບາລູ
ຂ້ອຍລ້ຽງທັງຫລາຍຝູງນີ້ ທັງຂ້ອຍຍິງຂ້ອຍ ຊາຍ
ທັງມວນ ໕໕ ຄົນ ໄຫລແຕ່ຊຽງວົງ ຊຽງທອງ ໄປດອນເຈົາ
ເຂົາຫັ້ນແລ ບາງຍາຄຳຮຽວຜູ່ເປັນແມ່ຈິງອຸ້ມໄປຮອດແພອັນ
ຈັກໄຫລເສັຽນັ້ນ ຈິງເອີ້ນປ່າວເທວະດາແລະພຣະຍານາກທັງ
ຫລາຍວ່າ ໃຫ້ຮັກສາລູກຂ້ອຍຜູ່ນີ້ ຢ່າໃຫ້ ຈິບຫາຍເສັຽແດ່
ເສນາທັງຫລາຍວ່າເຂົ້າວອອກແຕ່ໃນທ້ອງ ໕໕ ເຫລັ້ນເຂົາ
ວ່າເປັນຄົນຮ້າຍວ່າເຂົາດ່າຂວງແລໃຫ້ ໄຫລເສັຽ ຄັນວ່າບຸນລູກ
ຂ້ອຍບັງມີຂໍ ຢ່າໃຫ້ລົ້ມໃຫ້ຈົມເສັຽ ໃຫ້ໄດ້ມາເປັນເຈົ້າແຜ່ນດິນ
ໃນຊຽງວົງຊຽງທອງ ດ້ວຍອັນຊອບໂລກຊອບທັມຢ່າໃຫ້ໄດ້
ດ້ວຍທຸກຍາກຊ້າກາອຸບເຖີນ ແມ່ຈິງຝາກເທວະດາສິ່ງນັ້ນ ຈິງ
ສັ່ງຂ້ອຍລ້ຽງທັງມວນນັ້ນວ່າ ລູກກູນີ້ດີກທີໃດໃຫ້ລູວ່າພຣະ
ບາ ຢ່າໃຫ້ວ່າລູກຟ້າ ຄຳຮຽວ ແມ່ຈິງໃສ່ຊື່ສິ່ງນັ້ນແລະຂາວຈິງ
ໄຫລໄປ ແມ່ກໍນຳໄປສົ່ງຮອດເມືອງຂາບຈິງຄືນແລ ແຕ່ນັ້ນ
ໄຫລໄປຮອດບ້ານໃດເມືອງໃດ ເຂົາກໍໃຫ້ເຂົ້າໃຫ້ຂອງກິນຊູ່ບ້ານ
ຊູ່ເມືອງຈິງໄປຮອດທີວລີ້ພຸ້ນທີເມືອງນຶ່ງ ຊື່ວ່າ ຖ້ານະທາເຖຣ

ປ່າສມັນ ເຂົາຈິ່ງມາເລົ່າຕໍ່ພຣະ ໆ ຈິ່ງໄປອຸ້ມເອົາອອກມາ
ຈາກແພອັນໄຫລເສັງບັ້ນເມືອກອນດິນ ຫັ້ນແລ ນັບແຕ່ເຈົ້າ
ໄກບ່ມາໄດ້ ໓ ປີ ໄຫລເສັງໄດ້ ປີນຶ່ງ ຈິ່ງມາຮອດທ່າພຣະສະ
ມັນພຣະລ້ຽງໄວ້ສາມປີ ພຣະຍານະຄອນຫລວງຈິ່ງເອົາເມືອ
ລ້ຽງໄດ້ ໗ ປີ ທັງມວນເປັນ ໑໔ ປີ ພຣະຍານະຄອນຫລວງຈິ່ງ
ໃຫ້ລູກສາວໄດ້ ໖ ປີ ພຣະຍານະຄອນຈິ່ງເອົາຫມໍຫູຣາທັງມວນ
ມາດູຊາຕາແລ ນັກຂັດຕະອຶກເມືອງລ້ານຊ້າງ ຫມໍຈິ່ງທວາຍ
ວ່າ ພໍ່ເຈົ້າບໍ່ແມ່ເຈົ້າບໍ່ຕາຍແລ້ວ ເຂົາຈິ່ງເອົາອາວເຈົ້າເປັນເຈົ້າ
ແຜ່ນດິນ ທີ່ຊຽງດົງຊຽງທອງເຫັນແລ ພຣະຍານະຄອນ
ຫລວງຈິ່ງວ່າເຮົາຈັກແຕ່ງ ອິພົນຄ້າລິງເມືອປູກບ້ຽງຈັກໄດ້ເປັນ
ເຈົ້າແຜ່ນດິນ ທີ່ຊຽງດົງຊຽງທອງບໍ່ຈາ ຫມໍທັງຫລາຍຈິ່ງວ່າ
ຢາວ່າໄດ້ແຕ່ຊຽງດົງຊຽງທອງດຸ້ນ ບ້ງຈັກໄດ້ເມືອງໃບ ທີ່ຍາ
ທັງເມືອງຊຽງໃຫມ່ ທັງເມືອງລື້ເມືອງເຂີນ ທັງເມືອງຈຸລນີ
ແຕ່ຟາກນ້ຳແມ່ແຫມນາພີ້ ຕໍ່ເທົ້າເມືອງນີ້ຮ້ານກ້ອນມີເສົາຫີນ
ສຸມເສົ້າບ້ຳເຕົ້າ ສາມແຄວ ຜຸ້ນດີຫລືຫມໍຫູຣາພຣະຍາເມືອງ

ນະຄອນຫລວງວ່າດັ່ງນີ້ ຫາກບໍ່ວ່າເຈົ້ານີ້ທໍ່ໄດ້ຕາຍໃນຊຽງດົງຊຽງທອງ ຈັກໄດ້ຕາຍໃນເມືອງອັນນຶ່ງເບື້ອງຕະວັນຕົກ ດ້ວຍວຸທິສວັສດີແລ ຫມໍທັງຫລາຍວ່າດັ່ງນັ້ນ ແຕ່ປູ່ປີນຶ່ງ ພຣະຍານະຄອນຫລວງຈຶ່ງແຕ່ງຊ້າງມ້າອິພົນ ໃຫ້ຈິງຣາຊາພິເສກ ໃສ່ ຊື່ວ່າພຣະຍາຟ້າຫລ້າທໍຣະນີຫັ້ນແລ ຈຶ່ງມາແຕ່ງຫມໍຜູ່ຈັກຜາບເສິກ ໔ ຄົນ ຈຶ່ງແຕ່ງເຄື່ອງຜາບເສິກທັງມວນ ໃຫ້ຄ້ອງໄຊ ໔ ຫນ່ວຍ ແສ່ງໄຊ ໔ ຫນ່ວຍ ຈອງຂອງໄຊ ໔ ຫນ່ວຍ ຫອກໄຊ ມີ ດວງ ຂວານໄຊ ໔ ດວງ ແຜນໄຊ ໔ ດວງ ຄົນອນຣັກສາເຄື່ອງໄຊ ໔໐໐ ຈຶ່ງໃຫ້ຫມໍທັງຫລາຍຫາມື້ດີຍາມດີແລ້ວກໍລົງຈາກນະຄອນຫລວງໄປຫັ້ນແລ ກັບທັງລູກຕົນຜູ່ຊື່ວາ ນາງແກ້ວກັບຍາກໍໃຫ້ໄປດອມຫັ້ນແລ

ທ້າວຟ້ ງຸ້ມຕີໄດ້ ເມືອງຕ່າງໆ ຕາມຣະຍະທາງ

ເມື່ອລົງມາຮອດເມືອງ ອັນນຶ່ງຊື່ວ່າພຣົມທັດ ພຣະຍາພຣົມທັດມາຮົບຂາໄດ້ຊົນຊ້າງກັນ ແພ້ພຣະ ຍາ ພຣົມ ທັດຂ້າ

ພຣະຍາພຣົມທັດກັບຄໍຊ້າງ ຈຶ່ງແຈກເມືອງພຣົມທັດປູກຜູ່
ນຶ່ງໃຫ້ເປັນພຣະ ຍາປາກກົບ ຜູ່ນຶ່ງໃຫ້ເປັນພຣະຍາກຸບ
ຊອນ ຜູ່ນຶ່ງໃຫ້ເປັນພຣະຍາຄຳແກງ ຜູ່ນຶ່ງໃຫ້ເປັນພຣະຍາ
ດອນແດງຜູ່ນຶ່ງໃຫ້ເປັນພຣະຍາຈັນທອນ ຜູ່ນຶ່ງໃຫ້ເປັນພຣະ
ຍາອ້າຍຜູ່ນຶ່ງໃຫ້ເປັນພຣະຍາພຣົມທັດແທນທັ້ນແລ ພຣະຍາ
ທັງຫລາຍປູງນີ້ ພຣະຍາຟ້າໃຫ້ເບັງເມືອງສ່ວຍຊ້າງ ສ່ວຍ
ມ້າ ສ່ວຍຂ້ອຍ ແລ້ວພຣະຍາຈຶ່ງເອົາຣິພົນໂຍທາມາຣົບພຣະ
ຍາແປດບໍ່ທີ່ເມືອງ ກຣະບອງທັ້ນແລ ພຣະຍາແປດບໍ່ຂີ່ຊ້າງ
ອອກຊົນບໍ່ທັນຮອດພຣະຍາຟ້າ ພຣະຍາແປດບໍ່ກໍແລ່ນໜີ
ເອົາຈຶ່ງໄປໄລ່ເອົາໄດ້ທັງເປັນມາຈົມນ້ຳເສັງທີ່ປາກທອກທັ້ນແລ
ພຣະຍາແປດບໍ່ຜູ່ນີ້ເປັນປູ່ ພຣະຍາແປດບໍ່ຜູ່ວ່າລູກຍິງໂຕນ
ນ້ຳຕາຍ ເອົາກ້ວານໄປຕຶກເອົາລູກແລໄດ້ພຣະຫີນ ອັນເອົາວ່າ
ພຣະແປດບໍ່ນັ້ນແລ ນັບແຕ່ພຣະຍາກຣະບອງວົງຊົນຊ້າງກັບ
ພຣະຍາຟ້ານັ້ນ ມາໄດ້ ໗ ຊົ່ວ ພຣະຍາແປດບໍ່ ຈຶ່ງມາເຖິງ
ພຣະຍາແປດບໍ່ວົງວ່າລູກໂຕນນ້ຳຕາຍແລ ໄດ້ພຣະຫີນນີ້ແລ

ພຣະຍາຟ້າຈຶ່ງໃຫ້ພຣະຍາກຣະບອງພູ່ນ້ອງແທນຈຶ່ງຕັ້ງອາຊ
ຍາໄວ້ວ່າໃຫ້ສ່ວຍຊ້າງຮ້ອຍນຶ່ງຂ້ອຍຮ້ອຍນຶ່ງຂ້ອຍກັບຊ້າງສອງ
ຮ້ອຍ ໃຫ້ສ່ວຍຄຳສອງພັນ ໃຫ້ສ່ວຍລົວສ່ວຍແພ ສອງ
ຮ້ອຍຮຳ ໃຫ້ສ່ວຍຂ້ອຍບິງຂ້ອຍຊາຍສອງຮ້ອຍ ແລ້ວຈຶ່ງ
ເອົາຣີພົນໄປຣົບພຣະຍາຈຳປາທິຣາດ ແພ້ພຣະຍາຈຳປາທິ
ຣາດແລ້ວຂ້າຕາຍກັບຄໍຊ້າງ ພຣະຍາຟ້າຈຶ່ງໃສ່ຊື່ຜູ້ນຶ່ງ ໃຫ້
ເປັນພຣະຍາຈຳປາທິຣາດແທນ ຜູ້ນຶ່ງໃຫ້ເປັນພຣະຍາຈຳປາ
ນະຄອ ຜູ້ນຶ່ງໃຫ້ເປັນພຣະຍາຈິມ ຜູ້ນຶ່ງໃຫ້ເປັນພຣະຍາຈາມ
ຜູ້ນຶ່ງໃຫ້ເປັນພຣະຍາດອນຊັກແຄ ຜູ້ນຶ່ງໃຫ້ເປັນພຣະຍາສບັງ
ຜູ້ນຶ່ງ ໃຫ້ເປັນພຣະຍາຊຼາງ ຜູ້ນຶ່ງໃຫ້ເປັນພຣະຍາໂສກ ພຣະຍາ
ທັງຫລາຍປູງນີ້ ພຣະຍາຟ້າໃຫ້ເປັນເມືອງສ່ວຍສູດ ສ່ວຍນ່າງ
ສ່ວງດ້າຍ ສ່ວຍໄໝ ສ່ວຍຄຳ ສ່ວຍຊ້າງ ສ່ວຍຈ່າຫງາຍ
ສ່ວຍຂ້ອຍຊູ່ເມືອງທັ້ນແລ ພະຍາຟ້າຈຶ່ງຍໍພົນເຂົ້າມານ້ຳເທີນ
ບູນ ພຣະຍາຄົນນຶ່ງຊື່ວ່າວງງອອກມາຣົບ ເຫັນດູຫລາກແລ້ວ
ພ່າຍໜີ ບາກິນໄປໃສ່ໄດ້ຂ້າເສັຽ ຈຶ່ງໃຫ້ນ້ອງເປັນພຣະຍາ

ເຈັດຈຽງແທນ ຈຶ່ງໃສ່ຜູ້ນຶ່ງໃຫ້ເປັນພຣະຍາກວ້າງສຽນ ຜູ້ນຶ່ງໃຫ້ເປັນພຣະຍາກວ້າງທີ່ງ ຜູ້ນຶ່ງໃຫ້ເປັນພຣະຍາເມືອງຫລວງ ຜູ້ນຶ່ງໃຫ້ເປັນພຣະຍາເມືອງມ່ວນ ຜູ້ນຶ່ງໃຫ້ເປັນພຣະຍາວັງ ຜູ້ນຶ່ງ ໃຫ້ເປັນພຣະກຣະລາກ ຜູ້ນຶ່ງ ໃຫ້ເປັນພຣະຍາຊຸນພອນ ຜູ້ນຶ່ງໃຫ້ເປັນພຣະຍາຊະໂປນ ພຣະຍາທັງຫລາຍຝູງນີ້ ພຣະຍາຟ້າ ໃຫ້ສ່ວຍດ້າຍ ສ່ວຍໄໝ ສ່ວຍຜ້າກັ້ງແລພືດານ ທັງສ່ວຍຂ້ອຍຊູ່ປີ ໃຫ້ມີແຕ່ເດືອນ ໑໖ ເດືອນສາມໃຫ້ຮອດຊູ່ ນືອງທັ້ນແລ ແຕ່ນັ້ນພຣະຍາກໍ່ບົກພົນມາຮອດປາກຊະດິງ ຍັງມີຜູ້ນຶ່ງຊື່ວ່າພຣະຍາສາມຄ້ອນ ມັນເປັນເຈົ້າເມືອງພຣະບ້າຮຸ່ງ ດາພົນໄດ້໔ໝື່ນ ຊ້າງຫ້າຮ້ອຍມາຮົບພຣະຍາຟ້າ ພຣະຍາຟ້າໃຫ້ງາຈືແຂ້ ດືພົນມາຮົບແພ້ພຣະຍາ ສາມຄ້ອນ ບາຈືແຂ້ ໄລ່ເອົາພຣະຍາສາມຄ້ອນ ໄດ້ເອົາມາຈົມນ້ຳເສັຽ ທີ່ປາກບາງບາດທນ ພຣະຍາຟ້າ ຈຶ່ງຍໍພົນມາປູ່ເມືອງພຣະບ້າຮຸ່ງ ຈຶ່ງໃຫ້ຜູ້ນຶ່ງເປັນພຣະຍາພຣະບ້າ ຮຸ່ງແທນພຣະຍາສາມຄ້ອນທັ້ນແລແຕ່ນັ້ນ ຊ່າເມືອຮອດ ພຣະຍາເຈັດຈຽງ

ອັນເປັນເຈົ້າເມືອງພວນຊຽງຂວາງໆ ຈິ່ງແຕ່ງຫມື່ນຫລວງ
ພວນທັງຫມື່ນຄຳມາໄຫວ້ພຣະຍາ ຟ້າ ທີ່ນະຣະບ້າຣຸ່ງຫັ້ນວ່າ
ດັ່ງນີ້ ຜູ້ຂ້ານີ້ຫາກເປັນຫລານເປັນເຫລນເຊື້ອແນວຂຸນບໍ່ ຣົມຣາ
ຊາທິຣາຊເຈົ້າທັງຂຸນລໍ ແຕ່ບູຮານມາດີຫລີດາຍ ໃນກີນີ້ແລພຣະ
ຍາຟ້າເຈົ້າແລຈັກຜາບບ້ານຜາບເມືອງທີ່ໃດກໍດີ ຂ້າຈັກແຕ່ງອິ
ພົນໄປຊ່ອຍໄປ ເຕີມຊູ່ແຫ່ງຊູ່ທີ່ພຣະຍາຟ້າຈິ່ງວ່າດັ່ງນີ້ ພີ່ນ້ອງ
ເຮົາ ແລ ບັງຄິດເຖິງເຮົາດັ່ງນັ້ນກໍຊອບດີແລ ບ້ານເມືອງອັນ
ຫລານເຮົາກັບນ້ອງເຮົາແຕ່ກອນ ທີ່ໃດກໍດີ ໃຫ້ໄວ້ແກ່ນ້ອງ
ເຮົາເຖິ້ນເຄື່ອງເສິກເຄື່ອງວຽກເຄື່ອງເຫລັກອັນໃດກໍດີ ເຮົາຫາກ
ຈັກໃຫ້ມາເອົາດອມ ອັນນຶ່ງບ້ານເມືອງແກ່ເຮົາຜາບໄດ້ ແກ່ເມືອງ
ຈ້າເມືອງມ່ວນກໍໃຫ້ມາໄຫວ້ມານົບແກ່ນ້ອງເຮົາ ພຣະຍາຟ້າ
ວ່າດັ່ງນັ້ນ ແຕ່ນັ້ນເຈົ້າຈິ່ງບໍ່ພົນນຳ ຊວນໄປຣົບພຣະຍານີຣ້ານ
ກວ້ານມີເສົາ ທັງພຣະຍາອ່າງສິງອ່າງຫນາມ ໄລ່ເອົາພຣະ
ຍາທັງສາມເມືອງນັ້ນ ແລ້ວພຣະຍາຟ້າກໍເອົາພຣະຍາທັງ
ສາມເມືອງ ເມືອມອບແກ່ເຈົ້າບົວຫລວງ ເຈົ້າບົວຫລວງກໍ

ຖາມດູເຊື້ອແນວພຣະຍາຟ້າວ່າ ເປັນຫລານເປັນເຫລນຂຸນບໍ
ຣົມຣາຊາທີ່ຣາດສືບໆມາຫລາຍຊົ່ວຫລາຍປາງນັກ ຈຶ່ງມາເຖິງ
ພະຍາຟ້າຫັ້ນແລ ແລ້ວເຈົ້າບົວຫລວງຈຶ່ງວ່າ ຜິວ່າແມ່ນເຊື້ອ
ແນ່ນແນວ ເຈົ້າຂຸນບໍຣົມແທ້ ໃຫ້ແຕ່ເມືອງມີຣ້ານມີກ້າ
ມີເສົາ ແຕ່ຫີນສາມເສົ້ານ້ຳເຕົ້າແກ້ວ ບ້ານເມືອງດົນດອນທີ
ໃດກໍດີ ຟ້າແຖນຫາກແຕ່ງໄວ້ຜົນລົກນ້ຳໄຫລເບື້ອເມືອງລາວໃຫ້
ໄວ້ເຂດແດນ ເມືອງລາວຜົນຕົກນ້ຳໄຫລເມືອເມືອງບົວແຕ່ໃດ
ໃຫ້ໄວ້ເປັນເມືອງບົວແຕ່ນັ້ນ ເຈົ້າ ບົວຫລວງຈຶ່ງແຕ່ງຄ່ານາ
ສາມ ຫມື່ນເງິນນາສາມແສນທັງໄມ້ກຳພັກເຂສນາ ທັງ
ລົ້ວແຮແຜ່ຈົນເປັນອັນມາກອັນຫລາຍນັກ ໃຫ້ແກ່ນາຍຜູ້ຊ້ອນ
ເອົາອາງສົງອາງຫນານເມືອນອນແກ່ເຈົ້າບົວນັ້ນ ມາຖວາຍ
ແກ່ພຣະຍາຟ້າທີ່ແດນເມືອງຫັ້ນແລ ແຕ່ນັ້ນພຣະຍາຟ້າຈຶ່ງ
ໃຊ້ ໃຫ້ພຣະຍາເມືອງມີຣ້ານກວ້າມີເສົາ ແຕ່ງໃຫ້ເອົາສ່ວນຄຳ
ທັງສ່ວນລົ້ວແຮແຜ່ວ້າຍໄຫມຊູ່ອັນ ແຕ່ນັ້ນພຣະຍາຈຶ່ງບໍ່ພົນ
ມານັ້ງທີ່ນາ ນ້ອຍອ້ອຍຫນູ ທີ່ຂຸນບໍ່ເກີດຫັ້ນ ຈຶ່ງໄດ້
ຊື່ວ່າເມືອງແຖນ ເພື່ອແຖນຟ້າຄືນມາແຕ່ງມາແປງຫັ້ນກ່ອນ

ຈຶ່ງເປັນບ້ານເປັນເມືອງມາຕາບເທົ້າບັດນີ້ແລ ບໍ່ເງິນບໍ່ຄຳບໍ່
ແກ້ວບໍ່ທອງບໍ່ເຫລັກນີຊູ່ອັນແລ ພຣະຍາຟ້າໄລ່ຜູ້ນຶ່ງໃຫ້ປັນ
ພຣະຍາທີເມືອງແຖນນາ ນ້ອຍອ້ອຍຫນູຫັ້ນ ຈຶ່ງໃຫ້ຜູ້ນຶ່ງ
ເປັນພຣະຍາເມືອງໃຊ ໄລ່ໃຫ້ຜູ້ນຶ່ງເປັນພຣະຍາເມືອງໄລ່
ໃຫ້ຜູ້ນຶ່ງເປັນພຣະຍາເມືອງກວ້າງໃຫ້ຜູ້ນຶ່ງເປັນພຣະຍາສາມ
ສິບພອງ ເມືອງໂຮມນາ ໃຫ້ຜູ້ນຶ່ງເປັນພຣະຍາກາງ ລ້ານ ຜູ້
ນຶ່ງເປັນພຣະຍາສິງຫ້າວ ຜູ້ນຶ່ງເປັນພຣະຍາເມືອງເງິນ ຜູ້ນຶ່ງ
ເປັນພຣະຍາ ເມືອງວາດ ຜູ້ນຶ່ງເປັນພຣະຍາເມືອງກວ້າງທຶ່ງ
ແຕ່ຟາກນ້ຳແທນມານີ້ ເຈົ້າບົວຫລວງຫາກເວນ ໃຫ້ແກ່ພຣະ
ຍາຟ້າ ພຣະຍາຈຶ່ງ ໄລ່ໃຫ້ເປັນທ້າວເປັນພະຍາ ໃຫ້ເອົາສິ່ງ
ສ່ວຍຄຳສ່ວຍເງິນ ສ່ວຍອ້ອຍສ່ວຍຜ້າກັ້ງຜ້າໄຫມແລພືດານ
ແລະເຄື່ອງເສິກສ່ວຍມ້າທັງອານ ເງິນອານຄຳ ທັງລົ້ະ ແລຫອກ
ແພນທັງມວນ ແລ້ວຈຶ່ງໃຊ້ເນືອເລົ່າແກ່ເຈົ້າບົວຫລວງ ໂດຍ
ດັ່ງຄວາມທັງມວນຝູງນີ້ ເຈົ້າບົວຫລວງວ່າໃຫ້ພີ່ເຮົາຄືນເມືອ
ປູ່ຊຽງດິງຊຽງທອງພຸ້ນເຖີນ ແຕ່ນັ້ນພຣະຍາຟ້າກໍ່ເອົາຣີພົນ

ຂ້າມບ້າອູເມືອເມືອງບຸບໄດ້ບຸບເຫນືອ ສອງຂາພຣະຍາບຸບເອົາ ພົງ ອອກມາຣົບພຣະຍາຟ້າກໍແພ້ ເອົາສອງຂາຂ້າເສັງ ແລ້ວ ຈິ່ງໃຊ້ໃຫ້ເມືອຫາພຣະຍາຊຽງຮຸ່ງວ່າບັງຈັກຣົບຈັກຊົບເຮົາລື? ພະຍາຊຽງຮຸ່ງຈິ່ງວ່າເຮົາ ບໍ່ກໍຫາກເປັນເຊື້ອເປັນແນະ ອັນດຽວ ດາຍເຮົາບໍ່ຣົບບໍ່ເລວພະຍາເຈົ້າແລ ໃຫ້ພຣະຍາເຈົ້າເອົາເຂດ ບ້ານແດນເມືອງແຕ່ບ້ານປີງລວງຂວງເທົ້າເມືອ ບຸບໄຕ້ບຸບ ເຫນືອພຸ້ນ ເປັນເຂດຂອງເມືອງລ້ານຊ້າງເຖິງເຮົາກໍຈັກ ໃຫ້ບົວ ໃຫ້ບາງແກ່ເຈົ້າຟ້າແລ ບັດນີ້ ລູກເຮົາບັງນ້ອຍພາງຫນ້າຈິ່ງ ເອົາເມືອປັດເສືອປູຫມອນແກ່ເຈົ້າຟ້າເຖິງເຈົ້າຊຽງຮຸ່ງຈິ່ງແຕ່ງ ເງິນແສນບີ່ງ ມ້າຮ້ອຍບີ່ງທັງອານເງິນອານຄຳຣຳແຣແພຈິ່ງ ເມືອມາກບັກ ພຣະຍາຟ້າກໍເອົາແລ້ວ ຈິ່ງໃສ່ຈ້ອຍຜູ້ບີ່ງຊົວາ ບາກິນໃຫ້ເປັນເຈົ້າຂວາ ເອົາຈິ່ງຮຽກວ່າຂົວກິນຫັ້ນແລ ແຕ່ ນັ້ນ ພຣະຍາຟ້າ ຈິ່ງລ່ອງມາຮອດເມືອງນ້ອຍ ເຈົ້າ ເມືອງນ້ອຍ ຈິ່ງຂໍເປັນເມືອງກາງຢ້າວກາງເຮືອນ ພຣະຍາ ເຈົ້າຟ້າເຖິງ ພຣະຍາຟ້າ ຈິ່ງໃຫ້ເຖົາສຽງເປັນເຈົ້າ

ເມືອງນ້ອຍທັ້ງແລ ເຖົ້າສຽງແຕ່ງທີເຂົ້າຂວັນ ທັງຜອກພີ

ພີລີເລືອ ພຣະຍາຟ້າ ຊູອັນແລ ແຕ່ນັ້ນພຣະຍາຟ້າລ່ອງ

ນາຣອດ ສິບອູທັ້ງ ເຈົ້າຟ້າຄຳຮຽວຢູ່ນີ້ເປັນ ອາວນ້ອງພໍ່

ພຣະຍາຟ້າ ພໍ່ພຣະຍາຟ້າຕາຍເສັງເຂົາຈິ່ງເອົານບ

ເປັນພຣະເຈົ້າແຜ່ນ ດິນແທນມັນມີລູກຍິງສອງຄົນ ລູກຊາຍບໍ່

ມີມັນກໍຮູ້ວ່າພຣະຍາຟ້າລ່ອງນາຣອດສິບອຸ ມັນກໍປ້ານພຣະ

ຍາຟ້າຂາທັງສອງພີ່ວເມັງລວດກິນງາບຕາຍທັງສອງທັ້ງ ແລ

ຍັງແຕ່ ລູກຍິງທັງສອງ ເສນາອຳມາດມັງກະຄານສິງສະການ

ບໍຣະບວນແລ້ວ ເສນາອຳມາດທັງຫລາຍຈິ່ງເມືອຮາທ

ນາພຣະຍາຟ້າທີສິບອຸພຸ້ນ ມາຣອດຊຽງດົງຊຽງທອງ ແລ້ວຈິ່ງ

ມາຮາຊາພິເສກພຣະຍາຟ້າທັງນະ ງ ແກ້ເກັງຍາອັນເປັນ

ລູກພຣະຍານະຄອນຫລວງນັ້ນ ໃຫ້ເປັນເຈົ້າ ແຜ່ນດິນໃນຊຽງ

ດົງຊຽງທອງ ໃຫ້ປູລ້ຽງເປັນແສນເມືອງໃຫ້ກາລ້ຽງເປັນຫມື່ນ

ຫລວງໃຫ້ອາວລ້ຽງເປັນພຸມເໜືອໃຫ້ນ້າລ້ຽງເປັນພູມໃຕ້ໃຫ້ພີ

ລ້ຽງເປັນພຣະຍາກຣະຊັກ ຂ້າພູທັງນວນໃຫຂືນລີງ ດອນພຣະ

ຍາກະຊັກທັ້ງແລ ຂຶ້ນໂຮງຂຶ້ນສານຂຶ້ນຟ້າຂຶ້ນແຖນ ໃຫ້ພຣະ
ຍາກຣະຊັກຂຶ້ນກ່ອນ ຈຶ່ງໃຫ້ແປງໂຮງຫລັງນຶ່ງໃຫ້ນັບປູ່ກ້າຍ
ໂຮງຊຽງກອງຫັ້ນ ຂອງຝາກອັນເຂົາມາຍື່ນມາຖວາຍແດ່ເຈົ້າ
ແຜ່ນດິນ ກໍໃຫ້ນັບຮັບເອົາກອນແຕ່ງແປງຊູ່ອັນນັບຈຶ່ງໃສ່ຜູ້ນຶ່ງ
ໃຫ້ຣັບລາງ ເຂົາຈຶ່ງວ່າຣາມຣາຊ ອັນ ທັງຫລາຍວ່າຫມື່ນ
ຣາຊບັວ ນີ້ແລ

ຂຶ້ນໄປເວີຊຽງແສນ

ແຕ່ນັ້ນພຣະຍາຟ້າຈຶ່ງເອົາພົນ ຂຶ້ນເມືອລ້ານງາຫາງ
ບ້ານຂອງ ຈຶ່ງໄວ້ນາງແກ້ວເກັງຍາ ກີເມືອງຊຽງດົງຊຽງທອງ
ຮັກສາແຜ່ນດິນ ເທົາເພື່ອນາງທະຣາງກັບໄດ້ສາມເດືອນແລ້ວ
ພຣະຍາກໍຂຶ້ນເມືອຮອດເກົ່າຫົວເຮືອ ເມືອງເລີກຫັ້ນ ຍັງມີ
ລູກອ້າຍຊື່ຫູວຜູ້ ນຶ່ງມັນເປັນລູກນາງແກ້ວມະ ຫາຣີ ຮຽກຊື່
ທ້າວອູລອງມັນເປັນຫລານ ຟ້າຄຳຮຽວ ມັນຈຶ່ງອອກມາໄຫວ້
ພຣະຍາຟ້າທີທ່າສວງາຄຳຫັ້ນ ພຣະຍາອູລອງຈຶ່ງວ່າຂ້ອຍ

ນີ້ເປັນລູກນາງ ແກ້ວມະຫາຣີ ແມ່ຂ້ອຍນີ້ເປັນລູກຟ້າຄຳຮຽວ ກໍຫາກເປັນວົງສາແຫ່ງເຈົ້າກູດາຍ ພຣະຍາຟ້າຈິ່ງວ່າພີ່ວ່າ ເປັນດັ່ງນັ້ນແທ້ ເມືອງເລີກນີ້ເຈົ້າຈົ່ງກິນະຖົນ ໃຫ້ເປັນເມືອງ ກາງເຮືອນກູເຖີນ ແລ້ວພຣະຍາຟ້າຈິ່ງຂຶ້ນ ເມືອຢູ່ສິບ ແປ່ງແລ້ວ ຈິ່ງໃຫ້ຂຶ້ນເມືອເອົາລ້ານເມືອງຮຸນ ລ້ານ ເມືອງແປ່ງ ໄດ້ແລ້ວຈິ່ງເມືອຕັ້ງຢູ່ສິບຫາຈິ່ງຈັກເອົາເມືອງຊຽງ ຂອງຄົກຮ່ຳຊຽງທອງ ຈິ່ງໃສ່ຜູ້ນຶ່ງໄປກິນເມືອງຊຽງ ຕົ້ນຂີ້ເມືອງ ນີ້ຈິ່ງໄດ້ວ່າສີຫມື່ນນາງບ້າ ແລ ໃຫ້ຊຽງຕົນເປັນເຈົ້າສີຫມື່ນ ຈິ່ງໃຫ້ເອົາເມືອງພາເມືອງພົວພູຄຸນທັງເມືອງແທງ ຈິ່ງໃຫ້ເຈົ້າ ເມືອງພາເປັນສີຫມື່ນນາງ ນັກແຕ່ນັ້ນ ພຣະຍາຟ້າກໍ່ນາດາ ດູ ພົນ ທີ່ ສິບຫາຫັ້ນ ໄວ້ພົນສີແສນແຕ່ລາວໄດ້ປ້າຍໄດ້ແກວ ແສນນຶ່ງ ຊ້າງໄດ້ຫ້າຮ້ອຍຕົວ ຈິ່ງຂຶ້ນເມືອເອົາເມືອງຫີນເມືອງ ງາວ ໄດ້ ແລ້ວ ຈິ່ງຍ່ພົນຂຶ້ນເມືອຕັ້ງທີ່ດອນມູນຫັ້ນ ແຕ່ນັ້ນ ເຈົ້າເມືອງລ້ານນາຜູ້ນຶ່ງຊື່ວ່າ ພຣະ ຍາສາມພະຍາ ມັນກໍອວນ ພົນແຕ່ເມືອງລ້ານນາມາຊູແຫ່ງໄດ້ພົນສີ່ແສນ ຍາມນັ້ນເອົາ

ເມືອງຊຽງ ແສນເປັນລ້ານນາ ນັນຈຶ່ງໃຫ້ແສນານັນຜູ້ນຶ່ງຊື່ວ່າ
ແສນເມືອງນັນກໍຖືພົນມາຣົບພຣະຍາຟ້າງ ຈຶ່ງຂີ່ຊ້າງຕົວນຶ່ງ
ຊື່ວ່າຊຽງທອງຫວ້າຍ ນ້ຳ ກົກ ເມືອ ສູ່ ແສນເມືອງລ້ານນາແລ້ວ
ຂະວາກືນອາກ່ ຈົນ ກັນຂວາກໍແພ້ ຂ້ ແສນເມືອງລ້ານນາ ຕາຍ
ກັບຄໍຊ້າງ ແຕ່ນັ້ນພຣະຍາສາມພຍາ ອັນເປັນເຈົ້າແຜ່ນດິນ
ລ້ານນາກໍໜ່າຍໜີເຂົ້າວຽງລ້ານນາຊຽງຣາຍ ພຣະຍາຟ້າກໍ
ໃຫ້ໄປໄລ່ເອົາຮອດເມືອງແພວເມືອງເລນ ທັງ ມືອງໄຣບ້ານບູ
ເມືອງບອງຫົວພະງ ຫົວຟາຍ ຖຸງເມືອງລີ້ ເມືອງຂືນເມືອງ
ຊຽງແຂງໜັ້ນແລ ແຕ່ນັ້ນພຣະຍາສາມພຍາຈຶ່ງໃສ່ຜູ້ນຶ່ງຊື່ວາ
ໜື່ນກຸມການ ຜູ້ນຶ່ງຊື່ວ່າໜື່ນເຊູນ ຜູ້ນຶ່ງຊື່ວ່າໜື່ນກາງ
ເມືອງຊຽງຣາຍ ມາຂໍສົ່ງສ່ວຍເຂົ້າພັນຖານແກ່ ພຣະ
ຍາຟ້າ ເມື່ອໃດລູກຜູ້ຂ້ານາງນ້ອຍອ່ອນສໍ ໃຫຍ່ໄດ້ ໑ປີ ປີຈັກ
ໃຫ້ເມືອປັດເສືອປູຫນອນ ແກ່ເຈົ້າຟ້າຊະແລ ບັດນີ້ຍັງນ້ອຍ
ຂໍແກ່ເຈົ້າຟ້າ ເອົາແຕ່ວຽງຜາໄດໄປ ໃຫ້ເປັນນານເມືອງ
ເຈົ້າຟ້າຂ້ອນກ້ອນ ພຣະຍາສາມພຍາ ມອບເວນໃຫ້ແກ່
ນັ້ນເປັນແດນເມືອງລ້ານຊ້າງໜັ້ນກ້ອນ ເລົ່າແຕ່ງຄຳມາຖວາຍ

ພຣະຍາຟ້າສອງໝື່ນ ເງິນສອງແສນແຫວນນິນລູກນຶ່ງຊື່
ວ່າບອດຊຽງແສນ ແກ້ວພິທູນລູກນຶ່ງຊື່ວ່າ ບອດຊຽງຣາຍ
ແຫວນແດງລູກນຶ່ງຊື່ວ່າມະນີຟ້າລ່ອງ ເອົາມາຖວາຍແກ່ພຣະ
ຍາຟ້າຫັ້ນແລ ບໍ່ເທົ່າແຕ່ນັ້ນເລົ້າແຕ່ງເງິນຄຳມາໃຫ້ແກ່ເສນາ
ພຣະຍາຟ້າຜູ້ໃຫຍ່ຊູ່ຄົນ ເປັນອັນມາກຫລາຍນັກ ແຕ່ນັ້ນ
ພຣະຍາຟ້າກໍ່ລ່ອງມາເມືອງລ້ານຊ້າງ ຈິ່ງມາກວາດເອົາຂ້າ
ເກົ່າແຕ່ຫົວນ້ຳທາ ເທົ້າເມືອງກໍເມືອງຫລ້າ ເທົ້າແດນລື້ໝົດ
ຊູ່ແຫ່ງຊູ່ທີ່ ທີ່ຍັງຈິ່ງໄວ້ໃຫ້ເປັນເຊື້ອເປັນແນວເຂົາທີ່ນຶ່ງ ວ່າ
ພູຄຸ້ມຊາວຄົວ ທີ່ນຶ່ງວ່າພູຈອມແລ້ງຊາວຄົວໄວ້ສີ່ແຫ່ງນີ້ເປັນ
ເຊື້ອສາຍແຫ່ງເຂົາຫັ້ນແລ ຈິ່ງບອກສອນເຂົາວ່າດັ່ງນີ້ສູປາ
ບ່າປ່າງານແກໄທແກ່ລາວ ສູຢ່າຍາດເອົາສິ່ງເອົາຂອງລາວອັນ
ໄດກໍດີອັນນຶ່ງສູຫາກຜິດກັນແລວ່າຈັກໄປຣົບໄປເລວກັນກໍດີໃຫ້ສູ
ຈື່ຄວາມກູສັ່ງນີ້ ມື້ກາບມື້ຮັບມື້ຮວບມື້ເມີງມື້ເປີກ ຫ້າມື້ນີ້ໃຫ້
ເປັນມື້ເສິກສູຈັກຣົບຈັກເລວກັນກໍຕາມ ສ ມື້ກັດມື້ກົດມື້ຮ້ວາງມື້
ເຕົາມື້ກາ ຫ້າມື້ນີ້ຢ່າໃຫ້ຣົບເລວກັນ ຢ່າໃຫ້ຫຍຸບເອົາ
ຄວາຍບາຍເອົາຄົນກັນຜູ້ໃດຫາກບໍ່ຟັງຍັງຄວາມກູສັ່ງນີ້ ທີ່ນ

ໜ່ວຍນີ້ກູເອົາແຕ່ສິບຄານຊຽງດົງຊຽງທອງ ພຸ້ນມາໄວ້ແກ່ສູນີ້ ແລ້ວຫົນຫນ່ວຍນີ້ຫນັກສອງ ມັນຫ້າຮ້ອຍບາດ ຜູ້ໃດຫາກບໍ່ຟັງຄວາມກູອັນເປັນເຈົ້າແຜ່ນດິນຊຽງດົງ ຊຽງທອງນີ້ ໃຫ້ສູທັງສິຂຸນອາຊນີ້ຊັ່ງເອົາເງິນທໍ່ຫົນຫນ່ວຍນີ້ ເລົາເອົາຄວາມໂຕນຶ່ງກິນແກ່ສູ ຢ່າໃຫ້ວ່າກັນສັ່ງດັ່ງນີ້ ຢ່າຮື້ຮອກຄອກດົວກັນ ພຣະບາຟ້າສັ່ງສອນຂ້າເກົ່າດັ່ງນີ້ ແລ້ວຈິ່ງເອົາເຂົາລ່ອງມາໄວ້ນູບ່ອນຫັ້ນ ແຕ່ງໃຫ້ເຂົາຊຽງໄປະຊຽງພາຫັ້ນແລ ພຣະບາຟ້າໄປຄວ່າໄດ້ສອງປີ ຈິ່ງມາຮອດຊຽງດົງຊຽງທອງ ຈິ່ງເຫັນຫນ້າລູກຊາຍນຶ່ງໃສ່ຊື່ວ່າ ທ້າວອຸ່ນເຮືອນ ອັນດິນເປັນພຣະບາສາມ ແສນ ໄທນັດນີ້ແລ ໄດ້ຂ້າເກົ່າທັງ ນວນທັງບ໊ງຊາງນ້ອຍ ໄທ ່ແສນນຶ່ງ ໃຫ້ຂວາກິນເປັນເຈົ້າເປັນລ່າມແກ່ເຂົາຫັ້ນແລ.

ພຣະເຈົ້າຟ້າງຸ່ມ ລົງມາຕົວຽງຈັນ

ແຕ່ນັ້ນ ພຣະບາຟ້າກໍ່ບໍ່ພົບລ່ອງຈາກເມືອງ ຊະວາ

ໃຫ້ບາໃບບາຈີ້ແຂ້ເປັນຫົວໜ້າ ຖືພົນໄປຮອດເມືອງຊ້າຍ ທ້າວໄຄຫລານຂຸນເຄັດຂຸນຄານເມືອງຊ້າຍຖືພົນມາຮົບ ບາໃບບາຈີ້ແຂ້ໆ ແພ້ທ້າວໄຄ ເສັງທີ່ຊຽງສົມຫັ້ນ ຈິ່ງໃສ່ບາໃບເປັນເມືອງຊ້າຍ ເອົາຈື່ງວ່າຊ້າຍໃບ ຫັ້ນແລແຕ່ນັ້ນພຣະບາຟ້າລ່ອງໄປ ຄ່ແກ້ງຊ້າຍບາໃບບາຈີ້ແຂ້ເອົາພົນຕັ້ງທ່າບາເໜືອ ທ້າວຊຽງມຸງກິນຈັນພຣະບາເພົາກີນວຽງຄຳ ສອງຂາພໍ່ລູກນີ້ພົນສອງແສນຊ້າງຫ້າຮ້ອຍ ທ້າວຊຽງມຸງຂີ່ຊ້າງຕົວນຶ່ງຊື່ວາວັງບູອິສູງແປດສອກ ພຣະບາເພົາຂີ່ຊ້າງ ຕົວນຶ່ງຊື່ວ່າແສນບາງຄອບສູງເກົ້າສອກ ບາໃບຂີ່ຊ້າງຕົວນຶ່ງຊື່ວ່າແພ້ວຈັກກະວານ ບາຈີ້ແຂ້ຂີ່ຊ້າງຕົວນຶ່ງຊື່ວ່າຂວານລ່ວງຟ້າ ພຣະບາຟ້າຂີ່ຊ້າງຕົວນຶ່ງຊື່ວ່າຮົມຊຽງທອງ ທ້າວຊຽງມຸງແລະພຣະບາເພົາສອງຂາພໍ່ລູກອອກມາຮົບ ພຣະບາຟ້າຕັ້ງຢູ່ທ່າບາເໜືອ ບາໃບບາຈີ້ແຂ້ປູຄົບຈຳປີ ສອງຂາພໍ່ລູກລ່ວງເຂົ້າມາຊົນເອົາຈື່ງວ່າຫນອງລ່ວງ ທີ່ນັ້ນບາຈີ້ແຂ້ຊົນທ້າວຊຽງມຸງແພ້ຂ້າທ່ານຕາຍກັບຫົວຊ້າງ ບາໃບແລຂວາກີນເອົາຊົນ

ພຣະຍາເພົາ ໆ ເຫັນຊ້າງຂາແຂງ ພຣະຍາເພົາລອດພ່າຍ
ໜີເມືອວຽງຄຳທີ່ເມືອງທ່ານພຸ້ນ ແຕ່ນີ້ພຣະຍາ
ຟ້າເຂົ້າໄປຕັ້ງຢູ່ວຽງຈັນຫັ້ນ ຈຶ່ງໃຫ້ບາກີເຜີ້ຜູ້ນຶ່ງບາສຽນຜູ້ນຶ່ງ
ບາຈີແຂ້ຜູ້ນຶ່ງສາມຄົນນີ້ ເຂົາກໍພົນໄປເອົາວຽງຄຳບໍ່ໄດ້ເຂົາ
ຈຶ່ງໃສ່ມາເລົ່າແກ່ພຣະຍາຟ້າວ່າ ວຽງໄມ້ໄຜ່ຂັດໜັກ ພຣະຍາ
ເພົາບໍ່ອອກມາຊົບ ເອົາຍາກໜັກ ພຣະຍາຟ້າຈຶ່ງວ່າບໍ່ຍາກ
ສັງ ຈຶ່ງຕີເງິນຕີຄຳເຮັດກຽງປືນໄປໃຫ້ແກ່ເຂົາ ຈຶ່ງໃສ່ໜັງສື
ໄປວ່າແກ່ສາມຂຸນເຂົ້າໃຫ້ສູຄຸມວຽງເອົາປືນອັນນີ້ ຍິງໄປໃນປ່າ
ໄມ້ໄຜ່ ສາມວັນ ແລ້ວໃຫ້ຄືນມາຢູ່ກ່ອນດ້ອນພູກາກຣິມເພີງ
ພາຍໜ້າວ່າດັ່ງນັ້ນ ເຂົາກໍເຮັດຕາມເຈົ້າຟ້າວ່າແລ້ວຄືນມາ
ພຣະຍາຟ້າຈຶ່ງກ້ວາຍເມືອຢູ່ເປັນແກ່ຂຶ້ນແຕ່ງລິບເອົາແກ່ເມືອງ
[illegible]ເປົ່າຣອດນະຄອນໄທແລະຂອບດ່ານທັງມວນ ຈຶ່ງໃຫ້
ບາຈີແຂ້ເປັນໜື່ນແກ່ ແລ້ວພຣະຍາຟ້າຈຶ່ງມາວຽງຈັນ ຈຶ່ງ
ໄປຄຸມເອົາວຽງຄຳໄດ້ຫັ້ນແລ ຈຶ່ງເອົາພຣະຍາເພົາໄດ້ ມັນຂໍ
ເມືອຕາຍທີ່ຊຽງດົງຊຽງທອງຫັ້ນແລ ເຂົາເອົາໃສ່ຊອງມາທາງ

ບົກຈິ່ງຕາຍທີ່ບ້ານຖຸບແທ້ງຫັ້ນແລ ເຂົາຈິ່ງວ່າເມືອງຊອງບັດນີ້ແລ ພຣະຍາຟ້າຈິ່ງຄືນມາປຸ່ງງຈັນຫັ້ນແລ ພຣະຍາຟ້າຈິ່ງໂຮມຊ້າງໂຮມພົນດູໄດ້ຊ້າງສອງພັນຕົວ ໄດ້ມ້າພັນນຶ່ງ ໄດ້ຄົນຫົກແສນ ອັນນີ້ແຕ່ຫ້ວຍຫລວງມາເໜືອເທົ້າວຽງພຍາໄດ ພຣະຍາຟ້າຈິ່ງໃຫ້ສຽມໄປເປັນໜື່ນກຣະບອງ ມັນໂຮມພົນແຕ່ພຣະບ້າຮູງຊຽງລາໄປໄຕ້ເທົ້າແດນຈານ ແລດ່ານລະແວກແດນແກວກ້າໄຕ້ ຊີ່ເມືອງປາກດາງໄດ້ຄົນ ໔ ແສນໄດ້ຊ້າງພັນນຶ່ງໄດ້ມ້າຫ້າຮ້ອຍຕົວ ຈິ່ງໃຫ້ບາຖຸ້ມເປັນໜື່ນຈັບ ພຣະຍາໂຮມພົນທີ່ແຕ່ໄທ ອັນເປັນເຮືອນບອງທອງໄດ້ລານແສນ ອັນເປັນລາວໄດ້ ໓ ແສນທັ້ງນອນ ຄົນໃນເມືອງລ້ານຊ້າງໄດ້ລ້ານນຶ່ງຈິ່ງໃຫ້ຂວາກົມເອົາຂ້າເກົ່າໄປໃສ່ ກຣະແດຟ້າແດນນອກວຽງຈັນຫັ້ນ ໜື່ນຄົວນຶ່ງ ເອົາໄປໃສ່ທນອງຫານນ້ອຍທານຫລວງ ທົ່ງພູວານເຖົ້ານານປາວ ທົ່ງເຊືອງຊ້າຍແສນຄົນຫັ້ນແລ.

ພຣະເຈົ້າຟ້າງຸ່ມໄປຣົບອະຍຸທທະຍາ

ພຣະຍາຟ້າຍໍພົນໄປເອົາເມືອງລ້ານເພັຽສຣີອະຍຸທິຍານີ ຄົນຫົກແສນຊ້າງ ໕ ຮ້ອຍຕົວ ຍັງໄວ້ພົນຮັກສາເມືອງສີ່ແສນຄົນ ຊ້າງສາມພັນຕົວ ມີທໍ່ນີ້ແຕ່ງໄວ້ຮັກສາເມືອງລ້ານຊ້າງແລ ພຣະຍາຟ້າຈຶ່ງໃຫ້ກືນແກຫມື່ນກຣະບອງ ຖືພົນໄປເປັນຫົວ ຫນ້າ ຂວາກິມເປັນປີກຂວາຊ້າຍໃບເປັນປີກຊ້າຍ ຫມື່ນຈັນ ເປັນທັບຫລັງພະຍາຟ້າຈຶ່ງຍໍພົນ ໄປທາງບົວກອງ ຮອດວຽງ ພຣະງາມ ໄດ້ເຈົ້າວຽງບົງພຣະງາມ ແລ້ວອອກມາສູ່ວຽງຮ້ອຍ ເອັດປະຕູຫັ້ນແລ ຈຶ່ງໃຫ້ໄປຂບເອົາ ທ້າວພຣະຍາທັງຫລາຍ ຊຸ່ແຫ່ງຊູ່ທີ່ ຈຶ່ງໄດ້ເມືອງພຣະສາດພຣະສະຊຽນພຣະລົງພຣະ ນາຣາຍນາຫຽນເຊຂນາດສະພັງສີແຈ ທັງພຣະຍາຈັນພຣະ ມາຫັນສອງຂານີ້ ຢູ່ເມືອງໂພະຝືງແດດ ທ້າວພຣະຍາທັງ ຫລາຍຝູງນີ້ເອົາເປັນລູກເປັນຫລານ ພຣະກູບາກາງແລ ພະ ຍາຟ້າກໍໃຫ້ໄປໄລ່ເອົາໄດ້ຫມົດ ນາຜູກໃສ່ຄາງວົງເຫລັກໄວ້ ທີ່ເມືອງຮ້ອຍເອັດປະຕູຫັ້ນ ທັງພຣະຍາຮ້ອຍເອັດປະຕູກໍ່ຜູກໄວ້ ຫັ້ນ ພຣະຍາກໍ່ຮື້ເທບ້ານເມືອງສາສນາສາຣິອິກະທາດພຣະ ພຸທເຈົ້າກໍມ້າງກໍ່ເພຫັ້ນແລ ພຣະຍາຟ້າກໍໃຊ້ໄປຫາພຣະຍາ

ເມືອງສີອະໂບທິຍາວ່າ ຈັກຣິບຣືສິງໃດນັ້ນຈາ ເຈົ້າໂບທິຍາ
ຈຶ່ງກ່າວວ່າເຮົາຫາກເປັນພີ່ນ້ອງກັນມາແຕ່ຊຸບບູຣິມບູຣານປາງ
ກ່ອນພຸ້ນມາລາຍ ເຈົ້າຢາກໄດ້ບ້ານໄດ້ເມືອງໃຫ້ເອົາເຂດແດນ
ແຕ່ດົງສາມເສົ້າເມືອເຫົ້າ ພູພຣະຍາພໍ່ແລະແດນເມືອງນະຄຣໄທ
ເປັນເຈົ້າກ້ອນ ອັນນຶ່ງຂ້ອຍຈັກສົ່ງນ້ຳອ້ອຍນ້ຳຕານຊູປີ ອັນ
ນຶ່ງລູກຍິງຂ້າ(ຊື່)ນາງແກ້ວລອດຟ້າໄຫຍ່ມາແລ້ວ ຈັກສົ່ງໃຫ້
ເມືອປົວເສືອປູຫນອນແກ່ເຈົ້າຟ້າແລ ຈຶ່ງແຕ່ງຊ້າງພາຍຫ້າ
ສິບຊ້າງພັງຫ້າສິບຊ້າງຄຳສອງຫມື່ນເງິນສອງຫມື່ນ ບໍ່ແສນ
ຫນ່ວຍ ຂອງອັນອື່ນກວ່ານັ້ນແກ່ງເຄື່ອງຮ້ອຍຊູ່ອັນ ຈຶ່ງສົ່ງມາ
ໃຫ້ພຣະຍາຟ້າຫັ້ນແລ ພຣະຍາທັງຫລາຍອັນພຣະຍາຟ້າ
ໄດ້ຜູກເອົານັ້ນ ເປັນລື້ນວ່າພຣະຍາກູ່ບາທາງພຣະຍາຮ້ອຍເອັດ
ປະຕູ ພຣຍາຟ້າກໍ່ຈັກໃຫ້ເອົາໄປຂ້າເສັຽແທ້ ເມືອນັ້ນຍັງມີມະ
ຫາເຖຣເຈົ້າຕົນນຶ່ງພາຣິພົນທັງມວນ ເຂົ້າມາຮອດພຣະຍາຟ້າ
ແລະປູ່ໄກພຣະຍາຊິ່ວຫ້າວາຫັ້ນແລ ພຣະຍາຈຶ່ງກ່າວວ່າ
ພັນເຕ ຂ້າໄຫວ້ເຈົ້າກູງມີປະໂຍດດ້ວຍອັນໃດ ຈຶ່ງມາຮອດມາ

ເຖິງຜູ້ຂ້າໃນກາລະບັດນີ້ຈາ ແກ່ນັ້ນມະຫາເຖຣເຈົ້າຈຶ່ງກ່າວວ່າ
ເຮົາຈັກມາຖາມປັນຫາ ນຳພຣະຍາແລ ເຮົານີ້ກໍຫາກເປັນ
ພໍ່ຄຣູມະຫາປາສນັບຕິບອັນລ້ຽງ ພຣະຍາໃຫຍ່ມານັ້ນດາຍ
ພຣະຍາຟ້າຈຶ່ງປູອາສນະໄວ້ແລ້ວ ຈຶ່ງອາຣາທນາມະຫາປາສ
ນັບເຈົ້ານັ້ນໆເຈົ້າກໍນັ່ງກາງບິມິນຫັ້ນແລ ພຣະຍາຟ້າຈຶ່ງວ່າ
ເຈົ້າກູຈັກຖາມປັນຫາວອນຜູ້ຂ້າຈິ່ງໃດ ກໍຖາມໄປຂ້ອຍຖ້ອນ
ມະຫາເຖຣເຈົ້າຈຶ່ງກ່າວວ່າ ອັນແຂ້ວພຣະຍາ ອອກມາແກ່
ຫ້ອງແມ່ສານສິບເຫລັ້ມນັ້ນ ຍ້າຊູເຫລັ້ມເປົ້ານນຈາ ພຣະຍາ
ກໍວ່າຫລ່ອນເສັ້ຽງກນິດແລ້ວ ມະຫາເຖຣຈຶ່ງວ່າ ອັງໃກນ່ຍັງ
ອອກມາແຫນທີ່ເກົ້າເປົ້າຈາ ພຣະຍາກ່າວວ່າຍັງອອກມາທັງ
ສາມສິບສາມເຫລັ້ມ ດັ່ງເກົ່າກໍ້ຂ້າແລ ມະຫາເຖຣເຈົ້າຈຶ່ງ
ກ່າວວ່າ ແຂ້ວອັນອອກແກ່ຫ້ອງມາແລ້ວນັ້ນ ຍັງເປັນຄຸນສິ່ງ
ໃດເລົ່າ ຍັງເປັນໂທສສິ່ງໃດແກ່ມະຫາຣາຊນັ້ນຈາ ພຣະຍາຈຶ່ງ
ວ່າອັນຍັງເປັນຄຸນນັ້ນຂ້າວ່າໄດ້ກ້ຽວເຂົ້າກິນຈິ່ງໃຫຍ່ ອັນນັ້ນ
ຂ້າວ່າເປັນຄຸນແລ ອັນນຶ່ງໂທສນັ້ນຄືວ່າແຂ້ວອອກແກ່ຫ້ອງ

ຄົນທັງຫລາຍວ່າເປັນຂວາງ ຂ້ອຍວ່າເປັນໂທດເພື່ອສິ່ງນັ້ນແລ ແຂ້ວອັນເກົ່າຫລ່ອນເສັຽແລ້ວອັນໃຫມ່ ອອກມາແທນບັງເປັນຄຸນສິ່ງໃດເລົ່ານັ້ງເປັນໂທດສິ່ງໃດ ພຣະຍາຈິ່ງວ່າ ອັນເປັນຄຸນນີ້ແວນຫລາຍ ເພື່ອຂ້ອຍໄດ້ກຸ້ງໄດ້ກິນ ອັນເປັນໂທດນັ້ນໄດ້ຂົບລີ້ນຂົບສົບມັນເຈັບ ມັນປວດ ອັນນັ້ນຂ້ອຍວ່າເປັນໂທດເພື່ອສິ່ງນັ້ນກໍ່ຂ້າແລ ແລ້ວພຣະມະຫາເຖຣະເຈົ້າຈິ່ງວ່າມະຫາຣ ຊເຈົ້ານີ້ ດັ່ສ້າງໃພທີ່ສິນ ງອນາກບັກແລຈິ່ງແກ້ບັນຫາເຮົາໄດ້ສັ່ນນີ້ຫັ້ນແລ ແລ້ວພຣະມະຫາເຖຣກໍ່ສັ່ງລອນພຣະຍາ ກັງເສນາອຳມາດມຸນ ຕິງາກບັກຫັ້ນແລມະຫາເຖຣະເຈົ້າຈິ່ງຂໍຊີວິດ ທ້າວພຣະຍາທັງຫລາຍຝູງຜູກໄວ້ນັ້ນເປັນກົ້ນວ່າພຣະຍາຮ້ອຍເອັດປະຕູ ພຣະຍາຟ້າກໍ່ແກ້ປ່ອຍເສັຽໃຫ້ເມືອຫາບ້ານຫາເມືອງ ຊຸ່ຄົນຕາມຄວາມພຣະມະຫາປາສມັນເຈົ້າຫັ້ນແລ ພຣະມະຫາເຖຣະຈິ່ງສັ່ງອຳລາພຣະຍາແລ້ວອອກໄປທາງປ່ອງອູ່ມລ້ວຍ ອາກາວກາງຫາວຫັ້ນແລ.

ແຕ່ນັ້ນພຣະຍາກໍ່ເອົາຣີພົນ ທັງມວນຂຶ້ນງາກາງຄາວທາງຈິ່ງມາຮອດວຽງຈັນປູ່ແກ່ງປຸນບ້ານເມືອງຊູທີ່ຊູ່ແຫ່ງບໍ່ຣະ

ບະບແລ້ວຈຶ່ງແຕ່ງປຸນເສນາອໍາມາດທັງຫລາຍ ເປັນຕົ້ນວ່າ ປູ່ລ້ຽງໃຫ້ເປັນແສນເມືອງທັງຫມື່ນ ກຣະບອງສອງຂາເຈົ້ານີ້ ໃຫ້ເປັນ ໃຫຍ່ກວ່າເຈົ້າຫົວເສິກທັງຫລາຍ ຫມື່ນຫລວງ ເປັນ ເຈົ້າຂວາ ເຈົ້າຊ້າຍພຸ່ມເໜືອພຸ່ມໃຕ້ທ້າຍນີ້ ພຣະ ບາຟ້າໃຫ້ເປັນ ຫົວເສິກທັງຫ້າແລ ຫມື່ນຫນ້າຫມື່ນແພນ ສອງຂານີ້ໃຫ້ເປັນຂຸນຣາຊວັດກ້າຫນ້າ ຫມື່ນນາເໜືອຫມື່ນ ນາໃຕ້ ສອງຂານີ້ໃຫ້ເປັນຣາຊວັດກ້າຫລັງ ນາຍຫລວງເໜືອ ໃຫ້ຮັກສາຄຸ້ມໃນກ້າຫນ້າ ໃຫ້ກາຄວາມເຈົ້າພຸ່ມເໜືອ

ນາຍຫລວງໃຕ້ໃຫ້ ຮັກສາຄຸ້ມກ້າຫລັງໃຫ້ຫາ ຖ້ອຍຄວາມເຈົ້າພຸ່ມໃຕ້ ຂຸນທັງມວນອັນຈັກໄຫວ້ສາເຈົ້າແຜ່ນ ດິນເມືອຈັກໄປເສິກກໍດີຢູ່ບ້ານຢູ່ເມືອງກໍດີນີ້ເທົ່ານີ້ແລ ຂຸນອັນເປັນ ເຈົ້າເມືອງໃຫຍ່ມີຫມື່ນຈັ່ງເປັນວົ້ນ ຖັດນັ້ນມາເຈົ້າວຽງຄໍາມາ ເຈົ້າວຽງແກ ຫມື່ນພຣະບາຣຸງເຈົ້າປາກຫ້ວຍຫລວງເຈົ້າ ເມືອງຊຽງລາເທົ່ານີ້ເປັນຂຸນໃຫຍ່ເຂື່ອນເມືອງ ຂຸນໃຫຍ່ຂອບ ເມືອງແກ່ນທ້າວເຈົ້າເມືອງຫນອງບົວເຈົ້າເມືອງຊ້າຍເມືອງຂວາ

ເຈົ້າເອົາວ່າງສາມຫມື່ນຂຸນທັງມວນຝູງນີ້ ພຣະຍາຟ້າ
ໃສ່ໃຫ້ຮັກສາຂອບເມືອງລ້ານຊ້າງແລ.

ທຳການສລອງໄຊຍາ ພິເສກປຸງງຈັນ

ແຕ່ນັ້ນທ້າວພຣະຍາທັງຫລາຍແປັນດີ່ນວ່າຫມື່ນຈັນແລ ຫມື່ນກອະນອງທັງຫມື່ນຫລວງຈຶ່ງໄຫວ້ພຣະຍາຟ້າວ່າດັ່ງນີ້ ເຈົ້າກູໄປພາບບ້ານເມືອງ ໄດ້ຊູ່ແຫ່ງຊູທີ່ແລ້ວ ບັດນີ້ ຝູງຂ້າທັງຫລາຍຂໍກະທຳໄຊຍາພິເສກແກ່ເຈົ້າກູ ໃຫ້ຫມື່ນໃຫຍ່ຫມື່ນຫລວງໄຫວ້ສາວ່າດັ່ງນັ້ນ ພຣະຍາຟ້າຈຶ່ງວ່າ:ເຈົ້າທັງຫລາຍວ່າດັ່ງນັ້ນກໍຊອບແລ້ວ ເຂົາຈຶ່ງມາຫາບ່ອນຫາທີ່ອັນຈັກເປັນມຸງຄຸນ ຈຶ່ງມາໄດ້ທີ່ອັນນຶ່ງອັນຕັ້ງວັດປະສັກບັດນີ້ແລເມື່ອກ່ອນນັ້ນໄປທັ້ນຕັ້ງວັດ ປະສັກທີ່ນັ້ນ ເຂົາຈຶ່ງແປງທໍາສິງແລ້ວຈຶ່ງເອົາພຣະຍາຟ້າໄປສົ່ງກະທຳໄຊຍາພິເສກທັ້ນແລປູ່ລ້ຽງອິພັນ ກຸວັນ ກຸ ຄືນ ຂ້າຊ້າງກິນ ໑໐ ຕົວ ຂ້າງົວກິນ ໑໐໐໐ ຕົວຂ້າຄວາຍກິນ໖໐໐໐ ຕົວບໍຣະບວນແລ້ວພຣະຍາຟ້າຈຶ່ງ ສັ່ງສອນທ້າວພຣະຍາທັງຫລາຍມວນຊູກັນວ່າດັ່ງນີ້ ເຈົ້າທັງຫລາຍ

ຣັກສາບ້ານເມືອງຢ່າໃຫ້ມີຂ້າລັກຄົນໂຈນ ອັນນຶ່ງຢ່າໃຫ້ຂ້າ
ຟັນກັນແມ່ນວ່າຂ້ອຍຕົນຜິດກໍດີ ເນັ່ງຕົນຜິດກໍດີ ຕົນຢ່າຫລອນ
ຂ້າຟັນເສັ່ງໃຫ້ຜູ້ອື່ນນີ ຈາຣາບາດກ່ອນເປັນໂທດ ອັນຫນັກຈຶ່ງ
ຕາມເຫດນັ້ນໂທດບໍ່ຫນັກ ຢ່າໄດ້ຂ້າທີ່ວ່າໃຫ້ໃສ່ຄອກຂັງໄວ້
ສົມໂທດແລ້ວໃຫ້ປອຍເສັ່ງກາວງກກາບ ສົມບັດອັນຈັກເກີດມາ
ໃນແຜ່ນດິນນີ້ ຄັນມີຄົນສົມບັດກໍຈຶ່ງມີ ຄັນບໍ່ມີຄົນສົມບັດເຂົ້າ
ຂອງກໍກາບໍ່ໄດ້ແລ ເຫດເຮົາບໍ່ໃຫ້ຂ້າຄົນເພື່ອດັ່ງນັ້ນແລ ອັນນຶ່ງ
ເຈົ້າທັງຫລາຍກໍຢ່າຜິດຢ່າຂ້ອງກັນ ໃຫ້ນ້ອມກັນດູຂອບບ້ານ
ຂອບເມືອງທັງມວນ ອັນນຶ່ງຕ່າງບ້ານຕ່າງເມືອງທັ້ງມວນເຂົາ
ຈັກກະທຳບຽດບຽນບ້ານເມືອງເຮົາສິ່ງໃດ ກໍໃຫ້ຮູ້ໃຫ້ເຫັນແຈ້ງ
ອັນນຶ່ງສອງເດືອນໃຫ້ໃຊ້ເບື້ອໄຫວ້ເຮົາ ເມືອຮອດຊຽງດົງຊຽງ
ທອງນັ້ນແລ້ວ ເຮົາຈັກໄດ້ບູຊາແຖນຟ້າ ຄືນທັງແຖນດິນແຖນ
ແຕ່ງແຖນຊັ້ງແຖນເຄືອກະທັງເຖົ້າຍີເຖົ້າໄລ່ແມ່ປ່າງ່າມ ແມ່ນົດ
ບິນທັງເທວະດາອັນຮັກສາຜາດົງແລສິບອູ ທັງສິບຊອງ ແລ
ແສນເຂົາຄຳທັງສິບຄານສິບໂຮນສິບດົງ ຜາກັບແກວັງນາຍທັງ
ຫລັກເຫນັ້ນກ້າຍຂັນທັງນາໄຮ່ດົງວ ພູເຂົາກ້າ ທ້າວ
ຄອງປູ່ທນອງຫລີນພູເຂົາກ້າທັ້ນ ທັງຜາຂວາງກ້ອນຟ້ານ

ປຸ້ມເກົ່າກ້ອນກ່າຍຟ້າອັນຫມາຍໄວ້ທີ່ຊຽງດົງຊຽງທອງນັ້ນເປັນ
ຄວາຍ ໑໑ ຕົວຄັນເນື້ອຮອດແລ້ວເຮົາຈັກໄດ້ບູຊາຜີຟ້າຜີແຖນທັງ
ຫລາຍຟູງນີ້ແລະຄັນເຖິງເດືອນຈຽງໃຫ້ຂັນຊູບ້ານຊູເມືອງເດືອນ
ສາມໃຫ້ຮອດເນື້ອງຊະວາ ຄັນຜູ້ໃດບໍ່ຂຶ້ນເຮົາວ່າບໍ່ຊື່ຕໍ່ເຮົາແລ
ອັນວ່າໃຫ້ລ້ຽງຟ້າລ້ຽງແຖນປູ່ເຈົ້າຟ້າຫລວງໂງ່ມ ຫາກໄດ້ສັ່ງ
ເຮົາໄວ້ໃຫ້ຮູ້ຈັກຫົວໃຈເຈົ້າຂຸນທັງມວນ ອັນປູ່ແຜ່ນດິນເມືອງ
ລ້ານຊ້າງຜູ້ຊື່ແລດີ ຈາກເຈົ້າແຜ່ນດິນທັ້ນແລປູ່ເຮົາເຈົ້າຟ້າ
ຫລວງໂງ່ມສັ່ງໄວ້ສືບງມາວັ້ງນີ້ແລ ອັນນຶ່ງເຈົ້າທັງຫລາຍຢ່າເອົາ
ໄພ່ເນື້ອເປັນຂ້ອຍ ໄພ່ຜີດກັນເປັນອັນຫນັກເປັນຕົ້ນວ່າບໍ່ຊູ້ຊູ່ເມັຽ
ທ່ານໃຫ້ໄຫມເອົາແກ່ທ້າບາດ ເອົາຫາກຂ້າກັນຕາຍເອົາຕົວ
ມັນແທນຜູ້ນຶ່ງອັນຕາຍນັ້ນ ອັນນຶ່ງໄປເສິກຢ່າເອົາຄ່າຫົວໄພ່ແດ່
ບາດນຶ່ງເຖິງສອງບາດຕໍ່ເຖິງຮ້ອຍ ກ່ວາເປັນຄ່າຫົວແລ້ວເຈົ້າ
ຂຸນຢ່າໄຫມໄພ່ກາຍຮ້ອຍຂຶ້ນໄປເທິງ ຜູ້ໃດບັງໄຫມຈັກເສັຽຫນ້າ
ຕົວມັນຈັກເອົາໃສ່ຄາງໄພ່ ພຣະບາຟ້າສັ່ງສອນເຈົ້າຂຸນທັງ
ຫລາຍມາກຫນັກ... ອັນນີ້ວ່າສົມພ່ອນແລ ແຕ່ນັ້ນເຈົ້າ

ຂຸນທັງຫລາຍກໍ່ອອກໄປກິນບ້ານກິນເມືອງຊູ່ແຫ່ງຫັ້ນແລພຣະບາທເອົາຣິພົນອອກມາທາງປາກຣອດຊຽງດົງຊຽງທອງ ເມື່ອເດືອນສີ່ຂຶ້ນສາມຄ່ຳວັນອັງຄານນີ້ກາບສະງ້າທັ້ງແລ ບາງແກ້ວຟ້າຜູ່ເປັນເຈົ້າແທ່ນ ທັງຊາວບ້ານຊາວເມືອງທັງຫລາຍ ຈິ່ງມາທຳສູ່ເຂົ້າເລົ່າຂວັນກະທຳອຸສາພິເສກ ໃຫ້ຂາເຈົ້າຟ້າກັງສອງຜົວເມັຽສເວີຽຣາດເປັນ ກ້າວເປັນພຣະຍາ ໃນຊຽງດົງຊຽງທອງຫັ້ນ ບໍ່ຍືນມີ ລູກຍິງລູກຊາຍ ສືບສາຍໄປບໍ່ໃຫ້ຂາດສືບເຊື້ອຊາດແຜ່ນດິນໄປຫັ້ນແລ

ໄປນຳເອົາ ພຸທສາສນາ ມາຈາກ ຂເມນ

ເມື່ອພຣະຍາຟ້າຜາບບ້ານຜາບເມືອງ ທັງມວນໄດ້ແລ້ວ ຈິ່ງຂຶ້ນມາຢູ່ຊຽງດົງຊຽງທອງ ຍາມນັ້ນຄົນທັງຫລາຍໃນເມືອງລ້ານຊ້າງທັງມວນເອົາຜີຟ້າຜີແຖນຜີພໍ່ຜີແມ່ເຂົາເປັນ ກີ່ຈັ້ງທີ່ເພິ່ງ ເຂົາກໍຮ້າຍ ນັກເຂົາບໍ່ຮູ້ຈັກຄຸນພຣະພຸດພຣະທັມ ພຣະສົງສັກອັນ ອັນໃດທໍ່ອ້າງແກ້ວອ້າງທານອ້າງທອກອ້າງ

ພາຍ ນາງແກ້ວຟ້າອັນເປັນລກພຣະຍານະຄອນຫລວງອັນ
ເປັນເມັຽພຣະຍາຟ້າງຸ່ມນັ້ນ ນາງຈິ່ງຈາກັບຜົວວ່າເມືອງອັນ
ໃດບໍ່ມີສາສນາພຣະເຈົ້າດັ່ງນີ້ ຂ້າກໍ່ບໍ່ເປັນຂ້າຈັກຄືນເມືອ
ຫາພໍ່ຂ້າ ຊີເມືອງນະຄອນຫລວງພຸ້ນແລ ພຣະຍາຟ້າ
ຜູ້ເປັນຕົວຈິ່ງວ່າຄັນດັ່ງນັ້ນ ເຮົາພາໄປໄຫວ້ພຣະຍານະຄອນ
ຫລວງຂໍເອົາສາສນາພຣະພຸທເຈົ້າມາເຖິງ ຈິ່ງແຕ່ງນາຍຄົນ
ໃຊ້ເອົາຄຳໄປສາມໝື່ນເງິນສາມແສນ ແກ້ວບ້າດັ່ງ ແກ້ວພູກໍ່
ແກ້ວຈອມເພັດທັງມະນີເປັນບັນນາການ ແກ່ພຣະນະຄອນ
ຫລວງອັນເປັນພໍ່ນາງແກ້ວເກງກັນຍານັ້ນແລ ພຣະນະຄອນ
ຫລວງຈິ່ງຣິນເພີງຫາລູກຕົກອັນນຶ່ງກໍ່ປາກ ໃຫ້ສາສນາສັບພັນ
ບູເຈົ້າແມ່ໄປທົວຊີນພູທົບທັງມວນ ຈິ່ງ ໃຫ້ມະຫາເຖຣະ
ເຈົ້າຕົນນຶ່ງຊື່ວ່າພຣະ ປາສມັນເຈົ້າຕົນພີ່ກັບທັງພຣະມະເຖ
ຣະເຈົ້າເທພລັງກາ ລູກສິດພຣະທັງສອງມີ ໒໐ ຕົນຈິ່ງນຳ
ເອົາພຣະບາງເຈົ້າອັນຊາວລັງກາຣອນ ເອົາເງິນເອົາຄຳມາຕັ້ງ
ໄວ້ທີ່ພຣະເຈດີຫລວງແລ້ວເລົ່າບອກພຣະມະຫາຈຸລນາຄເຖຣະ

ເຈົ້າວ່າ ຕູຂ້າທັງຫລາຍປາກຫລໍ່ພຣະພຸທເຈົ້າໄວ້ໃຫ້ສັດ
ທັ້ງຫລາຍພຣະມະຫາຈຸລນາຄເຖຣະເຈົ້າ ໄດ້ຍິນຊາວລັງກາ
ວ່າດັ່ງນັ້ນ ຈຶ່ງເຂົ້າລະນາບັດທະຍານໄປສູ່ປ່າຫິມພານທີ່ກ້ອນ
ຫິນເສລາບາດອັນ ມີກັບປ່າຫິມພານ ແຕ່ປະຖົມກັລປ໌ນຸ້ນ
ຈຶ່ງພົບເຈົ້າຣັດສີ ຊາວຕຶງນີ້ຣັດສີທອງວົງນຶ່ງຣັດສີຊາວຕີນນຶ່ງ
ລອງຕົນນີ້ແກ້ວກວາຣັດສີທັງຫລາຍ ມະຫາຈຸລນາຄເຖຣະເຈົ້າຈຶ່ງ
ດ້ານຈາຣະຈາກັບເຈົ້າຣັດສີ ອັນຊາວລັງກາປາກຫລໍ່ຮູບພຣະ
ພຸທເຈົ້ານັ້ນຈຶ່ງຮ້ອນຫີນບັນທຸກັມພິກສີລາອາ ນະ ພຣະ
ຍາອິນວິສຸກັມແກະລະບຸດທັງພຣະຍາອິນແລເທວະດາທັງຫລາຍ
ອັນປູຊັ້ນຟ້າດຸສິດາຍາມາດາວະດຶງສາ ຈາດຸມແລເທວະດາ
ທັງຫລາຍ ຄັນປູໃນແຜ່ນດິນແລຈັກະວານທັງມວນ ພ້ອມກັນ
ມີພະຍາອິນເປັນປະທານ ແລມະຫາຈຸລນາຄເຖຣະເຈົ້າເປັນ
ປະທານພາຍໃນ ຈຶ່ງໃຊ້ຣັດສີສອງວິນມາເອົາເງິນເອົາຄ່າ ດອນ
ພຣະຍາລັງກາ ອັນຊາວລັງກາຫາກຮອມໄວ້ທີ່ມະຫາເຈດີ
ຫລວງຈັກໃຫ້ຫລໍ່ຮູບພຣະພຸທເຈົ້ານັ້ນ ເຈົ້າຣັດສີຈຶ່ງໄປຕະ

ໝວນເອົາເຂົ້າຂອງທັງມວນແລ້ວ ທໍ່ເນັດເຂົ້າຟ້າງເອົາແລ ຄືນ
ທໍ່ເນັດງາດາໄດ້ແລ້ວພຣະຍາລັງກາຈື່ງເອົາມາຮ້ອຍນຶກ ຂະນຶ່ງ
ໃຫ້ແກ່ເຈົ້າຣັດສີເອົາຫລໍ່ກັບຂອງຊາວເມືອງ ພຣະຍາແລເທ
ວະດາທັງຫລາຍ ຈື່ງອະທິຖານວ່າ ຄຳຂ້ານີ້ໃຫ້ເປັນຄືນ
ທັງສອງ ໃຫ້ເປັນນີ້ທັງສອງ ໃຫ້ເປັນຫົວໃຈ ພະພຸທ
ເຈົ້າເຖີງ ອະທິດຖານແລ້ວ ສັ່ງເຈົ້າຣັດສີທັງສອງວ່າເມືອ
ໃດຫລໍ່ພຣະເຈົ້າກູ ຈື່ງໃຫ້ມະຫາຈຸລນາຄເຖຣະເຈົ້າມາຫາ
ພີ່ຂ້າແດ່ຈັກນຸດທາ ພິເສກໃນເມືອງລັງກາພີ້ໃຫ້ລືຊາປາ ກົດ
ທົ່ວທີບທັງມວນ ຄັນພຣະຍາສັ່ງແລ້ວເຈົ້າຣັດສີກໍໄປຮອດມະ
ຫາຈຸລນາຄະເຖຣະ ເຈົ້າຫັ້ນແລ ພຣະຍາອິນແລເທວະດາ
ທັງຫລາຍກໍຮອມເອົາເງີນຄໍາແລະທອງ ຮັບເປັນຂອງແຫ່ງ
ຄົນມີມະຫາຈຸລນາຄເຖຣະເຈົ້າ ແລະພຣະຍາອິນເປັນປະທານ
ຈື່ງໄວ້ພະນັກງານແກ່ວິສຸກັມເທວະບຸດເປັນຜູ້ຫລໍ່ເມືອຈັກຫລໍ່
ນັ້ນເດືອນສີເພັງວັນອາທິດຍາມຈັກໃກ້ຮຸ່ງ ຄັນວ່າຫລໍ່ແລ້ວມະ
ຫາຈຸລນາຄເຖຣະເຈົ້າ ທັງພຣະຍາອິນ ແລເທວະດາທັງ

ຫລາຍຈຶ່ງນຳເອົາມາຕັ້ງໄວ້ຂ່ອງຫລວງກາງເມືອງກາລັງ ຈຶ່ງ
ໃຫ້ເມືອສັບຍາແກ່ພຣະຍາລັງກາ ພຣະຍາຈິ່ງເອົາອາຊສົມບັດ
ທັງມວນ ມາບູຊາທາດພຣະພຸທເຈົ້າຫ້າອົງໃສ່ໃນໄຕຄ່ຳບາ
ຕັ້ງໄວ້ຊ່ອງໜ້າພຣະພຸທເຈົ້າ ແລ້ວຈິ່ງຖວາຍອາຊສົມບັດທັງ
ມວນບູຊາພຣະພຸທເຈົ້າ ພຣະຍາລັງກາຈຶ່ງອະທິດຖານວ່າ
ດັ່ງນີ້ຜີວ່າພຣະພຸທເຈົ້າອົງນີ້ຈັກຕັ້ງຢູ່ໂຜດສັດທັງຫລາຍ ໃນ
ລັງກາທີບແລຊົມພູທີບໃຫ້ແລ້ວຄ່ຳນັກຄຳປາຖນາແຫ່ງຄົນທັງ
ຫລາຍດັ່ງນັ້ນຈິ່ງໃຫ້ທາດພຣະພຸທເຈົ້າທັງຫ້າອົງນີ້ ສະເດັດ
ເຂົ້າໃນລົບຕົວພຣະພຸທະເຈົ້ານະບັດນີ້ເຖີນ ຄັນວ່າພຣະຍາລັງກາ
ອະທິດຖານແລ້ວດັ່ງນັ້ນ ທາດພຣະເຈົ້າກໍສເດັດເຂົ້າໃນໜ້າຜາກ
ອົງນຶ່ງ ສະເດັດເຂົ້າໃນຕ່ອນຄໍອົງນຶ່ງ ສະເດັດເຂົ້າໃນກາງອົກ
ອົງນຶ່ງ ສະເດັດເຂົ້າໃນຝ່າມືຂວາອົງນຶ່ງ ສະເດັດເຂົ້າຝ່າມືຊ້າຍ
ອົງນຶ່ງ ທາດພຣະພຸທະເຈົ້າທັງອົງນີ້ ສະເດັດເຂົ້າໃນລົບຕົວ
ພຣະພຸທຮູບ ເຈົ້າຊ່ອງໜ້າ ມະຫາຈຸລນາຄເຖຣະເຈົ້າກັບ
ທັງພຣະຍາລັງກາ ແລະເສນາອຳມາດທັງຫລາຍທັງແລ ເທ
ວະດາທັງຫລາຍແຕ່ໝື່ນໂລກຈັກກະວານທັງມວນ ຕາບຕໍ່

ເທົ່າເຖິງຊັ້ນຟ້າດຸສິດາ ສາທຸການພາຍເອົາດອກດອກໄມ້ບູຊາ ປະທຸບປະທິບມາກ ຢູ່ ໆ ວັນ ໆ ດັ່ງພຣະບາລັງກາຈິ່ງສ້າງວິຫານທີ່ຂວາງຫລວງທັ້ນໄວ້ພຣະພຸທເຈົ້າແລ ທີ່ນັ້ນບ້ງມີສະໄຫບ່ອັນນຶ່ງຂ້າງຂວາງວິຫານທັ້ນຊື່ວ່າ ສະບາງພຸດທາ ເຂົາລວດວ່າພຣະບາງເຈົ້າອັນນຶ່ງເຂົາເອົານິມິດເນື້ອໄປເອົາເງິນຄຳດອນພຣະບາລັງກາຫລໍ່ທັ້ນແລ ເສນາຊາວເມືອງທັງຫລາຍວ່າເອົາຂອງຂາໃສ່ບ້າງໆວ່າດັ່ງນັ້ນ ອັນນີ້ເປັນໂວຫານຊາວລັງກາແລ ອັນນຶ່ງຄັນວ່າຜູ້ໃດໄດ້ໄຫວ້ໄດ້ບູຊາ ພຣະພຸທເຈົ້າຄວາມອັນຖຸດແລດັບທາກິເລດ ແລະພຍາດອັນເກີດນີ້ໃນເນື້ອດີນກໍລວດນ້ອຍລວດບາງຫາຍເສັງ ພຣະບາລັງກາຈິ່ງເອົານິມິດສາມປະການນັ້ນມາເປັນຊື່ຣຽກ ຊື່ພຣະພຸທຮູບເຈົ້າອົງນີ້ວ່າພຣະບາງ ເພື່ອດັ່ງນັ້ນແລ ແຕ່ນັ້ນພຣະເຈົ້າຢູ່ໂຜດສັດແລຄົນທັງຫລາຍ ໃນເມືອງລັງກາໄດ້ ໆ ຊົ່ວພຣະບາແລ.

ມະຫາພຸດທະໂຄສາຈານເຈົ້າ ໄປຈານທນັງສືໃນເມືອງລັງກາ ມາຮອດເມືອງ ນະຄອນຫລວງຈິ່ງເລົ່າ ຕໍ່ພຣະບາ

ນະຄອນຫລວງວ່າ ບັງນີ້ພຣະບາງເຈົ້າລິນບຶ່ງຢູ່ເມືອງລັງກາ ວິເສດນັກ ບ່ອນໃຫ້ແລ້ວຄຳນັກຄາປາຖນາ ແຫ່ງຄົນທັງຫລາຍ ອົງພຣະເຈົ້ານັ້ນໜັກ ສີ່ໝື່ນ ສີ່ ພັນຫ້າຮ້ອຍ ເປັນປັນຈະໂລ ຫະຄ້າທັງເງິນທັງທອງຫລໍ່ຄອມກັນ ອັນນຶ່ງ ຫາກເປັນແຕ່ ຕຳ ນານແຕ່ລັງກາມາກັບພຣະບາງເຈົ້າແລ ພຣະຍານະຄອນ ຫລວງໄດ້ ຍິນຈິ່ງໃຊ້ໄປທຳມິດເກົາສະຫາຍກັບພຣະຍາລັງ ກາ ຂໍເອົາທັມໄຕຣປິດົກທັງສາມ ກັບທັງພຣະ ບາງເຈົ້າ ມາໄຫວ້ ນົບໃຫ້ໄຜດສັດທັງຫລາຍໃນເມືອງນະຄອນຫລວງ ພຣະຍາ ລັງກາຈິ່ງໃຫ້ທັມໄຕຣປິດົກ ທັງສາມມາກ່ອນພຣະບາງເຈົ້າ ຈິ່ງຫາກສະເດັດມາໃນເມືອງນະຄອນຫລວງ ເມື່ອເດືອນສີ່ເພັງ ຢູ່ໃຜດສັດທັງຫລາຍ ໃນເມືອງນະຄອນຫລວງໄດ້ ໗ ຊົ່ວພຣະ ຍາຈິ່ງໄດ້ມາຢູ່ໃນເມືອງລ້ານຊ້າງ ເມື່ອພຣະຍາຟ້າງຸ່ມ ແລ ນາງແກ້ວເກງກັນຍາ ອັນໃຫ້ໄປຂໍຄອມ ພໍ່ລົບ ງູ່ຊື່ວ່າພຣະຍາ ນະຄອນຫລວງນັ້ນແລ ເມື່ອຈັກເອົາພຣະບາງເຈົ້າມານັ້ນ ມີ ພຣະມະຫາປາສມັນເຈົ້າກັບມະຫາເທພະລັງກາ ເຈົ້າເປັນປະ

ທານຊາວເຈົ້າມາດອມຊາວຄົນ ຈຶ່ງໃຫ້ຄົນຜູ່ເປັນຄ້ຳຄູງຮັກສາ
ພຣະບາງ ເຈົ້າທັງໄຕຣປິດົກທັງສາມແລ ພຣະສິງເຈົ້າທັງ
ຫລາຍມາກນັກຜູ່ນຶ່ງຊື່ ບໍ່ຣະສິງ ຜູ່ນຶ່ງຊື່ບໍ່ຣະເດດ ຜູ່ນຶ່ງຊື່ບໍ
ຣະສາດ ເຂົາທັງສາມນີ້ ປະກອບດ້ວຍສາສຕຣະເພດທັງມວນ
ມີໂຫຣາສາດເປັນເຄົ້າແລຄົນການຊ່າງ,ສັກຊ່າງພຣະຊ່າງເຫລັກ
ຊ່າງທອງຊ່າງຄຳແລ ເຄື່ອງຫລິ້ນ ທັງມວນ ເປັນຕົ້ນວ່າ
ຫລິ້ນຫນັງຣາມກຽນແລະລະເມັງ ເຄື່ອງຫລິ້ນເຄື່ອງເສບທັງ
ມວນຈັດ ໃຫ້ຄົນຊາວນະຄອນຫລວງມາປາງນັ້ນສີ່ບ້ານຄົນ ກັບ
ພຣະປາສມັນ ກັບທັງພຣະເທພລັງກາເຈົ້ານັ້ນພັນນຶ່ງ ຄົນ
ກັບບໍຣະສິງພັນນຶ່ງ ຄົນກັບບໍຣະເດດພັນນຶ່ງ ຄົນກັບບໍຣະສາດ
ພັນນຶ່ງຄົນກັບແມ່ນົມນາງເກິ່ງກັບຍາພັນນຶ່ງ ທັງຍິງຊາຍນ້ອຍ
ໃຫຍ່ ທັງມວນສີ່ມັນ ຈຶ່ງໃຫ້ເມືອງສາຍມາເປັນເມືອງໂອງນາງ
ຄົນທັງມວນຟູງນີ້ ພຣະນະຄອນຫລວງເຈົ້າສິ່ງໃຫ້ມາດອມພຣະ
ປາສມັນເຈົ້ານັ້ນແລ ມາຮອດເມືອງແກທັ້ນ ແມ່ນົມນາງແກ້ວເກິ່ງ
ກັບຍາເປັນພຍາດມາບໍ່ໄດ້ ຈຶ່ງໃຫ້ຢູ່ທີ່ນຶ່ງວ່າໂຄນໄພ່ຄົນເມືອງ

ແກຫັ້ນ ເຖົ້າເມືອງແກກັບເຈົ້າຫມື່ນແກະຈິ່ງແທກດິນທີ່ໂຄບ ໄຜ່ ໃຫ້ແກ່ແມ່ບົມ ນາງແກ້ວເກ່ງກັບຍາແລ້ວ ລວງກວ້າງສອງພັນວາ ລວງຍາວສອງພັນວາ ໃຫ້ເຂົາກໍ້ເປັນບ້ານຂອງເຂົາຫັ້ນແລ ຈິ່ງໄດ້ຊື່ວ່າບ້ານໄຜ່ແມ່ບົມເພື່ອດັ່ງນັ້ນແລ ຢູ່ຫັ້ນສອງເດືອນ ພຣະຍາຟ້າທັງນາງແກ້ວເກ່ງກັງຍາຈິ່ງແຕ່ງຮັບເອົາພຣະບາງເຈົ້າຮອດວຽງຈັນ ເຈົ້າຫມື່ນຈັນ ທັງຊາວບ້ານຊາວເມືອງທັງຫລາຍ ຈິ່ງອາຫນາພຣະເຈົ້າເຊົາທີ່ດອນຈັນຫັ້ນກ່ອນ ທ້າວພຣະຍາທັງຫລາຍທັງຊາວບ້ານຊາວເມືອງກໍໄປໄຫວ້ ພຣະບາງເຈົ້າ ພຣະມະຫາເຖຣະເຈົ້າທັງສອງຈິ່ງຖາມທ້າວພຣະຍາທັງຫລາຍວ່າ ທີ່ໃດວ່າປາກບາງໄຊທີ່ໃດປາກປາສັກ ທີ່ໃດວ່າໂພນສະບັກທີ່ໃດວ່າຫນອງຈັນ ທີ່ໃດວ່າຫນອງກະແດ ທີ່ໃດວ່າພັງຫມໍ້ ພຣະມະຫາປາສມັນເຈົ້າຖາມດັ່ງນັ້ນ ເຂົາຈິ່ງຫາເຖົ້າເມືອງຊຽງນຸງມາຖາມ ເຖົ້າເມືອງວຽງຈັນແລເຖົ້າເມືອງຊຽງນຸງ ຈິ່ງບອກຈິ່ງເລົ່າບ່ອນທີ່ທັງມວນດັ່ງນັ້ນ ພຣະຈິ່ງເອົາຕຳນານແຕ່ເມືອງນະຄອນຫລວງ

ນັ້ນມາອ່ານດູແມ່ນດັ່ງເຄົ້າເມືອງແລ ທ້າວພຣະຍາທັງຫລາຍ
ບອກແທ້ແລ ພຣະຈິ່ງວ່າອັນທີ່ປາກປ່າສັກນັ້ນເຈົ້າຣັດສີທັງ
ຫລາຍໝາຍຫລັກໄມ້ຈົບໄວ້ໃນທີ່ນີ້ແລ ອັນທີ່ສະໂພນສູງ
ເບື້ອງຕະວັນອອກເລົ່າຂ້າງໜອງກະແດນາກ້ຳຕະວັນຕົກ ເຈົ້າ
ຣັດສີບັງເອົາຫລັກຫີນອັນນຶ່ງເປັນສີ່ລ່ຽມ ໝາຍໄວ້ແຕ່ທາດ
ພຣະເຈົ້າທັງສີ່ຕົນພຸ້ນ ເປັນຕົ້ນວ່າພຣະກຸກກຸສັນໂທ ພຣະ
ໂກນາຄົມ ພຣະກັສສປະເຈົ້າ ມາໃສ່ສິ່ງຄຳຕົວນຶ່ງ ອະທິດ
ຖານຈິ່ງເອົາຫລັກຫີນໝາຍໄວ້ ອັນນີ້ເປັນທາດພຣະພຸທເຈົ້າ
ທັງສີ່ພຣະອົງດີຫລີແລ ທາດອັນມາຕົກທີ່ໃນເມືອງສຸວັນນະ
ພູມທີ່ຫລັກຫີນເປັນເຄົ້າແລ ເມື່ອພຣະຍາສີທັມມະອະໂສກະ
ຣາດ ໃຫ້ພຣະອະຣະຫັນຕາເຈົ້າທັງຫລາຍ ເອົາທາດມາຕົກໃນ
ເມືອງອັນນີ້ທີ່ນຶ່ງວ່າພູພຣະທາງທີ່ນີ້ເປັນເຄົ້າ ທີ່ນຶ່ງພຣະຍາ
ຣາຍ ທີ່ນຶ່ງພຣະສາດ ທີ່ນຶ່ງພຣະຂຽນທີ່ນຶ່ງພຣະຍາຫງຽນ
ສອງທີ່ນີ້ຢູ່ໃນເມືອງຂວາງ ໂລກບານທີ່ນຶ່ງວ່າພຣະບິນ ທີ່ນຶ່ງ
ວ່າໂພນຜີງແດດ ອັນທີ່ປາກປ່າສັກກ້ຳໄຕ້ອັນເຈົ້າຣັດສີໃສ່ທາດ

ອູບໄວ້ຈັບໄວ້ນັ້ນ ທາດພຣະເຈົ້າທັງສີໃສ່ອູບແກ້ວທັງສີສຸກ ຈິ່ງອະທິດຖານໄວ້ຫັ້ນແລ ອັນນີ້ເປັນທາດພຣະພຸທເຈົ້າທັງສີວົນນັ້ນແລ.

ອັນວ່າເມືອງຊະວາ ອັນເຮົາຈັກເມືອຢູ່ນັ້ນ ອັນນັ້ນດົນພຣະໂຄດມເຈົ້າໄດ້ມາໂຜດສັດທັງຫລາຍ ຕາມດັ່ງພຣະພຸທເຈົ້າທັງຫລາຍແຕ່ກ່ອນພຸ້ນດີຫລີແລ ທີ່ນຶ່ງວ່າຜາບຸນຟາກບ້ານຂອງກ້ຳເໜືອເມືອວັນຕົກເໜືອຄົກທອນຫັ້ນ ທີ່ນຶ່ງວ່າງອນສິບໂຮບເບື້ອງເໜືອ ທີ່ນຶ່ງວ່າພູເຂົາກ້າທີ່ນຶ່ງລຸ່ມພູເຂົາກ້າກ້ຳມາບ້ານຂອງ ເຂົາວ່າກ້ອນຫີນຕມໍໄລນ ທີ່ນຶ່ງວ່າລຸ່ມພູເຂົາກ້າກ້ຳມາວັນອອກ ໄດ້ສິບຫ້ວຍຊ່າງບ້ານ ເທິງນ້ຳຄານຫົວນາເຂົ້າຈ້າວ ອະຣະຫັນຕາເຈົ້າຍັງໄວ້ຮອຍຕີນສີ່ອັນ ທີ່ວ່ານີ້ວຕີນບໍ່ສຳແດງທີ່ພູເຂົາກ້າກ້ຳເມືອນ້ຳຄານຫັ້ນແລ ສາສນາພຣະພຸທເຈົ້າອັນມາຕັ້ງຢູ່ທີ່ເມືອງຊະວາ ຍັງຈັກເປັນໄປເທົ້າຫ້າພັນວັດສາພຸ້ນດີຫລີດາຍ ພຣະມະຫາປາສມັນເຈົ້າວ່າ ຕຳນານອັນອອກອ່ານໃຫ້ທ້າວພຣະຍາທັງຫລາຍຟັງນີ້

ຫາກມີແຕ່ປະຖົມກັລປ໌ພຸ້ນມາ ຄົນພົມທັງຫລາຍຫາກຂຽນໄວ້ໃນແຜ່ນຫີນ ອັນມີໃນເມືອງຄົນທະປະຖະນະຄອນພຸ້ນດີຫລີດາຍ ພຣະວ່າດັ່ງນັ້ນແລ ຢູ່ຫັ້ນໄດ້ສາມວັນສາມຄືນພຸ້ນັກເມືອທາງນ້ຳກໍເນືອ ດ້ວຍພຣະມະຫາປາສມັນເຈົ້າທັງສອງ ກໍຈິ່ງເອົາພຣະບາງເຈົ້າອອກມາວຽງຄຳຫັ້ນແລ

ພຣະບາວຽງຄຳຈິ່ງຣາທນາພຣະພຸທເຈົ້າໄວ້ໄຫວ້ນົບເຄົາຣົບບູຊາ ພາະບາງເຈົ້າຈິ່ງກະທຳປະຕິຫານ ເມື່ອກາງຄືນນັ້ນນາກບັກຮຸ່ງເຊົ້າແລ້ວ ເຂົາຈິ່ງແຕ່ງອອກມາ ເມືອງຊະວາ ຄົນພຸ້ຫາມພຣະເຈົ້ານັ້ນມີແປດຄົນຊູວັນ ເມື່ອຈັກມານັ້ນຍໍບໍ່ໄດ້ຫາບັກບັກ ໑ຝີ ຄົນຍໍກໍບໍ່ໄດ້ ພຣະທັງສອງ ນາຍທັງສາມອັນຮັກສາພຣະເຈົ້າມາແຕ່ເມືອງນະຄອນຫລວງພຸ້ນ ຈິ່ງດອຄດູສາກ ສາກອອກວ່າພຣະເຈົ້າມັກຢູ່ ຫັ້ນກ່ອນ ເທດວ່າ ພຣະເຈົ້າ ຫລິງເຫັນພຣະບາຟ້າງຸ່ມຢູ່ບໍ່ຊອບທັມ ແລຂຶ້ນເອົາຄ່າໄຣຄ່ານາຂຶ້ນເອົາລູກຍິງນາງສາວເພື່ອນແລເອົາເມັຽເພື່ອນ ມາຢູ່ນາບອນຂຶ້ນເອົາບ້ານເອົາເມືອງເພື່ອນ ຂ້າເຈົ້າບ້ານເຈົ້າເມືອງເສັຽ ຄົນທັງຫລາງ

ຈັກໄດ້ຂັບໜີຈາກເມືອງລ້ານຊ້າງ ເພື່ອນັ້ນແລ ອັນນຶ່ງອາຍຸ
ນາງແກ້ວເກ່ງກັບຍາກໍບໍ່ໝັ້ນຍືນຫລາຍ ພຣະບາງເຈົ້າຫລິງ
ເຫັນສິ່ງນັ້ນ ຈິ່ງບໍ່ມາຮອດເມືອງຊະວາເພື່ອດັ່ງນັ້ນແລ ແລຢູ່ໂຜດ
ສັດທັງຫລາຍຫັ້ນກ່ອນ ພາຍໜ້າສ່ຳລູກສ່ຳ ຫລານອັນເປັນ
ເຈົ້າແຜ່ນດິນຊຽງດົງຊຽງທອງ ຊອບໂລດຊອາ ທຳພຣະເຈົ້າຈິ່ງ
ມາໂຜດສັດທັງຫລາຍແລ ແຕ່ນັ້ນພຣະມະຫາປາສມັນເຈົ້າກັບ
ທັງເທພລັງກາເຈົ້າ ຈິ່ງໄວ້ພຣະບາງທີ່ວຽງດຳຫັ້ນແລ ພຣະມະ
ຫາເຖຣະເຈົ້າທັງສອງກັບທັງນາຍສາມຄົນນັ້ນ ຈິ່ງເອົາໝູ່ຊຸມ
ຂຶ້ນມາຮອດເມືອງຊະວາກ່ອນ ພຣະຈິ່ງມາຕ້ານຈາຣຈາ ກັບພຣະ
ຍາຟ້າແລເສນາອາມາດທັງຫລາຍ ພຣະຈິ່ງເອົາຕຳນານແຕ່
ເມືອງນະຄອນຫລວງມາອ່ານຕາມຕຳນານ ໃຫ້ພຣະຍາແລເສ
ນາອຳມາດຟັງກໍແມ່ນບ່ອນທີ່ອັນພຣະພຸທເຈົ້າທຳນາຍ ໄວ້ນັ້ນ
ແລ ທີ່ນັ້ນພຣະພຸທໂຄດົມເຈົ້າມາໂຜດສັດທັງຫລາຍ ໄວ້ບາທ
ລັກກ້າຊ້າຍທີ່ບໍ່ສ່ຳແດງນັ້ວໃຫ້ປາກົດແລ ຕຳນານຫາກ
ອອກວ່າດັ່ງນັ້ນ ພຣະມະຫາປາສມັນເຈົ້າຈິ່ງມາກໍ່ເຈດີອີຫານ

ຕາມນິທານຕຳນານ ແຕ່ອິນທະປັດຖະນະຄອນຫລວງພຸ້ນ ມາແລ ອັນວ່າເມືອງລ້ານຊ້າງຊື່ວ່າ ສຸວັນນພູມີນີ້ ກໍຫາກມີໃນຕຳນານພຣະຍາອິນຂຽນໄວ້ທີ່ກ້ອນຫີນໃນເມືອງອິນ ທະປັດຖະນະຄອນພຸ້ນແລ

ແຕ່ນີ້ເມືອໜ້າ ຈັກວ່າທີ່ພຣະຍາຟ້າ ແຕ່ງບ້ານແຕ່ງເມືອງອັນຊອບແລບໍ່ຊອບນີ້ກ່ອນແລ ພາຍໜ້າພຸ້ນ ຍັງຈັກມີສຳຫລານສຳເຫລນ ຜູ້ມີບຸນສົມພານ ໄດ້ມາຕັ້ງ ພຣະເຈດີອັນໃຫຍ່ອັນຫລວງ ເປັນທີ່ເພິ່ງແກ່ສັດທັງຫລາຍດີຫລີ ພຣະບາງເຈົ້າ ຈຶ່ງຈັກມາໂຜດສັດຍາມນັ້ນ ທີ່ຊຽງດົງ ຊຽງທອງຫັ້ນແລ ພຣະຍາຟ້າງຸ່ມມີ ລູກຊາຍສອງຄົນ ຜູ້ນຶ່ງຊື່ວ່າ ທ້າວອຸ່ນເຮືອນ ຜູ້ນຶ່ງຊື່ວ່າທ້າວຄຳກອງ ເປັນແສນເມືອງແກ່ ທ້າວອຸນເຮືອນຜູ້ເປັນພຣະຍາສາມແສນໄທນັ້ນແລ ລູກຍິງຜູ້ນຶ່ງ ຊື່ວ່ານາງແກ້ວເກດເກສີ ມີນຳນາງແກ້ວເກງກັນ ຍາລູກພຣະຍານະຄອນຫລວງຫັ້ນແລ ເມື່ອພຣະຍາຟ້າງຸ່ມອອກຈາກນະຄອນຫລວງ ມີອາຍຸໄດ້ ໒໑ ປີ ມາຜາບບ້ານຜາບເມືອງທັງຫລາຍໄດ້ ໔ ປີ ຈຶ່ງມາ

ນັ້ງຊຽງດົງຊຽງທອງປີຖ້ວນ ໕ ສເວີຍຣາດບ້ານເມືອງນັບແຕ່ອາ
ຍຸທ່ານໄດ້ ໒໕ ປີ ຈິ່ງຮອດຊຽງດົງຊຽງທອງຫັ້ນແລ ນັບແຕ່ນັ້ນ
ໄປໄດ້ ໑໕ ປີ ນາງແກ້ວເກ່ງກັນຍາ ຈິ່ງຕາຍ ແຕ່ນັ້ນທ່ານປູ່ບໍ່
ຊອບໂລກຊອບທັມ ຕັວຖ້ອຍສວນຄວາມອັນຜິດທ່ານວ່າແມ່ນ
ອັນແມ່ນທ່ານວ່າຜິດ ອັນນຶ່ງຂ້ອຍຄົນເສນາອຳມາດ ທ່ານອັບ
ລຸກແຕ່ນະຄອນຫລວງມານັ້ນ ທ່ານລ້ຽງດູໃຫ້ເພິ່ງໃຈເຂົາຊູ່ຄົນ
ແມ່ນເຂົາຜິດບໍ່ວ່າສັງ ອັນນຶ່ງເສນາມົນຕຣີແຕ່ພໍ່ ແຕ່ເກົ່າອັນ
ບໍ່ໄດ້ໄປດອມຕົວ ທ່ານລວດຂຶ້ນເສັ້ງເຂົາຜິດນ້ອຍວ່າຜິດຫລາຍ
ປ້ອນໂຫດທັງຫລາຍຝູງນີ້ ເສນາອຳມາດໄທຍທັງ ຫລາຍກັບ
ທັງຊາວເມືອງ ແລະພຣະສົງພ້ອມກັນຈິ່ງຂັບພຣະຍາຟ້າງຸ່ມ
ໜີຫັ້ນແລ ເມື່ອທ່ານໜີນັ້ນມີອາຍຸໄດ້ ໔໗ ປີ ທ່ານໜີ
ທາງກາວນ້ຳເມືອຕົກ ເມືອງນ່ານ ຢູ່ໄດ້ ໒ ປີ ທ່ານຈິ່ງ
ຕາຍເມື່ອທ່ານກາຍນັ້ນ ຈິ່ງອະທິດຖານໄວ້ວ່າດັ່ງນີ້ ດູກກູນີ້ໃຫ້
ສົ່ງເມືອເມືອງລ້ານຊ້າງແດ່ ວ່າດັ່ງນີ້ ເຂົາຈິ່ງສ້າງວັດສົບ ກະ

ດູກອັນນັ້ນ ຈຶ່ງໄດ້ຊື່ວ່າ ວັດພຣະຍາຟ້າ ພຣະຍາບານຈຶ່ງ
ເອົາກະດູກຫນ້າຜາກຫຍິບສິບໃສ່ກຸງດວງນັ້ນໄວ້ບູຊາ ພຣະພຸທ
ເຈົ້າຫັ້ນ ຈຶ່ງຂຽນຄວາມອັນພຣະຍາຟ້າສ້າງໄວ້ນັ້ນ ໃສ່ໃບທຸງ
ຫັ້ນວ່າດັ່ງນີ້ ທຸງ ເດີວນີ້ແລກະດູກຫນ້າຜາກພຣະຍາຟ້າ ບໍ່ແຕ່
ວ່າບຸນທ່ານຍັງໆຈັກໄດ້ເລີກສາສນາພຣະພຸທເຈົ້າ ເມື່ອສຳລູກ
ສຳຫລານສຳເຫລນພຸ້ນ ຈຶ່ງໃຫ້ລົມພັດຕັດເອົາທຸງອັນນີ້ເມືອ
ຮອດເມືອງລ້ານຊ້າງ ໃຫ້ລູກທ່ານໄວ້ສ້າງເຈດີວິຫານໄວ້ດັ່ງທ່ານ
ອະທິຖານນີ້ເຖີ້ນ ພຣະຍານານອະທິຖານແລ້ວ ເທວະດາຈຶ່ງ
ໃຫ້ລົມພັດເອົາມາຕົກດອນສູງທີ່ນຶ່ງ ເຂົາຈຶ່ງເອີ້ນວ່າ ດອນ
ຈານນັ້ນແລ

ເມື່ອນັ້ນ ທ້າວອຸນເຣືອນຜູ້ລູກພຣະຍາຟ້ານັ້ນ ຈຶ່ງ
ເອົາທຸງຊຸນ້າຜາກອັນນັ້ນມາດັ່ງສ້າງເປັນເຈດີທາດກູ່ໄຕຫັ້ນແລ
ພູກູ່ກາງນັ້ນກະດູກຟ້າລຳຣຽວ ພູກູ່ເຫນືອນັ້ນກະດູກຟ້າມືດ
ແລ

ບັດນີ້ ຈັກຈາພົງສາທ້າວພຣະຍາ ໄປພາຍຫນ້າ ເສນາ

ທັງຫລາຍພ້ອມພຣະສົງເຈົ້າເປັນຕົ້ນວ່າ ພຣະມະຫາສາມີ ເຈົ້າທັງສອງເປັນປະທານ ຈິ່ງເອົາທ້າວອຸ່ນເຮືອນມາເປັນພຣະຍາແທນ ຈິ່ງໃສ່ຊື່ວ່າພຣະຍາສາມແສນໄທທັ້ນແລ ຈິ່ງເອົານາງນ້ອຍນິ່ງຮຽວລູກພຣະຍາຄຳຮຽວ ອັນເປັນລູກສາວນ້ອງພໍ່ພຣະ ສາມແສນໄທຈິ່ງເອົາມາເປັນນາງແທນ ຈິ່ງໃສ່ຊື່ວ່ານົວແທນທັ້ນແລ ຍັງມີພີ່ລ້ຽງຜູ້ນຶ່ງຊື່ວ່ານາງກາ ຮູ້ແຕ່ງຮູ້ແປງຊູ່ສິ່ງຊຸເບື້ອງທັ້ນແລ ແຕ່ນັ້ນບ້ານເມືອງກໍກ້ວາງໄປພາຍຫນ້າສາສນາພຣະພຸທເຈົ້າກໍຮຸ່ງເຮືອງໄປທັ້ນແລ ແລ້ວຈິ່ງມາສ້າງວັດແລ້ວ ຈິ່ງເອົາແກ້ວລູກນຶ່ງອັນນາງແກ້ວເກິ່ງກັບຍາ ອັນເປັນແມ່ພຣະຍາສາມແສນໄທນັ້ນ ເອົາແຕ່ເມືອງນະຄອນຫລວງມານັ້ນໃສ່ໃນອົກພຣະພຸທເຈົ້າກໍຮຸ່ງເຮືອງໄປທັ້ນແລ ຈິ່ງໃສ່ຊື່ວ່າວັດແກ້ວທັ້ນແລ ເມື່ອສ້າງວັດແກ້ວແລ້ວ ຈິ່ງຣາທນາພຣະເທພະລັງກາເຈົ້າມາເປັນພຣະມະຫາສາມີເຈົ້າວັດແກ້ວຈິ່ງໃຫ້ຂະໄພແກ່ສັດທັງຫລາຍຜູ້ຄວນຕີຄວນຜູກ ຄວນເງິນຮ້ອຍເງິນພັນຂັນຄ່າຄໍກົດີ ຄັນໄດ້ເຂົ້າມາເຂດວັດແກ້ວແລ້ວລວດບໍ່ໃຫ້ກະທຳ

ບາບບໍ່ໃຫ້ເສັງກບໍ່ເສັງເງິນສັງ ທໍ່ໃຫ້ມີເຂົ້າຕອກດອກໄມ້ເພິ່ງ
ທຽນສິນມາ ແລ້ວບອກສອນໃຫ້ໄປຫາວຽກຫາການດັ່ງເກົ່າ
ອະພັຍໂທດເສັງທັງມວນຫັ້ນແລ ຈິ່ງໃຫ້ເຂດໃຫ້ແດນໃຫ້ທານ
ບ້ານເມືອງທັງມວນກັບວັດແກ້ວ ເປັນອັນມາກອນຫລາຍນັກ
ທັງໄທບ້ານໄພ່ແມ່ນິນທັງວິວແມ່ນິນ ໃຫ້ທານກັບວັດແກ້ວຫັ້ນ
ແລ ເຈົ້າແຜ່ນດິນທັງສອງຜົວເມັຽ ຈິ່ງວັງຄໍາປາຖນາວ່າ ເພື່ອ
ຂ້າທັງສອງຂໍໃຫ້ມີລູກຊາຍສອງຄົນຜູ່ປະເສີດ ລູກຍິງສອງ
ຄົນຜູ່ປະເສີດ ມີພບາປັນຍາຊູ່ສິ່ງຊູ່ເບື່ອງ ອັນນຶ່ງອານິສົງຜົນ
ອັນໄດ້ສ້າງວິຫານແລະພຣະພຸທຮູບເຈົ້ານີ້ ໃຫ້ໄປຮອດຈອດ
ເຖິງປູ່ຍ່າຕາຍາຍເປັນຕົ້ນ ວາຊຸນບໍຣົມຣາຊາທິຣາດ ແລນາງ
ຍົນມະພາລາທັງນາງນ້ອຍເອັ້ນເຖົາທັງເຜົ່າພົງວົງສ໌ ຊູ່ຄົນ
ຜູ້ຕາຍໄປແລ້ວກໍດີ ຜູ້ຍັງບໍ່ດັບກໍດີ ຢູ່ໃນທຸກໃຫ້ພົ້ນຈາກທຸກ
ຢູ່ໃນສຸກແຮ່ງໃຫ້ເຖິງສຸກຜູ້ຍັງບໍ່ດັບນີ້ ເປັນວົນວ່າເຈົ້າແສນແລະ
ຫມື່ນຫລວງແລເສນາອໍາມາດ ຂຸນຫມື່ນຂຸນພັນກວານນ້ອຍ
ກວານໃຫຍ່ ໄພ່ຟ້າຫນ້າໃທທັງຫລາຍ ຜູ້ໄດ້ສ້າງໄດ້ກະທໍາ

ດອນກໍດີ ຜູ້ໄດ້ອະນຸໂມທນາດອນກໍດີ ພໍແຕ່ຫໍ່ໄດ້ຍິນກໍດີໄປ
ເຂດອິງເມືອງລ້ານຊ້າງ ທີ່ນຊູ້ແທ່ງຊູກໍເຖິງ ພຣະຍາສານ
ແສນໄທເຈົ້າທັງປິວແຫ່ງຫລັ່ງນ້ຳແຜ ໄປໃຫ້ແກ່ສັດທັງຫລາຍ
ດັ່ງນີ້ແລະປູ່ໄປໄດ້ສອງເດືອນມາ ນາງຈິ່ງມີເຫັນພູຊວງເປັນ
ຄຳທັງນອນ ຣຸ່ງເຊົ້າແລ້ວນາງຈິ່ງເລົ່າຕໍ່ພຣະຍາຕົນເປັນຜົວ
ແລ ແຕ່ນັ້ນພຣະຍາຈິ່ງອຸກທາຍຈົງນັກປາດທັງຫລາຍມາເປັນ
ຕົ້ນວ່າ ບໍຣະສິງ ບໍຣະເດດ ບໍຣະສາດ ພຣະຍາຈິ່ງໃຫ້ນາງ
ເລົ່ານິມິດຄາຝັນວ່າ ເຫັນພູຊວງນ້ອຍພູຊວງຫລວງ ເປັນຄຳ
ຫມົດທັງນະນ ນຣາມຈິ່ງຖວາຍວ່າ ເຈົ້າຈັກມີລູກຊາຍຜູ້ປະເສີດ
ເພາະເຫື່ອນາງຝັນນັ້ນແລ ເດືອນສາມອອກຫ້າຄ່ຳວັນອາທິດ
ແຕ່ນັ້ນ ນາງກໍກະລິງຄັບໄປເຖິງເດືອນ ໑໑ ອອກຄ່ຳນຶ່ງ ຈິ່ງ
ໄດ້ລູກຊາຍຜູ້ນຶ່ງອັນມີເດືອນແລ້ວຈິ່ງໃສ່ຊື່ວ່າ ເຈົ້າລ່ຳຄຳແດງ
ຫັ້ນແລ ປູປີນຶ່ງເຈົ້າເມືອງລານນາຈິ່ງເອົານາງນ້ອຍອ່ອນສ່
ທັງເອາເມືອງຄືນ ທັງໄທເມືອງພະຍາວມາດອນພັນນຶ່ງ ຄືວ
ພັນນຶ່ງພຣະຍາສາມແສນໄທ ເຈົ້າຈິ່ງໃຫ້ແປງໂຮງຫລັງນຶ່ງທໍ
ສູງຫລັງນຶ່ງນະມັນທໍ່ນອນ ຈິ່ງໃສ່ຊື່ວ່າຫໍສູງຊຽງການ ຄືວໄທ

ເມືອງພຣະຍາພັນຄົວນັ້ນ ຈຶ່ງໃຫ້ປູ່ນອນທ້າຍພູເຂົາກ້າ ຈຶ່ງ
ໃສ່ຊື່ວ່າງ່ອນພຣະຍາວ ປູ່ໄດ້ປີນຶ່ງຈຶ່ງມີລູກຊາຍຜູ້ນຶ່ງຕົນ ຈຶ່ງ
ໃສ່ຊື່ວ່າທ້າວກ້ອນກໍ່ເມືອງໃຫຍ່ມາແລ້ວພໍ່ຈຶ່ງໃຫ້ໄປກິນເມືອງ
ຊຽງສາ ຈຶ່ງໃສ່ຊື່ວ່າຊຽງສາ ພຣະຍາໃບທິຍາ ຈຶ່ງສິ່ງລູກສາວ
ຜູ້ນຶ່ງຊື່ວ່າ ນາງແກ້ວຍອດຟ້າມາເປັນເມັຽ ພຣະຍາສາມແສນ
ໄທເຈົ້າຈຶ່ງແປງ ໂຮງຫລວງຫລັງນຶ່ງເໜືອສິບດົງໃຫ້ປູ່ຈຶ່ງໃສ່
ຊື່ວ່າໂຮງຊຽງໃຕ້ຫັ້ນແລ ນາງມາຢູ່ປີນຶ່ງ ຈຶ່ງໄດ້ລູກຊາຍຜູ້ນຶ່ງໃສ່
ຊື່ວ່າທ້າວວັງບຸຣີແລ ພໍ່ໃຫ້ໄປກິນເມືອງປາສັກເລົ່າມີລູກຍິງຜູ້ນຶ່ງ
ຊື່ວ່ານາງມະຕາໂກ ໃຫຍ່ມາໄດ້ ໕ ຂວບ ຈຶ່ງຕາຍເສັຽ ຜູ້ພີ່
ອ້າຍເອົາດູກລ່ອງມາສ້າງໄວ້ເກີນຶ່ງ ຈຶ່ງໃສ່ຊື່ວ່າວັດສີຫອມ ຈຶ່ງ
ມານອບວັດອັນນັ້ນໄວ້ກັບວັດແກ້ວເມືອງຊະວາຫັ້ນແລ ປູນ້ອຍ
ນຶ່ງພຣະຍາຊຽງຣຸ່ງຈຶ່ງເອົາລູກສາວມາໃຫ້ເປັນເມັຽ ພຣະຍາ
ສາມແສນໄທຈຶ່ງໃຫ້ປູ່ທໍາທ້າຍຊຽງທອງ ຈຶ່ງໃສ່ຊື່ວ່າແມ່ຫງວ
ໂຮງທອງຫັ້ນແລ ມີລູກຊາຍນຶ່ງຈຶ່ງໃສ່ຊື່ວ່າທ້າວກ້ອນຄໍາ ພໍ່
ໃຫ້ໄປກິນເມືອງປາກຫ້ວຍຫລວງ ເຈົ້າປາກຫ້ວຍຫລວງມີ
ລູກຊາຍນຶ່ງ ໃສ່ຊື່ວ່າ ທ້າວຕອນຄໍາເປັນຫລານພຣະຍາສາມ

ແສນໄທ ນັບແຕ່ພຣະຍາສາມແສນໄທມີອາຍຸໄດ້ ໗໙ ປີ ຫນໍ່
ທາຍແຕ່ນ້ອຍວ່າ ຈັກຕາຍດຶກນ້ຳ ມາໄດ້ກິນນ້ຳນີ້ສັງຂານໄປ
ແຄ້ນນ້ຳຕາຍທີ່ໂຮງຊຽງທອງຫັ້ນແລ ນາງແຫ່ນຜູ່ເປັນເມັຽ ຈຶ່ງ
ເອົາລູກຊາຍຜູ່ຊື່ວ່າສຸວັນນະປາຣັງເປັນເຈົ້າແຜ່ນດິນພຣະຍາຈຶ່ງ
ມາສ້າງວັດຫລັງນຶ່ງ ສິບກະດູກທີ່ວ່າຫໍ້ຂຶ້ນແຖນ ເມື່ອສ້າງແລ້ວ
ໃສ່ຊື່ວ່າ ວັດສວນແຖນຫັ້ນແລ ເລົາສ້າງອຸໂບສົດຫລັງນຶ່ງທີ່
ກົງເມືອງຫັ້ນໄວ້ ຈຶ່ງອາຣາທນາມະຫາສັດທາທີໂກເຈົ້າມາເປັນ
ມະຫາສາມີເຈົ້າວັດໂບດ ເລົາເອົາມະຫາສມຸດເຊົ້າມາເປັນ
ສັງກະເສນາເຈົ້າຢູ່ວັດສວນແຖນ ຈຶ່ງມາໃຫ້ທ່ານຜູ່ນຶ່ງ ຊື່ວ່າ
ທ່ານລຸງລອດມາເປັນເສດຖີໃຫ້ຄ້ຳຄຶງວັດສວນແຖນ ຈຶ່ງຮຽກ
ວ່າເສດຖີລຸງລອດວັດສວນແຖນ ບໍ່ຫາກເປັນວັດສິບກະດູກ
ພຣະຍາສາມແສນໄທເຈົ້າຫັ້ນແລ ພຣະຍາສຸວັນນະປາຣັງຈຶ່ງ
ໄດ້ມາເປັນເຈົ້າແຜ່ນດິນ ຈຶ່ງຝັນວ່າໄດ້ກິນນ້ຳໃຈໄກ່ກະເສລາ
ແລໄດ້ດອກບົວໃນສະຫັ້ນ ຈຶ່ງເລົ່າຄ່າຝັນແກ່ນັກປາດທັງ
ຫລາຍຫັ້ນແລ ເຂົາຈຶ່ງທາຍວ່າ ເຈົ້າກູຈັກໄດ້ລູກຊາຍຜູ່

ປະເສີດຄືນນີ້ງແລ   ແຕ່ນັ້ນໄປພຣະຍາຈຶ່ງມີລູກຊາຍຜູ້ນຶ່ງ
ຈຶ່ງໃສ່ຊື່ວ່າທ້າວໄຄ່ບິ່ວບານຫັ້ນແລ   ພຣະຍາສຸວັນນະປາຣັງ
ມີອາຍຸໄດ້ ໖໔ ປີຈຶ່ງຕາຍ   ເຂົາຈຶ່ງເອົາໄປເຜົາທີ່ນຶ່ງຈຶ່ງສ້າງ
ວັດຫລັງນຶ່ງສົບກະດູກ   ຈຶ່ງໃສ່ຊື່ວ່າວັດມະໂນຣົມຫັ້ນແລ
ແຕ່ນັ້ນເມືອພາຍຫນ້າຈຶ່ງເອົາ ເຈົ້າພຣົມກຸມານຫລານພຣະ
ຍາສາມແສນໄທ   ເປັນພຣະຍາແທນໄດ້ສາມປີ   ມະຫາເທ
ວີເອົາຫລານນ້ອຍໄປຂ້າເສັຽ   ທີ່ຄົກທອນນັ້ນແລ   ແຕ່ນແຕ່
ນັ້ນໄປນາງເທວີຜູ້ເປັນລູກຟ້າຄຳຮຽວນັ້ນ ຊື່ນ້ອຍວ່ານາງອາມ
ພັນ ເປັນເມັຽເຖົ້າພຣະຍາ ສາມແສນໄທນັ້ນແລ ແຕ່ງບ້ານແປງ
ເມືອງບໍ່ເປັນ ພຣະສັງຄະເຈົ້າທັງຫລາຍເສນາ ອຳມາດພີ່ລ້ຽງ
ຜູ້ຊື່ວ່ານາງກາບັ້ນຫ້າມຂໍວ່າ ຢ່າໃຫ້ເຮັດ ໃຫ້ກະທຳກໍບໍ່ຟັງ
ແຕ່ນັ້ນບ້ານເມືອງລວດເສົ້າສູນເສັຽຫັ້ນແລ   ແຕ່ນັ້ນຈຶ່ງມາເອົາ
ທ້າວໄຄ່ບິ່ວບານ ແທນເປັນພຣະຍາໄດ້ ໓ ເດືອນນາງເທວີຈັກ
ຂ້າເສັຽ ເຈົ້າຮູ້ແລ້ວລັກຫນີນາງເທວີໃຫ້   ໄປນຳຫັນທີ່ພາຄາວ
ເຂົາຈຶ່ງປົງເສັຽຫັ້ນ ນາງເທວີຈຶ່ງໃຫ້ໄປເອົາ ທ້າວຊຽງສາອົນ
ເປັນລູກນາງນ້ອຍອ່ອນສີ ມາເປັນພຣະຍາໄດ້ປີປາຍເຖິງນຶ່ງນາງ

ເຫວີໃຫ້ເອົາໄປຂ້າເສັຽທີ່ກົກເຣືອຫັ້ນແລ ແຕ່ນັ້ນນາງກາກໍໜີ
ເສັຽ ມາຕັ້ງບ້ານຢູ່ທີ່ນຶ່ງຊື່ວ່າງອນພູສີ ເຜົ່າພິງວິງສາ ເຈົ້າແຜ່ນ
ດິນລວດໜີໄປຄວ່າລີ້ຄວ່າຊ່ອນຢູ່ຫັ້ນແລ ນາງເຫວີຈິ່ງໃຫ້ໄປ
ເອົາພຣະຍາປາກຫ້ວຍຫລວງ ມາເປັນພຣະຍາໄດ້ ໑໐ ເດືອນ
ຈິ່ງຂໍໜີໄປຢູ່ປາກຫ້ວຍຫລວງດັ່ງເກົ່າ ໄດ້ຂວບນຶ່ງຕາຍເສັຽ
ເອົາຈິ່ງເຜົາເສັຽ ທີ່ປາກຫ້ວຍຫລວງກ້າເໜືອ ຈິ່ງສ້າງວັດຫລັງ
ນຶ່ງຊື່ວ່າວັດສົບກະດູກພຣະຍາປາກຫ້ວຍຫລວງ ແລນາງເຫວີ
ໃຫ້ມາເອົາເພັຽຂວາປະສັກເມືອເປັນ ພຣະຍາແທນບໍ່ມັກມາ
ຍັງມີຜູ້ນຶ່ງຊື່ວ່າໝໍ່ມິນມັນເອົາຂ້ອຍຈື່ຂອງພຣະຍາສາມແສນ
ໃຫເປັນເມັຽ ມັນຈິ່ງມີລູກວອນຜູ້ນຶ່ງ ຊື່ວ່າທ້າວ ຄໍາເກີດ
ມັນຜູເມັຽຈິ່ງບອກຊຸມ້າ ເສນາມົນຕຣີທັງຫລາຍ ເຂົາຂອງອັນ
ໃດວິມັນກໍບອກລູກມັນໄວ້ໃຫ້ ຈີ່ໄດ້ຊື່ສິ່ງອັນ ມັນຈິ່ງວ່າລູກກູ
ນີ້ພຣະຍາສາມແສນໃຫມາເກີດວາຍ ຄວາມອັນນັ້ນລວດ ຊ່າໄປ
ຮອດມະຫາເທວີ ຈິ່ງໃຫ້ຮອງມາເອົາເມືອເປັນ ເຈົ້າແຜ່ນດິນ
ເທະເພີ້ອນ່າເຊື້ອທັງຫລາຍ ຮັກພຣະຍາສາມແສນໄທເຈົ້າ ຄັນ
ໄປເກີດທີ່ໃດທັງຫລາຍກໍນໍາເອົາເພື່ອສິ່ງນັ້ນ ໄດ້ມາເປັນເຈົ້າແຜ່ນ

ດິນແລ້ວຈຶ່ງສ້າງວັດຫລັງນຶ່ງເຫນືອສວນແຖນ ຫັ້ນແລ ນາງເທ
ວີ ຈຶ່ງໃສ່ຊື່ວ່າວັດສີເກີດນັບເປັນເຈົ້າແຜ່ນດິນ ໄດ້ສອງ ປີປາຍ
ສອງເດືອນນັ້ນເປັນຣຸງ ທ້ອງແຕກຕາຍ ນາງເທວີແລຫນໍ່ນິນ
ຜ່ເປັນນໍ່ຈຶ່ງມາສ້າງວັດສີບກະດູກ ທີ່ໃຕ້ບ້ານເຈົ້າແມ່ກາຫັ້ນ
ຈຶ່ງຊື່ວ່າວັດມີນຫັ້ນແລ ນາງເທວີນັ້ນ ມັນຮ້າຍກ້າແຂງເພື່ອ
ນັ້ນເອົາລູກປູ່ ລ້ຽງພຣະບາຟ້າເປນຜົວນັບ ມັນ ໃສ່ຊື່ ວ່າແສນ
ຫລວງຊຽງລໍ ທັງຫລາຍ ຈຶ່ງວ່າຂານີ້ບໍ່ຊອບໃລກທັມດີຫລີແລ
ເສນາທັງຫລາຍ ຈຶ່ງເອົາອອກຈາກໂຮງຊຽງທອງ ໄປຂ້າເສັຽ
ທີ່ພາວ່ຽວຟາກໃນຊຽງທອງຫັ້ນແລຍາມເບື່ອນາງເທວີຕາຍນັ້ນ
ອາຍຸໄດ້ ໔໕ ແມ່ກາຈຶ່ງມາຂໍເອົາຄາບດອນເສນາທັງຫລາຍ
ເບື່ອເຜົາເສັຽບ້າງທ່ານຫັ້ນ ຈຶ່ງສ້າງວັດຫລັງນຶ່ງສີບກະດູກນະ
ຫາກະກວີ ຈຶ່ງໃສ່ຊື່ວ່າວັດແມ່ກາຫັ້ນແລ ເຈົ້າແມ່ການັ້ນເປັນພີ່
ລ້ຽງມະຫາເທວີແລ ຯ

ບັດນີ້ຈັກເລົ່າພົງສາແມ່ກາກ່ອນແລ ແມ່ການັ້ນ ງຸກູ່
ນຶ່ງເປັນນາງສອງຫມື້ນໄວ ນາງນັ້ນມີລູກສອງຄົນ ຜູ່ພີ່ອ້າຍ

ໄດ້ເປັນພຸມເຫນືອເມືອປາງພຣະວິຊຸລຣາດເຈົ້ານັ້ນແລ ເຈົ້າພູມເຫນືອນັ້ນໄດ້ເອົານ້ອງພຣະວິຊຸລເປັນເມັຽ ຈິ່ງມີລູກຊື່ວ່າພຣະສອງເມືອງ ອັນທັງຫລາຍວ່າພຣະຮູບຫັ້ນແລ ແມ່ພຣະສອງເມືອງຕາຍເຈົ້າພູມເຫນືອ ຜູ້ຊື່ວ່າເຈົ້າຊ້າຍນັ້ນ ຈິ່ງມາເອົາພີ່ເອື້ອຍພຣະບາກາງ ທັງເປັນພີ່ເອື້ອຍດີນພະຣະໄຊຍະເຊດຖາທິຣາດເຈົ້ານັ້ນແລ ສາມດີນນີ້ເປັນລູກພໍດຽວແມ່ດຽວກັນ ເຊື້ອພຣະຍາຈິກຄຳເຈົ້າພູມເຫນືອຈິ່ງມີລູກນຳຜູ້ນຶ່ງ ໃສ່ຊື່ວ່າບຸບຍະສານ ອັນໄດ້ເປັນແສນເມືອງລ້ານຊ້າງ ຈິ່ງໃສ່ຊື່ວ່າອຸປະຣາຊາຫັ້ນແລ ອັນນີ້ນາງສາເຈົ້າແມ່ກາແລພຣະຍາຈິກຄຳເປັນໂຄດເປັນວົງອັນດຽວກັນຫັ້ນແລ ຈາພົງພັນແມ່ກາກໍແລ້ວເທົ່ານີ້ກ່ອນແລ

ແຕ່ນີ້ໄປພາຍຫນ້າຈັກຈາພົງພັນບັກປາດກ່ອນແລ ບັກປາດເຈົ້າອັນມາແຕ່ເມືອງນະຄອນຫລວງເປັນຕົ້ນວ່າ ນໍຣະສິງງມີລູກສອງຊາຍ ຜູ້ພີ່ຊື່ວ່າ ນໍຣະເດດ ຜູ້ນ້ອງຊື່ວານໍຣະຣາດ ຂາເຈົ້າທັງສອງນັ້ນຈົບໄຕຣເພດທັງສາມ ອັນມີກຳລັງເຮັວນຶ່ງນັກ

ພຍາປັນຍາກໍຫລາຍທະບານຂຶ້ນເມືອອາກາດກາງຫາວໄດ້ ໒໒ ສອກ ໑໗ ສອກ ໄດ້ ໑໖ ສອກ ອັນນີ້ເປັນປົກກະຕິ ບໍຣະເດດມີ ລູກຊາຍຜູ້ນຶ່ງຈົບໄຕຣເພດທັງສາມບໍຣະອາດມີ ລູກຊາຍຜູ້ນຶ່ງກໍ ຈົບໄຕຣເພດທັງສາມ ຣິດທີເຣວແຮງແລພຍາປັນຍາກໍລືງດຽວ ກັນ ກຳລັງເຂົາເຈົ້າແລຄົນບັ້ນຄົນເຣົາບໍ່ຮ້ອຍນຶ່ງກໍດີ ພັນນຶ່ງກໍ ດີ ຈັກກຸມຕໍ່ມືເຂົາເຈົ້ານັ້ນ ແຂນຫັກ ມືຫັກ ຫົວເຂົາແຕກ ອອກດັ່ງນັ້ນ ກໍບໍອາດຈັກກຸມເອົາໄດ້ແລ ອັນເຊີງດາບເຂົານັ້ນ ຟັນຄົນເມືອຕໍ່ເຖີງຫມື່ນ ກໍເຈັບກໍຕາຍບໍ່ອາດຈັກເອົາໄດ້ ນັກ ປາດທັງສາມອັນເປັນພໍ່ເຂົາເຈົ້າທັງສີ່ນີ້ກໍຕາຍໄປ ດ້ວຍສວັດດີ ຕາມກຳລັງເຂົາເຈົ້າທັງສາມຫັ້ນແລ ຈິ່ງສ້າງວັດຫລັງນຶ່ງສົບ ກະດູກນັກປາດທັງສາມ ໃສ່ຊື່ວ່າວັດຫົວຂອງຊຽງກາງ ພຣະ ມະຫາປາສມັນເຈົ້າກໍຕາຍ ພຣະມະຫາເທພລັງກາແລະ ພຣະມະຫາສາມີເຈົ້າວັດແກ້ວ ກໍຈຸຕິໄປຕາມກັນ ຈິ່ງມາແປງ ເຈດີດວງນຶ່ງຕໍ່ຫນ້າວັດປ່າຫມັນຫັ້ນ ຈິ່ງໃສ່ຊື່ວ່າວັດພຣະພີ ນ້ອງທັງສາມຫັ້ນແລ ແຕ່ນັ້ນບ້ານເມືອງລວດເສົ້າສູບເສັງ ທ້າວພຣະຍາບໍ່ໄດ້ເຖີງສາມປີ ນັກປາດທັງສີ່ແລເສນາອຳມາດ

ທັງຫລາຍພ້ອມກັນຈຶ່ງມາເອົາ ພຣະມະຫາສັດທາທີໂກເປັນ ມະຫາສາມີເຈົ້າວັດແກ້ວ ຈຶ່ງມາເອົາເຈົ້າສມຸທໂຄດເປັນເຈົ້າ ວັດປ່າສນັບ ຈຶ່ງໄດ້ຊື່ວ່າພຣະມະຫາສາມີເຈົ້າຕົນພີຕົນນ້ອງ ປາງນັ້ນແລ ຈຶ່ງຈັກໄດ້ຊື່ວ່າຣາຊກຣູເຈົ້າແຜ່ນດິນເມືອງລ້ານ ຊ້າງ ຫລ້າງມີສອງຕົນແລ ນັກປາດຜູ້ຈັກເປັນທີ່ເສງທີ່ຖາມ ຫລ້າງມີສີ່ ມີສອງ ຄົນທັງຫລາຍອັນເປັນເຈົ້າແຜ່ນດິນຈຶ່ງສຸກ ກະເສີນມາເພື່ອດັ່ງນັ້ນແລ

ບັດນີ້ ຈັກຈາພົງພຣະຍາຟ້າແລະພຣະຍາສາມແສນໄທ ກ່ອນແລ ພຣະມະຫາສາມີເຈົ້າທັງສອງແລະນັກປາດທັງສີ່ ແລະເສນາອຳມາດທັງຫລາຍຈຶ່ງພ້ອມກັນ ໄປຣາທນາເຜັ່ງປະ ສັກ ມາເປັນເຈົ້າແຜ່ນດິນຊຽງດົງຊຽງທອງ ໂຮງທານປູ່ວັນ ເດືອທານທີ່ວຽງຈັນທັ້ນແລ ເຈົ້າກໍຍົນມາຕາມນິມົນ ຈຶ່ງມາ ຮອດເມືອງຊະວາ ພຣະມະຫາສາມີເຈົ້າທັງສອງນັກປາດທັງ ສີ່ ກັບທັງເສນາອຳມາດທັງຫລາຍ ພ້ອມກັນຍໍຂຶ້ນໃຫ້ເປັນ ເຈົ້າແຜ່ນດິນ ຈຶ່ງໃສ່ຊື່ວ່າພຣະຍາໄຊຍະຈັກກະພັດແຜ່ນແຜ້ວ

ຫັ້ນແລ ເຈົ້າຈິ່ງມາຍໍພຣະມະຫາສມຸດເຈົ້າເປັນທັມມະເສ
ນາ ໃຫ້ຢູ່ວັດມະໂນຣົມ ຈິ່ງເອົາພຣະມະຫາຍານຄັມພີເຈົ້າ
ເປັນສັງຄະເສນາໃຫ້ຢູ່ວັດໂບດກາງເມືອງ ຈິ່ງໃຫ້ອາດຍາອະ
ພັບໂຫດຊີວິດແກ່ສັດໂລກທັງຫລາຍໂດຍດັ່ງໂບຮານນັ້ນ ເຈົ້າ
ມາສເວີຍຣາດນີ້ ລູກຊາຍຜູ້ນຶ່ງຊື່ວ່າທ້າວຊຽງລໍ ໃຫ້ເມືອເປັນ
ແສນເມືອງແກ່ພໍ່ ຈິ່ງມີຜູ້ນ້ອງໃຫ້ເມືອກິນເມືອງກະບອງ
ຈິ່ງໃສ່ຊື່ວ່າພຣະຍາຫມື່ນເຖົ້າ ລູກຊາຍຜູ້ນຶ່ງຊື່ວາເຈົ້າຕີນ
ຫລ້າ ໃຫ້ໄປກິນເມືອງແກ ຜູ້ນຶ່ງຊື່ວ່າຣິຊຸລຣາຊາໃຫ້ໄປກິນ
ວຽງຄໍາ ທັງທ້າວຫລ້າພັນຫນອງ ຜູ້ນຶ່ງຊື່ວາຄໍາເຮືອງ ໃຫ້
ເມືອກິນເມືອງຊ້າຍແລະເມືອງຊອງຈິ່ງໃສ່ຊື່ວາເຈົ້າຊ້າຍຊອງ
ຜູ້ນຶ່ງຊື່ວາຄໍາພາໃຫ້ເມືອກິນເມືອງຂວາ ຈິ່ງໃສ່ຊື່ວ່າຂວາ
ເຫຍາ ຈິ່ງໃຫ້ພໍ່ລ້ຽງຜູ້ນຶ່ງ ໃຫ້ເມືອເຮັດຕາງໃສ່ຊື່ວ່າຂວາລູງ
ຊ້າງຕົວນຶ່ງເມືອແຂວງເມືອງຂວາ ມີຂາແດງຄີງແດງເປັນດັ່ງ
ທອງແດງນັ້ນແລ ສູງໄດ້ເກົ້າສອກ ແຕ່ເຖົ້າຫູກ້າຂວາມາ
ເຖິງເຖົ້າຫູຊ້າຍໄດ້ສາມສອກ ຈິ່ງໃສ່ຊື່ວ່າເຊີຍບັ້ງທອງຕົວນີ້

ຊ້າງຕົ້ນເຈົ້າຂວາເທພາແລ ເທົ່ານີ້ລູກຊາຍພຣະຍາໄຊຍະ
ຈັກກະພັດແຜ່ນແຜ່ວທັ້ນແລ ລູກຍິງຜູ້ນຶ່ງ ໃຫ້ກິນເມືອງໝື່ນ
ໜ້າ ຜູ້ນ້ອງຍິງໃຫ້ກິນເມືອງໝື່ນແພນ ພຣະຍາໄຊຍະ
ຈັກກະພັດແຜ່ນແຜ້ວ ມີລູກຊາຍຫ້າຄົນລູກຍິງສອງຄົນ ອັນ
ຄົນທັງຫລາຍວາ ແມ່ຫຍິວເຈົ້າບາງໝື່ນໜ້າ ບາງ
ໝື່ນແພນນັ້ນແລ ບ້ານເມືອງແຕ່ນັ້ນຊາຍມຸ່ນກິນວຽງຈັນ
ແລະຈັກເອົາແຕ່ຕາດນ້ຳໄປໃຕ້ ທັງເມືອງກຣະບອງເປັນ ເມືອງ
ຂເມັນ ເສນາອຳມາດທັງຫລາຍວ່າບໍ່ຊອບ ຈຶ່ງແຕ່ງໃຫ້ເດັກ
ນ້ອຍ ແລະນາຍຫລວງທ້າສອງລ່ອງເອົາໄປຂ້າເສັຽທີ່ດອນຈັນ
ມັນມາຫລົ້ນນ້ຳຫລົ້ນໄກທັ້ນປລ ເຂົາຈຶ່ງເອົາມັນໄປເຜົາເສັຍ
ທີ່ນັ້ນ ຈຶ່ງສ້າງວັດຫລັງນຶ່ງໃສ່ຊື່ວ່າວັດໄຕທັ້ນແລ ອັນວ່າວັດ
ປະສັກນີ້ ພຣະມະຫາປາສມັນເຈົ້າ ແລະນັກປາດທັງ
ສາມ ເອົາຕຳນານແຕ່ເມືອງນະຄອນຫລວງພຸ້ນມາວ່າ ມະ
ຫາຣົວສີເຈົ້າຕັ້ງຫລັກໄມ້ຈັນ ທັງຫລັກແກ້ວ ໝາຍ
ບ້ານໝາຍເມືອງໄວ້ທີ່ນີ້ແລ ພຣະມະຫາປາສມັນເຈົ້າບອກ
ໃຫ້ຕັ້ງອາຣາມ ທັງພຣະພຸທຮູບເຈົ້າໄວ້ທີ່ນີ້ເຖິງ ພຣະເອົາ
ພຣະບາງເຈົ້າ ຂຶ້ນມາເຊົ່າທັ້ນ ໗ ວັນ ຈຶ່ງອອກມາວຽງ

ຄຳຫັ້ນແລ ເມື່ອສ້າງແລ້ວຈິງໃສ່ຊື່ວ່າວັດປະສັກຫັ້ນແລ ພຣະ
ຍາໄຊຍະຈັກກະພັດແຜ່ນແຜ້ວເຈົ້າຈິງພິຈາຣະນາດູ ຈິງໄດ້
ຫລານຜູ້ນຶ່ງ ມີອາຍຸໄດ້ ໑໕ ປີມັນຫາງອກແຕ່ຫນຸ່ມມີລູກຊາຍ
ສອງຊາຍຈິງໃຫ້ມາກິນເມືອງວຽງຈັນ ແຕ່ພຣະບ້ຳຮຸ່ງມາ
ເຫນືອເທົ້າເຂດເມືອງຊ້າຍແລ ຂວບດ່ານທັງມວນໄວ້ຍາຊ ບາ
ໃຫ້ແຕ່ງຫັ້ນແລ ເຂົາຈິງວ່າພຣະຍາຈັນຫາງອກແດງເຂົາວ່າ
ເຈົ້າຕົນນີ້ແລ ແຕ່ນັ້ນມາປີນຶ່ງຍັງມີພຣະຍາຕົນນຶ່ງຊື່ວ່າ ແກ່ນ
ທ້າວ ໄດ້ຊ້າງເຜືອກຕົວນຶ່ງມາຖວາຍແກ່ພຣະຍາໄຊຍະຈັກກະ
ພັດແຜ່ນແຜ້ວເຈົ້າຫັ້ນແລ ຊ້າງຕົວນັ້ນສູງໄດ້ ໗ ສອກຮູບໃສນ
ງາມນັກ ຈິງແປງໂຮງຫລັງນຶ່ງໄວ້ລຸ່ມພູເຂົາກ້າແຄບບ້ານຖານ
ຫັ້ນແລ ພໍ່ຫມໍຊ້າງຜູ້ນຶ່ງຈິງທວຍວ່າຊ້າງຕົວນີ້ຢູ່ເມືອງໃດໄດ້
ເຖິງ ໗ ປີເມືອງອັນນັ້ນກໍຈັກວາຍແລມັນທວຍສິ່ງນັ້ນຜູ້ທວຍນີ້
ແມ່ນພໍ່ຫມື່ນຊ້າງຄຳຮ່ອນອັນຜູ້ເປັນປູ່ຫມື່ນຖານຄອນແກ້ວ ວ່າ
ເປັນພຣະຍານະຄອນຄາງມຸນນັ້ນແລ ໄດ້ຊ້າງເຜືອກສານປີ
ຄວາມຊ່າເທົ້ານົວຫລວງຈິງໃຫ້ມາຂໍອົນເມືອດູ ພຣະຍາຊຽງລໍ

ເອົາຂີ້ຊ້າງເຜືອກໃຫ້ບົວຫລວງດູ ພຣະບາບົວຫລວງກໍຄຽດນາກ
ນັກ ຈິ່ງປ່າວພົນໄດ້ປີນຶ່ງປີລຸນນັ້ນມາທາງເມືອງຂວາສານ
ລ້ານໃຫ້ເສນາກ້າຂວາຊື່ວ່າຄຶກກຶງນາ ຜູ້ນຶ່ງຊື່ໄດຫນຶ່ງມີຄົນ ໕
ລ້ານ ຂັບຈັກຊົນຊ້າງເຜືອກເຈົ້າຊຽງລໍ ເສນາຜູ້ນຶ່ງຖືພົນມາ
ສາມລ້ານ ຊື່ວ່າກາງກຶງນາທາງເມືອງຊ້າຍເສນາຜູ້ນຶ່ງຊື່ວາຈຸ
ຖວາຍໄດວາງ ເປັນຫລານເຈົ້າບົວຂັນໆ ຊົນຊ້າງຫນຶ່ງຈັບ
ຕົວຊື່ວ່າພິມານຄໍາ ໃຫ້ເສນາຜູ້ນຶ່ງຊື່ວ່າກຶງການຖືພົນມາ ມີ
ລ້ານມາທາງພະບ້າຣຸງຊຽງສາໃຫ້ເສນາຜູ້ນຶ່ງຊື່ວ່າກຶງຜູ້ແສດຖືພົນ
ມາ ໓ ລ້ານມາທາງເມືອງກຣະບອງ ແກະຫລວງ ມາຕົກ
ແຜ່ນດິນເມືອງລ້ານຊ້າງປາງນັ້ນສອງຕື້ຫ້ານແລ ພຣະບາຊຽງ
ລໍຖືພົນສອງແສນ ໃຫ້ບໍ່ຣະສິງ ບໍ່ຣະບາຣາຍ ບໍ່ຣະເດດ ບໍ່ຣະ
ສາດ ໔ ຄົນ ເອົາພົນມີຄົນລ້ານສີ່ພັນ ພັນຫລວງສີ່ຫມື່ນ ໄປ
ອົບແຕ່ດົນພູນຸງເມືອງນາ ແກວຕາຍລ້ານນຶ່ງ ເຖິງຄໍ່າເອົາກໍ
ກຸມກັບລົງມາຈາກພູນຸງເມືອງ ນາບອບດົນພູນຸງເມືອງນາ
ບອບດິນພູກູ່ກັນ ໄດຫນຶ່ງກໍມາບອບທີ່ຫລັກຫມັ້ນ ພ່ຍານ

ທ່ຽງຄືນຜີແຖນມາເອີ້ນບອກແກ່ໄກ່ຫນຶງ ເປັນ ຄວາມ ແກວ ວ່າ
ທ່ານຈັກຕາຍວັນຫນ້າທີ່ກາງເມືອງຊະວາຫັ້ນ ແລ້ວເລົາມາ
ເອີ້ນບອກພຣະບາຊຽງລໍວ່າ ໃຫ້ດາພຣະບາໄຊເຈົ້າລ້ອງຫນີ
ກູ້ຂບ ພຣະບາຊຽງລໍກໍຈັກໄດ້ຊີກຊ້າງແກວວັນນັ້ນແລະບ້ານ
ເມືອງກໍຈັກວາຍວັນນັ້ນ ຜີແຖນມາ ເອີ້ນບອກວ່າສັ່ນນັ້ນ ຮຸ່ງ
ເຊົ້າແລ້ວ ກໍດາຊ້າງອັນຈັກຊີນຕ້ອນຫນ້າຊ້າງເຜືອກນັ້ນສີ
ຮ້ອຍຄົນສີຫມື່ນ ຫມື່ນຫລວງຫມື່ນບຸນຂີ່ຊ້າງອ້າຍດາຂາວ
ຖືພົງແປດກຫມື່ນ ຊ້າງຕົວຈັກຊີນດອນແປດຮ້ອຍອອກມາ
ທາງງ່ອນ ຫມື່ນກຫລວງ ລັດຫລັງໄດຫນຶງ ຊ້າງຕົວນັ້ນ
ງາກ້າຂວາຂີ້ນເປັນດັ່ງທີນສອກ ງາກ້ຳຊ້າຍລົງ ກົກງາໄດ້
ສີກໍາສູງ ດັ່ງກ້າລອກຂວາລູຂີ່ຊ້າງແດງຕົວວ່າໄຊບອນທອງ ຊຸນ
ຊ້າງຫັ້ນໄດ້ແປດຮ້ອຍ ຄົນແປດຫມື່ນຢູ່ທາງຜາ ເຜົ້າພົນຫລວງ
ທັງບວນຕັ້ງບາຣເຂົ້າຈ້າວກີອັນລ້າງວັດວີຊູນບັດນີ້ແລ ເຂົາເຈົ້າ
ທັງຫລາຍສີຊຸນ ຄືວານ່ຣະສິງເປັນຕົ້ນຖືພົນ ສີຫມື່ນໄປຕັ້ງນາ
ນຸງານ ອີນມາເຖິງນາໄຮ່ຍຸງວພຣະບາຊຽງລໍກໍອອກມາຕັ້ງນາໄຮ່
ຍຸງວຫັ້ນຫມື່ນຫລວງລັດ ຫລັງໄດຫນຶງກໍມາຮອດຫັ້ນ ຂວາລູກໍ

ມາຮອດຫັ້ນ ໄດຫນຶງຍັງຕັ້ງປຸ່ນາເຂົ້າຈ້າວໄປມາ ເຈົ້າຫມື່ນ
ຫລວງທັງຂວາລຸງພົນ ມີຊ້າງສອງພັນຄົນສອງແສນ ເຂົາເຈົ້າ
ທັງສີ່ຄົນບໍ່ຄຶດວ່າບໍ່ຣະສົງເປັນເງິນ ຣຸ ມຣົບແກວແຕ່ບານຕາວັນ
ທ່ຽງເທົ້າບານແລງ ແພ້ແກວະສີເທື່ອຄຸງໄດຫນຶງ ຫັ້ນແລຄົນສອງ
ແສນຊ້າງສອງພັນແກວຫ້າລ້ານ ຂ້າກໍບໍ່ແພ້ະເທງກໍບໍ່ແພ້ຊ້າງ
ພາຄວານແລ່ນຫນີໄປກິນນ້ຳ ແຜ່ນດິນບໍ່ໄດ້ຍ່ຳທໍ່ຍ່ຳແກວຕາຍ
ຫັນແລ ແຕ່ນັ້ນໄດຫນຶງເຂົ້າມາຊົນຊ້າງເຜືອກຂວາລຸວາງໄຊ
ບອນທອງໄສກ່ອນເບິ່ງບັວຫລວງ ມາຣູ ມລານຕົວໄຊບອນທອງ
ເອົາຫມໍດທັງສາມຜູ້ນຶ່ງຊື່ວ່າດຶກອງມາກ້າຊ້າຍໄດຫນຶງຊົນຊ້າງ
ມັນສີ່ຕົວ ຫມື່ນບຸນວາງອ້າຍຕາຂາວ ໄສ່ທ້າະທັງສີ່ແກວກໍຕາຍ
ທັງສີ່ ຫນ່ວຍກ້າຂວາໄດຫນຶງຊື່ວ່າຫລຶກພາ ຊົນຊ້າງມັນມີຫັກ
ຕົະວາງມາກ່ອນໄດຫນຶງ ຂ້ອຍພຣະບາຊຽງລໍຜູ້ນຶ່ງຊື່ນາຍ
ຫລວງເທບືອ ມັນຂີຊ້າງດົະນຶ່ງຊື່ວ່າອ້າຍ ຫມາກຫຍ້າມັນຊົນ
ຫລຶກພາ ຂາທັງສອງຣຸນຊົນຊ້າງຫັກຕົວມັນທ່າວໄປ ອິງທັງ
ຫັກກໍຕາຍໄປຂາທັງສອງກໍຕາຍ ຊ້າງອ້າຍຫມາກຫຍ້າໄຊ

ບ໊ະມທອງລອຍນ້ຳຂອງໜີ ຜູ່ວ່ານາຍຫລວງເໜືອນັ້ນ ແມ່ນປູ່
ເຈົ້າພຸມເໜືອ ອັນວ່າທ້າວແຈ້ງພໍ່ທ້າວບຸນສານອັນເປັນພຣະ
ບາະເສນນັ້ນແລ ແຕ່ນັ້ນພີນກ້ຳລາວເຮົາກໍນິກບາງໄປທັ້ນແລ,

ແຕ່ນັ້ນ ໄດໜີງກເອົາພີ້ນທັງມວນເຂົ້ານາຊິນພຣະບາ
ຊ້າງເຜືອກພຣະບາຊຽງລໍທັງໜີ້ນ ຫລວງກມື້ນບຸນຊີ ໄດໜີງ
ທີ່ນາໄຮ່ດຽວທັ ຊ້າງເຜືອກ ເອົາຊ້າງໄດໜີງທ່າວລົງມ ນໍກໍ
ຕາຍໄປທັນແລ ຊ້າງເຮົາທັງສອງພັນນັ້ນລາງຕົວກໍຕາຍລາງ
ຕົວ ກໍລະບຂ້າມນ້ຳຄານໜີ ລາງຕົວກໍຂ້າມນ້ຳຂອງໜີໄປໜີ້ນ
ຫລວງໜື້ນບຸນເອົາທັງຫລາຍກວນຣິເຊີເກັ ທັ້ນທານກໍລາຍ
ຂຸນກັງສີ ໄບຕົ້ງວ່າ ບໍ່ຂະງີງບໍ່ຣະນາຣານ ບໍ່ຣະເວດ ນໍ
ຣະລາດເຂົ້າເຈົ້າທັງຫລາຍນັ້ນ ແກວກໍກຸມເອົາໄດ້ທັງເປັນມາ
ສຽບຫລັກເສັງ ທີ່ນາະຂ້າຈ້າວເກີ້ສ້າງວັດທີ່ະຂອງທັ້ນແລຕົວພຣະ
ບາຊຽງລໍກໍເຈັບກໍປ່ວຍຈິ່ງຂີ່ຊ້າງເຜືອກໜີ ມາຮອດໂຮງຊຽງ
ທອງຈິ່ງລົງຊ້າງໄປເຂົ້າເຮືອເຫລັ້ມນຶ່ງຊື່ວ່າເພເລົາກາ ເຮືອລອດ
ຈົມທີ່ທ່າວຽງທອງທັ້ນເຈົ້າກໍລາຍທັນແລ ແກວມາເມືອງລາວ

ປາງນັ້ນມີຊ້າງຫ້າຮ້ອຍນາຍຫລວງເຂົ້າອັນເປັນເຈົ້າ ຊ້າງຫ້າ
ຮ້ອຍກໍ ທັງໂກາກນຶ່ງກໍຕາຍຫມົດມື້ດຽວ ອັນພຣະບາລຊຽງລໄດ້
ຊິບເກີນາໂຣດຽ ຫັ້ນ ແລ ເຂົາກໍວາງຊ້າງວາງມ້າວາງເຄື່ອງ ຄໍາ
ເສັງຫມົດ ຍັງມີຜູ້ນຶ່ງລູກໍໂກພາຮີ້ວາອົງລາງ ຍາຣີພາ ທັງ
ຫລາຍປູ່ສາມວັນຈິ່ງທັນ ເມື່ອໂຣມດູພົບທີ່ເມືອງລານໄດ້ລານ
ສອງແສນຫັ້ນແລ ເຂົາຈິ່ງເມື່ອຢູ່ຝາກນໍ້າມ່າ ອັນເຂົາໂຣມພົບ
ເອົາກ້ອນຫີນມາກອງໄວ້ນັ້ນ ເມື່ອເຈົ້າຂຸນເມື່ອເມືອງເຂົາເອົາ
ກ້ອນຫີນນັ້ນແລຕົນແລກ້ອນຄອນໄດ້ຄົບຫ້າລ້ານເຈັ້ງຄົນນັ້ນປາຍ
ຫ້າລ້ານ ນາຍໄທຍມາປາງນັ້ນສີແນ່ນ ຍັງມີແຫກຮ້ອຍເສັງ
ສາມພັນປາຍສີ່ຮ້ອຍ ບອເປັນໄດ້ຍູ່ໄທຍທັງນະນ ບອນເປັນ
ລູກເປັນຫລານ ເປັນເຊື້ອແນວເຈົ້າບົວຫລວງຊູການ ຫັ້ນແລ ເຈົ້າ
ບົວຫລວງຈິ່ງຖຽງຄຈິ່ງຕັ້ງອາຊຍາວ່າ ຕັ້ງແກ່ນີ້ໄພປາຊວນກັນ
ເມືອເມືອງລ້ານຊ້າງກ້ອນ ເມື່ອງເອນັບບັນທາກເປັນເມືອງພີ່
ເມືອງນ້ອງກັນແກ່ຊື່ ຊູບບໍຣົມຣາຊາທິຣາດ ທາກໄດ້ກິນໄດ້ແຊ່ງ
ໄວ້ ເຮາຈິ່ງດັບຈິ່ງວາຍເພື່ອສິ່ງນັ້ນແລ ຈິ່ງປ່າວຄົນໃນວຽງທັ້ງ

ສັກຣອບຕີນລາວທີ່ຂ່ມ່ອນຊູ້ຄົນຊາວນອກວຽງສັກໜ້າ ແລທັງ
ຣອບຕີນໄວ້ຫັນແລ ຢ່າໃຫ້ໃຜຊວນກັນເມືອເມືອງລ້ານຊ້າງສັກ
ເທື່ອ ໃຜຍັງມາຊວນດູບ້ານເມືອງກໍທີ່ຫນ້າຜາກຫັ້ນເຖິງ ເຈົ້າບົວ
ຫລວງຕັ້ງອາຊຍາໄວ້ດັ່ງນີ້ ແຕ່ແຄມນ້ຳແຫເມືອພຸ່ນ ໄວ້ເປັນ
ເມືອງລ້ານຊ້າງເກົ່າບູຮານ ເຂດກໍ່ໄດ້ເອົາແກ່ເມືອງນີ້ຮ້ານ
ກວ້ານນ້ຳເສົາ ແຕ່ຫີນສຸມເສົານ້ຳເຕົ້າແກ້ວ ໄວ້ເປັນເຂດເມືອງ
ລ້ານຊ້າງຕາມບູຮານປາງກ່ອນຖ້ອນ

ບັດນີ້ ເມືອຫນ້າຈັກຈາທີ່ເມືອງລາວມາຕັ້ງລຸນແກວກ່ອນ
ແລ ມະຫາສາມີເຈົ້າວັດແກ້ວ ຕິນຊື່ວ່າຍານສມຸດກັບທັງພຣະ
ຫົມມະເສນາເຈົ້າ ແລະເຈົ້າຫຍົວຮ້ອຍປາຍຕີນ ປູ່ວັດແກ້ວທັງ
ວັດປາສນັບ ປູ່ວັດສວນແຄງສີເກີດທັງວັດ ໃບດກາງເມືອງຫ້າ
ວັດນີ້ເບົາທີ່ນແກວກໍເບົາເຮັດສັງນໍ່ລາວຜູ່ເຖົ້າຜູ່ປ່ງະຝູງນີ້ ເບົາ
ຫີນກໍປູ່ດອນແກວກໍເບົາເຮົາ ສັງແກວຝູງເຈັບຝູງປ່ອຍນັບພຣະ
ກໍເອົາມາປົວດີແລ້ວກໍຫນີ ຜູ່ນັກຫນີເຂົາກໍຫນີຜູ່ນັກຢູ່ເຂົາກໍ
ຢູ່ແກວຈິ່ງມີໃນເມືອງລາວດາບຕໍ່ເທົ້າບັດນີ້ແລ ພຣະມະຫາ

ສາມີເຈົ້າວັດແກ້ວຈິ່ງໃຫ້ພຣະທັມມະເສນາເຈົ້າ ກັບຊາວ
ເຈົ້າສາມສິບວັນ ທັງຄົນຝູງຢູ່ດອມນັ້ນ ລ່ອງມາຣາທນາພຣະ
ຍາໄຊຍະຈັກກະພັດ ແຜ່ນແຜ້ວມາສເວີຽຣາດເປັນພຣະບາດັງ
ເກົ້າເກີງສາມທີ່ເຈົ້າກໍບໍ່ມາຈິ່ງໄປ ຣາທນາພຣະຍາຫລ້າແສນ
ໄຕວັນກັບເມືອງແກນນັ້ນມາເປັນເຈົ້າເ ຜ່ນວັນ ເຈົ້າກໍມາຕາມນີ
ຣະມົນ ພຣະມະຫາສາມີເຈົ້າແລະພຣະສັງເຈົ້າທັງຫລາຍທັງ
ຕາມຄວາມພໍ່ດົນນັ້ນແລ ຄັນວ່າຣອດຊຽງດົງຊຽງທອງແລ້ວພຣະ
ມະຫາສາມີເຈົ້າທັງພຣະຍາໄຊຍະຈັກກະພັດແຜ່ນແຜ້ວຈິ່ງໃຫ້
ໄປຣາທນາເຈົ້າວິຊູລກຸມານດົນໄປກັບເມືອງທາຣາພັນໜຍງ ກ້ວງງ
ຄຳນັ້ນມາເປັນແສນເມືອງ ເຈົ້າດົນນັ້ນມີຊ້າງຕົວນຶ່ງເປັນ ມຸງຄຸນ
ນັກຊື່ວ່າຊ້າງບາບງາອ້າເຈົ້າກໍ ຂີ່ມາທາງບົກຣອດວຽງຄຳນັ້ນ
ຈິ່ງມາຕັ້ງຄໍາປາຖນາຕໍ່ພຣະບາງເຈົ້ານັ້ນ ວ່າພາຍໜ້າຜູ້ຂ້າ
ທາກບັງເມືອຣອດຊຽງດົງຊຽງທອງ ແລະບັງແລ້ວຄຳນັກຄໍາ
ປາຖນາ ຂ້າຈັກແປງວິຫານຫລັງນຶ່ງລວງກ້ວາງ ໑໐ ວາລວງ
ຍາວ ໒໐ ວາ ຈັກຣາທນາສັບພັນຍູເຈົ້າເມືອໃຜດອັນນຶ່ງຂ້ອຍກໍ

ນິມົນໄວ້ນີ້ແລ້ວແຕ່ນັ້ນເຈົ້າກໍຂຶ້ນມາທາງ ບໍກຣອກເມືອງຊະວາ
ຫັ້ນແລ ພຣະມະຫາສາມີເຈົ້າວັນພີວັນນ້ອງ ທັງພຣະເຈົ້າຕົນ
ຫລ້າແລະຂຶ້ນເມືອງເຈົ້າທັງຫລາຍຈຶ່ງບໍ່ໃຫ້ເປັນແສນໃຫ້ໄປຢູ່ຊຽງ
ລໍຫັ້ນແລ ພຣະເຈົ້າວັນຫລ້າມາເປັນເຈົ້າຊຽງດົງຊຽງທອງປີນຶ່ງ
ພຣະຍາໄຊຍະຈັກກະພັດແຜ່ນແຜ້ວຈຶ່ງຕາຍທີ່ຊຽງຄານຫັ້ນຈຶ່ງ
ແປງຫີບເງິນໃສ່ໄວ້ ຈຶ່ງໃຊ້ໄປເລົ່າແກ່ພຣະຍາສີໂຍທິຍາ ປາງ
ນັ້ນພຣະຍາສີໂຍທິຍາເຈົ້າເມືອງສີໂຍທິຍາຈຶ່ງແຕ່ງໂລງຄຳລູກ
ນຶ່ງ ໂລງໄມ້ຈັນລູກນຶ່ງແຜ່ນແຜ້ຫ້າຮ້ອຍໃຫ້ຂຸນສີຣາຊໂກສາມາ
ສົງສະການ ພຣະຍາໄຊຍະຈັກກະພັດແຜ່ນແຜ້ວມີອາຍຸໄດ້ ຊຸມ
ປີຈຶ່ງຕາຍ ຈຶ່ງເຜົາເສັຽທີ່ຊຽງຄານ ຈຶ່ງສ້າງທາດສົບກະດູກຫລັງ
ນຶ່ງທີ່ຊຽງຄານຫັ້ນ ຂຸນສີຣາຊໂກສາຈຶ່ງຄືນເມືອຄອບພຣະຍາ
ສີໂຍທິຍາ ປີລຸນນັ້ນພຣະຍາສີໂຍທິຍາ ຈຶ່ງແຕ່ງເຄື່ອງ
ຣາຊາພິເສກ ໃຫ້ຂຸນອິນຂຸນສີຣາຊໂກສາເອົາເຄື່ອງທັງມວນ
ຂຶ້ນມາ ພ້ອມກັບມະຫາສາມີເຈົ້າທັງສອງ ແລະຂຶ້ນເມືອງ
ເຈົ້າທັງຫລາຍ ຈຶ່ງອຸສາພິເສກເຈົ້າວັນຫລ້າ ໃຫ້ເປັນເຈົ້າ
ແຜ່ນດິນ ເຈົ້າວິຊຸລຸນາມໃຫ້ເປັນແສນເມືອງຫັ້ນແລ ເມືອງ

ໂບທິຍາ ເມືອງລ້ານຊ້າງກໍເປັນອັນນຶ່ງອັນດຽວກັນ ແຕ່ນັ້ນມາ ພຣະຍາເຈົ້າວິບຫລ້າຈຶ່ງມີປະຕິຍານວ່າເມື່ອໃດພີ່ເຮົາເຈົ້າໂບທິຍາ ຍັງໄດ້ໄດ່ເອົາໃຫ້ໄປທີ່ແດນເມືອງຫັ້ນ ກ້າພຸ້ນມາໃຫ້ເຈົ້າທີ່ຊະງາປີແລະຫ້ວຍປະຫວັດຫັ້ນກ່ອນ ກ້ານີ້ໄປຈັກໃຫ້ເຈົ້າທີ່ທາງນອງບົວຫັ້ນກ່ອນ ແບບຈັກເປັນຄຳຊື່ຄຳຂາຍກໍດີ ຈຶ່ງໃຫ້ມາຕ້ານມາຈາກັນທີ່ແດນເມືອງຫັ້ນ ຈຶ່ງໃສ່ຊື່ວາເນາສອງຮັກເນື້ອສິງຫັ້ນແລ ພຣະຍາຫລ້າແສນໄຕເຈົ້າ ເປັນເຈົ້າແຜ່ນດິນ ສັກຣາດໄດ້ ໘໕ ປີ ຕົວປີຮ້ອງເປົ້າ ເດືອນຫ້າ ຂຶ້ນສິບສາມຄ່ຳ ວັນຈັນ ຍາມກອງງາຍແລ ເຈົ້າສເວີຍຣາຊໄດ້ປີນຶ່ງມຫາຈານີເຈົ້າດົນພີ້ ຕົນ້ອງກວາຍຫັ້ນແລ ເຈົ້າແຜ່ນດິນກໍເມີກຊາກ ງງ ຣະການແລ້ວ ຈຶ່ງອາທບານມະເດຣເຈົ້າຄົນພີຣະເປັນມະຫາລານີເຈົ້າດົນພີຢູ່ວັດແກ້ວ ເລົາຍມະຫາເດຣະເຈົ້າສົ້ດທັມມະວົງງາໃຫ້ ເປັນເຈົ້າວັດປາລມັບເລົ່າຍມະຫາເດຣະເຈົ້າເທພຫລວງເປັນທັມມະເສນາໃຫ້ຢູ່ວັດມະໂນຣົມ ພຣະເຈົ້າ... ໃຫ້ອາຊຍາແກ່ພຣະເຈົ້າພີ່ນ້ອງທັງສາມ ເປັນ

ອັນສີເອັນຄົນ ດັ່ງວ່າບໍ່ດົນກໍດີບໍ່ດອາຊຍາທ້າວພຣະ

ຍາປູງອື່ນກໍດີ ເປັນໃຈາຈຸດເລົ້າເຜົາບ້ານກໍດີ ຂ້າເຈົ້າເອົາ

ຂອງກໍດີຫລົບກັບເມືອງທ່ານແລລັກຣາຊສົມບັດກໍດີ ໃຫດທັງຫລາງ

ປູງນີ້ດັ່ງເຂົາໄດ້ເອົ້າເຂດພຣະເຈົ້າພີ່ນ້ອງຕົນໃດຕົນນຶ່ງກໍດີ ກໍ

ບໍ່ໃຫ້ຜູກໃຫ້ຂ້າໃຫ້ເສັງຊີວິດແລ ທໍ່ໃຫ້ບອກໃຫ້ສອນເຂົາເມືອ

ຫາວຽກຫາການດັ່ງເກົ່າ ສັດທັງຫລາຍປາງນັ້ນມີສຸກບາກນັກ

ແລ ນັບແຕ່ພຣະເຈົ້າຕົນຫລ້າສເວີງຣາຊໄດ້ ໔໐ ປີນັ້ນແກ່ເຈົ້າ

ເກີດມາໄດ້ ໗໔ ປີເຈົ້າຈິ່ງໄດ້ນິບພານຫັ້ນແລ ຈິ່ງບາງແທ່ນ

ຜູ້ເປັນເມືອງເຈົ້າພີ່ນ້ອງທັງສາມ ແລະເຈົ້າວິຊູລອັນເປັນແສນ

ເມືອງ ຈິ່ງນາສີງສະການເຜົາເສັງທີ່ງອນເທົ້າໂຮງຊຽງກາງ

ຫັ້ນແລ ຈິ່ງສ້າງວັດສົບກະດູກລຸກນຶ່ງ ຈິ່ງໃສ່ຊື່ວ່າບຸບພະອາ

ຣາມອັນເຂົາວ່າວັດບວນພານ (ບົວຣະພາ) ນັ້ນແລຈິ່ງຣາທນາ

ມະຫາເຖຣະເຈົ້າຕົນນຶ່ງຊື່ວ່າສຸເມທາ ມາເປັນເຈົ້າວັດຫັ້ນແລ

ໃສ່ຊື່ວ່າສັງຄະເສນາທັງເອົາທ່ານອາຈານນ້ອຍມາປູ່ຫັ້ນແດງໃຫ້

ສອນທັມມະຈິ່ງໃຫ້ເອົ້າປີທັກແສນກີບເດືອນທັກຮ້ອຍຫມາກເກືອຂີງ

ຫຽນ ຫມ້ຽງໃຫ້ທານຊູ່ເດືອນທ່ານນັ້ນມີພຍາຈິບໄດຣເພຫທັງ
ສາມະຫັ້ນແລ ທັງຫລາຍທຳບຸນສິງທານໄປຫາພຣະເຈົ້າຕິນ
ຫລ້ານໍຣະບະນແລ້ວທັງຫລາຍ ຈຶ່ງເອົາລູກເຈົ້າຕິນຫລ້າ
ຜູ້ນຶ່ງ ຊື່ວ່າພຣະເຈົ້າຊຸມພູເຈົ້ານັ້ນ ມີອາຍຸໄດ້ ໑໕ ເສັ້ງ
ດາກ້ານຶ່ງ ເຈົ້ານັ້ນມີຮູບໂສມອັນງາມນັກແລ ເຈົ້າ
ສເວິງຣາດແຫນພໍ່ໄດ້ ມີ ປີລວດຕາຍ ຈຶ່ງເອົາມາເຜົາເສັ້ງ
ທີ່ຫນ້າວັດນວມພານຫັ້ນແລ ຈຶ່ງໃຫ້ພໍ່ລ້ຽງຜູ້ນຶ່ງຊື່ວ່າຫມື່ນ
ນາສ້າງເຈດີລູກນຶ່ງທີ່ເຜົາຫັ້ນ ຈຶ່ງໃສ່ຊື່ວ່າເຈດີຫມື່ນນາ ເພື່ອ
ດັ່ງນັ້ນແລ ດູກພຣະຍາຊຸມພູເຈົ້າຈອນນາງແຫ່ນຜູ້ເປັນແມ່ເອົາ
ໄປໃສ່ອູບຄຳສອງລູກ ມາໃສ່ວັດສິບທີ່ຫ້ວຍຫລວງຫັ້ນ ຈຶ່ງໃຫ້
ກອງຂ້ອຍສອງຮ້ອຍໃຫ້ເຂົ້າຮັກສາຈຶ່ງໃສ່ຊື່ວ່າວັດສິບພຣະຍາ
ປາກທັງພຣະຍາຊຸມພູຫັ້ນແລ ອູບຄຳລູກນຶ່ງເອົາໄປສ້າງວັດ
ປາກຊາຍດອນກອງຂ້ອຍຫັ້ນ ໃຫ້ເຂົ້າຮັກສາກະດູກພຣະຊຸມ
ພູຫັ້ນແລ ຢູ່ໄດ້ ໔ ເດືອນລູກນຶ່ງພຣະເຈົ້າຕິນຫລ້າຜູ້ນຶ່ງຊື່ວ່າ
ນາງສີໃວ ກໍຕາຍເອົາໄປເຜົາເສັ້ງທີ່ໃຕ້ວັດມະໂນຣົມຫັ້ນ ຈຶ່ງ

ສ້າງວັດສິບກະດູກຈິ່ງໃສ່ຊື່ວ່າວັດຊຽງກາງ ຈິ່ງໃຫ້ເມືອງອັນນຶ່ງຊື່ວ່າ ເມືອງບາງປູ່ດີບເມືອງສຸຍທັ້ງໃຫ້ນາສີພຽກ ທັ້ງໃຫ້ທ່ານເສດຖີສິບກັບຫມູ່ ຊຸມທັງມວນໃຫ້ຄ້ຳຄິງວັດຊຽງກາງຫັ້ນ ນານມາໄດ້ປີນຶ່ງ ຈິວແທ່ນແມ່ພຣະຍາເຈົ້າຕົນຫລ້າແລມະຫາສາມີເຈົ້າເປັນປະທານແລ ພຣະສົງຄະເຈົ້າທັງຫລາຍ ກັບເສນາທັງມວນແລ ຊາວເມືອງພ້ອມກັນຈິ່ງມາຍໍເຈົ້າວິຊຸລຣາດອັນເປັນແສນເມືອງນັ້ນ ມາເປັນເຈົ້າແຜ່ນດິນແທນພີ່ຕົນຫັ້ນແລ ຄັນວ່າເຈົ້າວິຊູລຣາຊາໄດ້ເປັນເຈົ້າແຜ່ນດິນໄດ້ສາມປີ ຍັງມີນາງຜູ້ນຶ່ງຢູ່ລຸ່ມວັດສີເກີດຫັ້ນແມ່ນາງນັ້ນເປັນຊາວສີເກີດ ພຣະເຈົ້າຊຽງລໍເອົາມາເປັນເມັຽຈິ່ງມີນາງນັ້ນໆ ໃຫຍ່ມາ ພຣະວິຊຸລຣາຊາໄປພັງທັມວັດສີເກີດແລເຫັນ ຈິ່ງຖາມເຊື້ອຖາມໂຄດດູວ່າແມ່ນເປັນລູກພຣະເຈົ້າຊຽງລໍ ຈິ່ງເອົາເບື້ອເປັນເມັຽ ຈິ່ງໃສ່ຊື່ວ່າຈິວນາງພັນຕົນຊຽງຫັ້ນແລ ເມັຽເຖົ້ານັ້ນທັງຫລາຍປູກສ້າງໃຫ້ ເປັນນິວແທ່ນເມັຽພຣະວິຊຸລຣາດເຈົ້າມີສອງຄົນນີ້ແລ ພຣະວິຊຸລຣາດເສວີຍເມືອງໄດ້ ໗ ປີມີລູກຍິງນຶ່ງດອມນາງພັນຕົນຊຽງ ໃຫຍ່ມາໄດ້

ສາມປີແລດາຍເອົາໄປເຜົາເສັ້ງລຸ່ມວັດແມ່ກາຫັ້ນ ຈຶ່ງສ້າງວັດ
ສິບກະດຸກຫລັງນຶ່ງຈຶ່ງໃສ່ຊື່ວ່າວັດອະໂສດ ປູ່ປີລຸນຈີວແຫ່ນອັນ
ເປັນເມັ່ງເຄົ້າມັ້ນເລົ່າດາຍ ເອົາໄປເຜົາເສັ້ງທີ່ງ່ອນລີນແສນເສົ້າ
ຫັ້ນຈຶ່ງສ້າງເຈດີລູກນຶ່ງທີ່ເຜົາ ຫັ້ນແລ ແຕ່ນັ້ນຢູ່ໄດ້ສາມປີຈົວ
ນາງພັນຕືນຊຽງຈຶ່ງຝັນເຫັນໄມ້ຮັ້ງຕົ້ນນຶ່ງໃຫຍ່ນັກ ມີງ່າມີໃບ
ນົດ ກງານນຶ່ງລື່ນຮຸ່ງເຮືອງຈຶ່ງເລົ່າແກ່ພຣະວິຊຸລຣາດງ ເຈົ້າ
ຈຶ່ງໃຫ້ມາຫາອາຈານນ້ອຍທັມມະຈຸນລາ ອາຈານສາຣະພັງ
ມາ ຂາເຈົ້າທັງສາມນີ້ ຫາກເປັນເຊື້ອເປັ ຊາດກັບແດ່ນະຄອນ
ຫລວງພຸ້ນມາຈຶ່ງທວຍວ່າເຈົ້າກຸຈັກມີລູກຊາຍຜູ້ປະເສີດ ອັນ
ເປັນທີ່ເພິ່ງແກ່ຄົນທັງຫລາຍແລ ຢູ່ໄດ້ ກ ວັນນາງກໍທຣົງຄັນ
ເຖິງ ໑໐ ເດືອນ ຈຶ່ງປະສູດອອກມາກໍເປັນຜູ້ຊາຍແທ້ແລ ອອກປີ
ຣວຍຍີ ພຣະວິຊຸລຣາດຍິນດີດອມລູກຊາຍຍິ່ງນັກ ອັນນີ້ກໍຫາກ
ໄດ້ດັ່ງຄຳປາຖນາກູ ຍາມເມື່ອຈາກວຽງຄຳມາ ເປັນແສນເມືອງ
ນັ້ນແລ ໄດ້ປາຖນາດອມພຣະບາງເຈົ້າ ບັດນີ້ຄຳປາຖນາກໍໄດ້
ດັ່ງຄຳນັ້ນກັ້ນແລ ບັດນີ້ກຈັກສ້າງເຈດີອັນໃຫຍ່ນຶ່ງທັງວິຫານ

ຫລັງໃຫຍ່ນຶ່ງ ແລເອົາພຣະບາງເຈົ້າມາໄວ້ໃຫ້ບູຊາເຖິງຈິງ
ຣາເກບາພຣະມະຫາສາມີເຈົ້າວັດແກ້ວແລ ອາຈານທັງສາມ
ແລຂຶນເມືອງທັງຫລາຍມາຕ້ານຖາມດູຫືອບໍ່ຈັກຕັ້ງເຈດີວິຫານ
ໃຫ້ເປັນ (ມະຫາ) ສຖານພຣະມະຫາສາມີເຈົ້າວັດແກ້ວແລ
ອາຈານທັງສາມ ເອົາຕຳນານອັນພຣະມະຫາປາສມັນເຈົ້າເອົາ
ແຕ່ເມືອງນະຄອນຫລວງມານັ້ນ ອ່ານດູຕຳນານຈຶ່ງອອກວ່າຍັງ
ມີທີ່ນຶ່ງ ວ່ານາເຂົ້າຈ້າວທີ່ຫີນກ້ອນນຶ່ງກວ້າງໄດ້ ໑໙ ສອກຍາວ
ໄດ້ ໑໒ ສອກ ຢູ່ໃຕ້ສົບຫ້ວຍຊ້າງປ້ານ ທົວນາເຂົ້າຈ້າວ ລຸ່ມພູ
ເຂົາກ້າທັ້ນແລ ພຣະພຸທເຈົ້າທຳນາຍໄວ້ວ່າຫີນຫນ່ວຍກູນັ້ງ
ນີ້ຈັກມີພຣະບາດນຶ່ງ ປູ່ຊອບໂລກຊອບທັມຈັກມາຕັ້ງສາສນາ
ທີ່ນີ້ແລຕຳນານວ່າສິ່ງນັ້ນ ພຣະວິຊຸລຣາດເຈົ້າກັບບາງເທວີກໍ
ຍິນດີມີໃຈພິລົມນາກນັກ ຈຶ່ງຕົກແຕ່ງໃຫ້ເສນາທັງຫລາຍເປັນ
ຕົ້ນວ່າຫມື່ນຫລວງແລເຈົ້າຊ້າຍເຈົ້າຂວາ ພູມໃຕ້ພຸມເຫນືອ
ຫມື່ນແກ ໃຫ້ຫາໄມ້ອັນຈັກແປງວິຫານຕີນແທ່ນດີນຊຽງສີພັນ
ຈ່າເຮືອນຂຸນພອງ ຂຸນຫໍ ກອງຂ້ອຍທັງຫລາຍ ໃຫ້ຫາດີນກີອັນ

ຈັກຕັ້ງເຈດີກວມກ້ອນຫີນອັນອອກໃນຕຳນານນັ້ນວ່າ ພຣະພຸທ
ທະເຈົ້ານັ້ງນັ້ນ ມະຫາເທວີຄ້ຳສ້າງເຈດີ ພຣະວິຊູລຣາດເຈົ້າ
ສ້າງວິຫານຫລວງ ກໍ່ເຈດີທັງສ້າງວິຫານຫລວງນັ້ນປີເຕົ່າສັນ
ເດືອນສາມອອກສອງຄ່ຳວັນເສົາ ສາມປີປາຍເຈັດເດືອນຈິ່ງ
ແລ້ວຣຸບພຣະພຸທເຈົ້າທັງເຈດີຫລະ ງລວງລູງ ໒ມີ ວາຈິ່ງໃຫ້
ບ້ານເມືອງໄຮ່ນາ ແດທາງຫລວງທິວຂອງແຈກຳໄຕ້ ເມືອ
ຮອດເທົ້າຮອດຮ່ອງລິນແສນເສົ້າ ເລາະດອນຫວັຍຫັນເລາະນັ້ນ
ມາຕິກນ້ຳມາວລ່ອງມາຕິກສິບມາວ ລ່ອງນ້ຳຄານມາເທົ້າທ່າ
ຄວານຂຶ້ນໄປດອນທາງຫລະງຮອດຮ່ອງລິນ ຯ

ແຕ່ນີ້ໄປພາຍໜ້າ ພຣະວິຊູລຣາຊເຈົ້າແຕ່ງປຸນບ້ານ
ເມືອງໃຫ້ແກ່ເຜົ່າພັນທັງຫລາຍ ກິນບ້ານກິນເມືອງຕາມຄຸນອັນ
ເຂົານີກັບຕົວ ເຂົາຜູ້ມີຄຸນຫລາຍກໍ່ໃຫ້ກິນຫລາຍ ຜູ້ມີຄຸນໜ້ອຍ
ກໍ່ໃຫ້ກິນໜ້ອຍ ຜູ້ຮູ້ຄຸນອັນໃດໃຫ້ກິນຍ້ອນຄຸນອັນນັ້ນ ບໍ່ຫ່ອນ
ໃຫ້ເສນາມຸນຕີເອົາເງິນຊື້ບ້ານຊື້ເມືອງກິນດອມເຈົ້າຊີວິດສັກເທື່ອ
ບໍ່ໃດທາກມາແຕ່ງເບັ້ງເງິນໄທວ້ສາເຈົ້າແຜ່ນດິນ ກິນບ້ານກິນ
ເມືອງ ເລົ່າໃຫ້ໄສ່ໃພດແກ່ມັນຜູ້ໄທວັນນັ້ນດີຫລີດາຍ.

(The last two pages are missing)

(The last two pages are missing)